**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ກອງທຶນປົກປັກຮັກສາສິ່ງແວດລ້ອມ

# ບົດສະຫລຸບ
# ຜົນການເຄື່ອນໄຫວວຽກງານປະຈໍາປີ 2020
# ແລະ ແຜນການ ເຄື່ອນໄຫວ ປີ 2021
# ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ

30 ທັນວາ 2020

# ຄຳນຳ

ກອງທຶນປົກປັກຮັກສາສິ່ງແວດລ້ອມ ໄດ້ສຳເລັດການຈັດຕັ້ງປະຕິບັດແຜນການ ປີ 2020 ໂດຍບັນລຸຄາດໝາຍສູ້ຊົນເປັນສ່ວນໃຫຍ່ ເຊັ່ນ: ການສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງ ໃຫ້ ກປສ ກ້າວໄປສູ່ "ໜຶ່ງ ກປສ ໜຶ່ງລະບົບ", ຍົກຂີດຄວາມສາມາດ ຕາມ 8 ດັດສະນີຄວາມສາມາດ ກປສ, ສ້າງຄວາມພ້ອມດ້ານພະນັກງານ; ສຸມໃສ່ການລະດົມທຶນ, ການສະໜອງທຶນ ແລະ ເປີດກວ້າງການຮ່ວມມື, ການເຊື່ອມໂຍງ ແລະ ການຫັນເປັນຄູ່ຮ່ວມງານກັບຂະແໜງການທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ທັງພາຍໃນ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ. ກປສ ໄດ້ປະຕິບັດໜ້າທີ່ ຢ່າງຕັ້ງໜ້າ ຕາມພາລະບົດບາດ ຄື: ໄດ້ລະດົມທຶນ ແລະ ສະໜອງທຶນໃຫ້ ພາກສ່ວນຕ່າງໆໃນການຈັດຕັ້ງປະຕິບັດວຽກງານ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ຊຶ່ງມີຈຳນວນ 90 ໂຄງການ, ໃນນີ້ ສະໜອງທຶນໃຫ້ 38 ໂຄງການ ພາຍໃຕ້ຮ່ວງທຶນ ຄສລ 2 ຈາກທະນາຄານໂລກ ແລະ 52 ໂຄງການ ທີ່ໄດ້ນຳໃຊ້ທຶນພາຍໃນ ຈາກ ກປສ ພ້ອມທັງຊຸກຍູ້ຕິດຕາມ ໃຫ້ໂຄງການທີ່ໄດ້ຮັບທຶນດັ່ງກ່າວຈັດຕັ້ງປະຕິບັດໄປຕາມແຜນການ ແລະ ລະບຽບຫຼັກການ. ບັນດາໂຄງການດັ່ງກ່າວ ໄດ້ປະກອບສ່ວນເຂົ້າໃນການປົກປັກຮັກສາສິ່ງແວດລ້ອມ ເປັນຕົ້ນສ້າງຄວາມເຂັ້ມແຂງໃຫ້ທ້ອງຖິ່ນ ແລະ ແກ້ໄຂບັນຫາສິ່ງແວດລ້ອມເຊັ່ນ: ສ້າງສະໜາມຂີ້ເຫຍື້ອ ໃນຂອບເຂດທົ່ວປະເທດ, ການຄຸ້ມຄອງສິ່ງເສດເຫຼືອ, ການແກ້ໄຂຜົນກະທົບໄຟໄໝ້ປ່າ, ການຄຸ້ມຄອງສານເຄມີ, ການຄຸ້ມຄອງປ່າສະຫງວນ, ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນອ້ອມຂ້າງປ່າສະຫງວນ ແລະ ອານຸລັກຊີວະນາໆພັນ, ປົກປັກຮັກສາງອ່າງຮັບນ້ຳ, ຈັດສັນ ແລະ ຄຸ້ມຄອງທີ່ດິນ. ໃນໄລຍະຜ່ານມາ ກອງທຶນປົກປັກຮັກສາສິ່ງແວດລ້ອມ ໄດ້ສຸມໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ ອົງກອນ ແລະ ພະນັກງານ ເພື່ອໃຫ້ສາມາດປະຕິບັດພາລະບົດບາດໃນການລະດົມທຶນ ແລະ ສະໜອງທຶນຢ່າງມີປະສິດທິພາບ ໂດຍໄດ້ສຸມໃສ່ປັບປຸງນິຕິກຳທີ່ກ່ຽວຂ້ອງ ໃຫ້ສອດຄ່ອງກັບສະພາບການຈັດຕັ້ງປະຕິບັດຕົວຈິງ ແລະ ໄປຕາມທິດ "ໜຶ່ງ ກປສ ໜຶ່ງ ລະບົບ" ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານ ເປັນຕົ້ນ ໄດ້ປັບປຸງ ຂໍ້ຕົກລົງ ວ່າດ້ວຍ ລະບຽບການຄຸ້ມຄອງ ກປສ, ປັບປຸງ ຄູ່ມືການຄຸ້ມຄອງບໍລິຫານ ກອງທຶນ ແລະ ສ້າງແຜນດຳເນີນງານ 5 ປີ ຕໍ່ໜ້າ (2021-2025) ພ້ອມນັ້ນ ກໍໄດ້ປັບປຸງກົງຈັກການຈັດຕັ້ງໃຫ້ມີຄວາມເຂັ້ມແຂງໄປຕາມນະໂຍບາຍກະທັດຮັດ ແລະ ມີປະສິດທິຜົນ ແລະ ປັບປຸງກົນໄກການເງິນໃຫ້ມີປະສິດທິພາບ. ນອກຈາກນັ້ນ, ກໍເອົາໃຈໃສ່ວຽກງານປະສານງານ, ຮ່ວມມືກັບພາກສ່ວນຕ່າງໆ ແລະ ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບການຈັດຕັ້ງປະຕິບັດໂຄງການ ແລະ ຜົນງານການຈັດຕັ້ງປະຕິບັດວຽກງານຂອງ ກປສ ໃນການປະກອບສ່ວນເຂົ້າໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢ່າງເປັນປົກກະຕິຜ່ານເວັບໄຊ, ວິທະຍຸ, ໂທລະພາບ ແລະ ສື່ສິ່ງພິມຕ່າງໆ ແນໃສ່ເຮັດໃຫ້ ທຸກພາກສ່ວນໃນສັງຄົມ ໄດ້ເຂົ້າໃຈ ແລະ ປະກອບສ່ວນຢ່າງຕັ້ງໜ້າໃນການປົກປັກຮັກສາສິ່ງແວດລ້ອມ.

ກປສ ຂໍສະແດງຄວາມຂອບໃຈ ມາຍັງສະມາຊິກສະພາບໍລິຫານ, ຄະນະວິຊາການ, ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ທີ່ໄດ້ປະກອບສ່ວນທັງສະຕິປັນຍາ, ເຫື່ອແຮງ ແລະ ໃຫ້ການສະໜັບສະໜູນຢ່າງຕໍ່ເນື່ອງ ໃນການເຄື່ອນໄຫວວຽກງານຂອງ ກປສ. ຂໍຂອບໃຈຄູ່ຮ່ວມພັດທະນາຕ່າງໆ ໂດຍສະເພາະທະນາຄານໂລກ, GIZ ແລະ UNEP ທີ່ໄດ້ສະໜອງທຶນ ໃຫ້ແກ່ ກອງທຶນປົກປັກຮັກສາສິ່ງແວດລ້ອມ ກໍຄືປະເທດລາວ ເພື່ອນຳໃຊ້ເຂົ້າໃນວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃຫ້ໄປຕາມທິດສີຂຽວ ແລະຍືນຍົງ ແລະ ຂໍຊົມເຊີຍຄວາມພະຍາຍາມ ຂອງທຸກພາກສ່ວນທີ່ເຂົ້າຮ່ວມໃນການຈັດຕັ້ງປະຕິບັດແຜນການປີ 2020 ຢ່າງຕັ້ງໜ້າເຮັດໃຫ້ການຈັດຕັ້ງປະຕິບັດແຜນດັ່ງກ່າວບັນລຸຈຸດປະສົງຄາດໝາຍ ແລະ ໄດ້ຮັບຜົນເປັນຢ່າງດີ.

ໃນຕໍ່ໜ້ານີ້ ກປສ ຫວັງວ່າຈະສືບຕໍ່ໄດ້ຮັບການຮ່ວມມື ແລະ ສະໜັບສະໜູນເປັນຢ່າງດີຈາກທຸກພາກສ່ວນ ເພື່ອບັນລຸໄດ້ຕາມຈຸດປະສົງ ແລະ ເປົ້າໝາຍຂອງກອງທຶນຕາມຍຸດທະສາດສິ່ງແວດລ້ອມແຫ່ງຊາດ ແລະ ປະກອບສ່ວນເຂົ້າໃນການພັດທະນາ ສປປ ລາວ ໄປຕາມທິດສີຂຽວ ແລະ ຄວາມຍືນຍົງ.

**ສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ**

**ປະທານ**

ສົມມາດ ພົລເສນາ

# ສາລະບານ


**ພາກທີ I: ສະຫລຸບການເຄື່ອນໄຫວວຽກງານຂອງ ກປສ ປະຈຳປີ 2020 ........................1**

1. ສະພາບລວມ ........................................................................1

2. ທົບທວນຄືນຄາດໝາຍສູ້ຊົນ ແລະ ໜ້າວຽກຈຸດສຸມ ໃນແຜນປີ 2020............................1

2.1 ທິດທາງລວມ..........................................................................1

2.2 ຄາດໝາຍສູ້ຊົນ.......................................................................1

3. ຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນການ ປີ 2020..........................................2

3.1 ການຈັດຕັ້ງປະຕິບັດຄາດຫມາຍສູ້ຊົນ .................................................2

4. ການຈັດຕັ້ງປະຕິບັດວຽກຈຸດສຸມ ........................................................4

4.1 ດ້ານການຈັດຕັ້ງ: ........................................................................4

4.2 ດ້ານການຄຸ້ມຄອງ-ບໍລິຫານ ..............................................................6

4.3 ດ້ານການຄຸ້ມຄອງ ການເງິນ ..............................................................7

4.4 ດ້ານການແກ້ໄຂຜົນການກວດສອບ .......................................................8

4.5 ດ້ານບຸກຄະລາກອນ ......................................................................9

4.6 ດ້ານການລະດົມທຶນ ....................................................................11

4.7 ດ້ານການສື່ສານ ........................................................................12

4.8 ດ້ານການສະໜອງທຶນ ..................................................................14

4.9 ການລົງທຶນປ່ອຍກູ້ .......................................................................21

4.10 ດ້ານການຮ່ວມມື........................................................................26

5. ຕີລາຄາດ້ານດີ-ດ້ານອ່ອນ, ຂໍ້ຄົງຄ້າງ, ສາຍເຫດ ແລະ ບົດຮຽນທີ່ຖອດຖອນໄດ້ ...................27

5.1 ດ້ານດີ...................................................................................27

5.2 ສາເຫດທີ່ພາໃຫ້ມີດ້ານດີ ...............................................................28

5.3 ດ້ານອ່ອນ ແລະ ຂໍ້ຄົງຄ້າງ .............................................................28

5.4 ສາເຫດທີ່ພາໃຫ້ມີດ້ານອ່ອນ.............................................................28

5.5 ບົດຮຽນທີ່ຖອດຖອນໄດ້ ................................................................29

5.6 ມາດຕະການຈັດຕັ້ງປະຕິບັດ ............................................................29

**ພາກທີ II: ແຜນການເຄື່ອນໄຫວ ປີ 2021 ..........................................31**

1. ສະພາບແວດລ້ອມ ທີ່ ຕ້ອງເອົາໃຈໃສ່.....................................................31

2. ທິດທາງລວມ...........................................................................31

3. ຄາດຫມາຍສູ້ຊົນ ........................................................................31

3.1 ດ້ານການຈັດຕັ້ງ.........................................................................31

3.2 ດ້ານການຄຸ້ມຄອງ ບໍລິຫານ .............................................................32

3.3 ດ້ານການແກ້ໄຂຜົນການກວດສອບ - ..... 32
3.4 ດ້ານບຸກຄະລາກອນ..... 32
3.5 ດ້ານການລະດົມທຶນ ..... 32
3.6 ດ້ານການສື່ສານ..... 32
3.7 ດ້ານການຮ່ວມມື..... 32
3.8 ດ້ານການສະໜອງທຶນ ..... 32
4. ວຽກຈຸດສຸມ ..... 33
4.1 ດ້ານການຈັດຕັ້ງ..... 33
4.2 ດ້ານການຄຸ້ມຄອງ ບໍລິຫານ ..... 33
4.3 ດ້ານການແກ້ໄຂຜົນການກວດສອບ ..... 34
4.4 ດ້ານບຸກຄະລາກອນ..... 34
4.5 ດ້ານການລະດົມທຶນ ..... 35
4.6 ດ້ານການສື່ສານ..... 37
4.7 ດ້ານການຮ່ວມມື..... 37
4.8 ດ້ານການສະໜອງທຶນ ..... 38
**ພາກທີ III ມາດຕະການຈັດຕັ້ງປະຕິບັດ..... 44**

## ພາກທີ I: ສະຫລຸບການເຄື່ອນໄຫວວຽກງານຂອງ ກປສ ປະຈຳປີ 2020

### 1. ສະພາບລວມ

ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຢ່າງຕັ້ງໜ້າຕາມພາລະບົດບາດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນດຳລັດ ວ່າດ້ວຍ ກອງທຶນປົກປັກຮັກສາສິ່ງແວດລ້ອມ (2017). ໃນປີ 2020, ເນື່ອງຈາກ ມີສະພາບການແຜ່ລະບາດຂອງເຊື້ອພະຍາດ COVID 19 ເຮັດໃຫ້ການເຄື່ອນໄຫວວຽກງານບາງດ້ານບໍ່ສາມາດຈັດຕັ້ງປະຕິບັດໄດ້ຕາມແຜນການ (ເປັນຕົ້ນ ການລົງເຄື່ອນໄຫວວຽກງານຢູ່ພາກສະໜາມ, ການຈັດກອງປະຊຸມສຳມະນາ ເພື່ອປຶກສາຫາລື ກ່ຽວກັບ ເອກະສານນິຕິກຳ ແລະ ບັນຫາຕ່າງໆທີ່ມີຄົນເຂົ້າຮ່ວມຈຳນວນຫຼາຍ), ຊຶ່ງຈຳເປັນຕ້ອງໄດ້ຕໍ່ອາຍຸໂຄງການໄປອີກ. ແຕ່ເຖິງແນວໃດກໍຕາມ, ກປສ ກໍໄດ້ປັບປ່ຽນວິທີການເຮັດວຽກໂດຍໃຊ້ລະບົບອອນລາຍມາຊ່ວຍ ແລະ ພາຍຫຼັງມີນະໂຍບາຍຜ່ອນຜັນ ກໍໄດ້ເລັ່ງຈັດຕັ້ງປະຕິບັດກິດຈະກຳຕ່າງໆ ຊຶ່ງເຫັນວ່າສາມາດບັນລຸຄາດໝາຍສູ້ຊົນເປັນສ່ວນໃຫຍ່ ເຊັ່ນ: ການສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງໃຫ້ ກປສ ກ້າວໄປສູ່ “ໜຶ່ງ ກປສ ໜຶ່ງ ລະບົບ”, ຍົກຂີດຄວາມສາມາດຕາມ 8 ດັດສະນີຄວາມສາມາດ ກປສ, ສ້າງຄວາມພ້ອມດ້ານພະນັກງານ; ການລະດົມທຶນ-ການສະໜອງທຶນ, ການຮ່ວມມື, ການເຊື່ອມໂຍງ ແລະ ການຫັນເປັນຄູ່ຮ່ວມງານ ກັບຂະແໜງການທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ສາກົນ.

ບົດສະຫລຸບການເຄື່ອນໄຫວວຽກງານຂອງ ກປສ ປະຈຳປີ 2020 ໄດ້ຍົກໃຫ້ເຫັນໝາກຜົນຂອງການຈັດຕັ້ງປະຕິບັດແຜນ ປີ 2020 ແລະ ໄດ້ຕີລາຢ່າງຮອບດ້ານ ກ່ຽວກັບ ຜົນການຈັດຕັ້ງປະຕິບັດວຽກງານ ຂອງ ກປສ ໃນໜຶ່ງປີຜ່ານມາ ແນໃສ່ເສີມຂະຫຍາຍດ້ານຕັ້ງໜ້າ, ແກ້ໄຂດ້ານອ່ອນ-ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ ພ້ອມກັນນັ້ນ ກໍວາງແຜນການເຄື່ອນໄຫວວຽກງານ ໃນປີ 2021 ແລະ ກຳນົດມາດຕະການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ ແລະ ປະກົດຜົນເປັນຈິງ ຕາມພາລະບົດບາດໃນການລະດົມທຶນ, ການສະສົມທຶນ ແລະ ການສະໜອງທຶນໃຫ້ແກ່ວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມຕາມທິດສີຂຽວ ແລະ ຍືນຍົງ.

### 2. ທົບທວນຄືນຄາດໝາຍສູ້ຊົນ ແລະ ໜ້າວຽກຈຸດສຸມ ໃນແຜນປີ 2020

#### 2.1 ທິດທາງລວມ

ໃນປີ 2020 ກປສ ໄດ້ວາງທິດທາງລວມໃຫ້ສອດຄ່ອງ ແລະ ໄປຕາມແຜນຍຸດທະສາດ ຮອດປີ 2025 ຂອງ ກປສ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ 8 ແລະ ແຜນການປະຈຳປີ ຂອງ ກຊສ ຄື: “ສ້າງຄວາມເຂັ້ມແຂງ ດ້ານການຈັດຕັ້ງ ແລະ ບຸກຄະລາກອນ ໃຫ້ຮັບປະກັນທາງດ້ານຄຸນນະພາບ ແລະ ປະລິມານ, ປັບປຸງລະບົບຄຸ້ມຄອງ-ບໍລິຫານບັນຊີ ໃຫ້ໄປຕາມທິດ “ໜຶ່ງ ກປສ ໜຶ່ງ ລະບົບ”, ເພີ່ມທະວີການມີສ່ວນຮ່ວມ ແລະ ການຮ່ວມມືກັບອົງການຈັດຫາແຫຼ່ງທຶນ, ຍົກລະດັບຄວາມພ້ອມ ໃນການເປັນອົງການແຫ່ງຊາດທີ່ສາມາດເຂົ້າເຖິງແຫຼ່ງທຶນໄດ້ໂດຍກົງ ແລະ ສະໜອງທຶນໃຫ້ແກ່ ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ”.

#### 2.2 ຄາດໝາຍສູ້ຊົນ

ແຜນການ ປີ 2020 ໄດ້ວາງຄາດໝາຍສູ້ຊົນໄວ້ 8 ຄາດໝາຍ ດັ່ງນີ້:

- ***ດ້ານການຈັດຕັ້ງ*** - ສືບຕໍ່ສ້າງຄວາມເຂັ້ມແຂງ ໃຫ້ ກປສ ກ້າວໄປສູ່ “ໜຶ່ງ ກປສ ໜຶ່ງ ລະບົບ” ໃຫ້ສຳເລັດ ແລະ ສະພາບໍລິຫານຮັບຮອງ;

- ***ດ້ານການຄຸ້ມຄອງ ບໍລິຫານ*** - ສືບຕໍ່ຍົກຂີດຄວາມສາມາດ ໃຫ້ ກປສ ສຳລັບດັດສະນີທີ່ຍັງບໍ່ໄດ້ບັນລຸຄາດໝາຍ (ດ້ານການຄຸ້ມຄອງການເງິນ) ພ້ອມທັງຮັກສາຜົນງານ ຂອງດັດສະນີລວມທີ່ບັນລຸເປົ້າໝາຍແລ້ວ ບໍ່ໃຫ້ລຸດ 67 ຄະແນນ;
- ***ດ້ານການແກ້ໄຂຜົນການກວດສອບ*** - ສູ້ຊົນແກ້ໄຂໃຫ້ຂາດໂຕ ບັນດາຄຳເຫັນຂອງຄະນະກວດສອບພາຍໃນ ແລະ ພາຍນອກ ສຳລັບປີ 2015-2016 ແລະ 3 ເດືອນຂ້າມຜ່ານ (14 ບັນຫາ), ຜົນການກວດສອບ 2017 (11 ບັນຫາ) ແລະ 2018 (8 ບັນຫາ) ພ້ອມທັງເອົາໃຈໃສ່ ຄຸ້ມຄອງບໍລິຫານການເງິນ ໃຫ້ດີຂຶ້ນກວ່າເກົ່າ ເພື່ອປ້ອງກັນບໍ່ໃຫ້ບັນຫາເກີດຂຶ້ນຊ້ຳອີກ;
- ***ດ້ານບຸກຄະລາກອນ*** - ປັບປຸງການປະຕິບັດວຽກງານຂອງພະນັກງານ ຫກປສ ໂດຍຜ່ານການນຳໃຊ້ຕົວຊີ້ວັດຜົນງານ (Key Performance Indicator KPI) ທີ່ພະນັງງານໄດ້ເຊັນສັນຍາກັບ ຫກປສ ຢ່າງນ້ອຍ 70% ຂອງໜ້າວຽກທີ່ມອບໝາຍໄດ້ຮັບການຈັດຕັ້ງປະຕິບັດ;
- ***ດ້ານການລະດົມທຶນ*** - ໃຫ້ບັນລຸມູນຄ່າທັງໝົດ ປະມານ 11.9 ລ້ານໂດລາສະຫາລັດ ໂດຍຄາດຄະເນລາຍຮັບຈາກດອກເບ້ຍເງິນຝາກ ແລະ ດອກເບ້ຍເງິນກູ້ ປະມານ 0.3 ລ້ານໂດລາສະຫະລັດ, ລາຍຮັບຈາກທຶນປະກອບສ່ວນປະຕິບັດພັນທະຂອງໂຄງການລົງທຶນຂະແໜງໄຟຟ້າ ແລະ ບໍ່ແຮ່ ປະມານ 0.9 ລ້ານໂດລາສະຫະລັດ, ລາຍຮັບຈາກສາກົນ 10.7 ລ້ານໂດລາສະຫະລັດ;
- ***ດ້ານການສື່ສານ*** - ສຸມໃສ່ການເຜີຍແຜ່ ລະບຽບການຄຸ້ມຄອງ ກປສ ແລະ ຄູ່ມືການຄຸ້ມຄອງໂຄງການ ໃຫ້ແກ່ພະນັກງານ ກປສ ແລະ ໂຄງການຍ່ອຍ, ໂຄສະນາເຜີຍແຜ່ ກ່ຽວກັບຜົນງານການຈັດຕັ້ງປະຕິບັດວຽກງານ ກປສ ທີ່ປະກອບສ່ວນເຂົ້າໃນການປົກປັກຮັກສາສິ່ງແວດລ້ອມ ຢ່າງເປັນປົກກະຕິ ໂດຍຜ່ານສື່ຕ່າງໆ ເຊັ່ນ: ໜັງສືພິມ, ວາລະສານ, ວິທະຍຸ, ໂທລະພາບ, ເວັບໄຊ ແລະ ເຟສບຸກ;
- ***ດ້ານການສະໜອງທຶນ*** - ໃນປີ 2020 ກປສ ຕ້ອງຮັບປະກັນການສະໜອງທຶນໄປຕາມທິດທາງແຜນການທີ່ວາງໄວ້ ແລະ ບັນລຸຄາດໝາຍປະມານ 11.2 ລ້ານໂດລາສະຫະລັດ ໃນນັ້ນ ຄສລ2 ຈາກທະນາຄານໂລກ 9.6 ລ້ານໂດລາສະຫະລັດ ແລະ ທຶນພາຍໃນ 1.6 ລ້ານ ໂດລາສະຫະລັດ (13.4 ຕື້ ກີບ).
- ***ດ້ານການຮ່ວມມື*** - ເສີມຂະຫຍາຍການຮ່ວມມືຢ່າງມີປະສິດຕິພາບກັບຂະແໜງການຂອງພາກລັດໃນການຈັດຕັ້ງປະຕິບັດໂຄງການ ແລະ ເພີ່ມທະວີການຮ່ວມມືກັບອົງການຈັດຕັ້ງສາກົນ ພາຍໃນປະເທດ, ພາກພື້ນ ແລະ ສາກົນ ເພື່ອສາມາດດຶງດູດທຶນຮອນໃຫ້ແກ່ ກປສ ຢ່າງຕໍ່ເນື່ອງ. ຮັກສາສາຍສຳພັນອັນດີທີ່ມີຢູ່ແລ້ວກັບອົງການຈັດຕັ້ງຕ່າງໆ ໃຫ້ຍືນຍົງເຊັ່ນ: ທະນາຄານໂລກ (WB), ທະນາຄານພັດທະນາອາຊີ (ADB), ກອງທຶນສິ່ງແວດລ້ອມໂລກ (GEF), ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ (GCF) ແລະ ອົງການຈັດຕັ້ງອື່ນໆ.

## 3. ຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນການ ປີ 2020

### 3.1 ການຈັດຕັ້ງປະຕິບັດຄາດຫມາຍສູ້ຊົນ

ໃນປີ 2020 ກປສ ໄດ້ສຸມໃສ່ຈັດຕັ້ງປະຕິບັດວຽກງານເພື່ອໃຫ້ບັນລຸໄດ້ຄາດໝາຍສູ້ຊົນທີ່ກຳນົດໄວ້ດັ່ງນີ້:

- ***ດ້ານການຈັດຕັ້ງ*** : ໄດ້ເອົາໃຈໃສ່ສ້າງຄວາມເຂັ້ມແຂງໃຫ້ ກປສ ເພື່ອກ້າວສູ່ "ໜຶ່ງ ກປສ ໜຶ່ງ ລະບົບ" ໂດຍໄດ້ປັບປຸງນິຕິກຳທີ່ສຳຄັນຂອງ ກປສ ໃຫ້ຮັດກຸມ ແລະ ສອດຄ່ອງກັບສະພາບຕົວຈິງ ພ້ອມທັງສ້າງມາດຖານເງື່ອນໄຂທີ່ ໜ້າເຊື່ອຖື ແລະ ເປັນທີ່ຍອມທັງພາຍໃນ ແລະ ສາກົນ ເພື່ອເປັນເຄື່ອງມືໃນການເຄື່ອນໄຫວຢ່າງມີປະສິດທິຜົນໂດຍໄດ້ປັບປຸງ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງກອງທຶນປົກປັກຮັກສາສິ່ງແວດລ້ອມ, ຄູ່ມືການຄຸ້ມ

ຄອງ ບໍລິຫານ ກປສ (ຄູ່ມືຄຸ້ມຄອງໂຄງການ, ຄູ່ມືຄຸ້ມຄອງການເງິນ, ຄູ່ມືຈັດຊື້-ຈັດຈ້າງ, ຄູ່ມືຕິດຕາມປະເມີນຜົນ, ຄູ່ມືປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ ແລະ ຄູ່ມືການມີສ່ວນຮ່ວມຂອງຊຸມຊົນ). ພ້ອມນັ້ນ, ກໍໄດ້ຄົ້ນຄວ້າປັບປຸງ ໂປຣແກຣມບັນຊີ ໃຫ້ມີຄວາມສະຖຽນ, ມີປະສິດທິພາບ ແລະ ນໍາໃຊ້ລະບົບດຽວສໍາລັບທຸກແຫຼ່ງທຶນ. ການປັບປຸງຄູ່ມືຄຸ້ມຄອງ-ບໍລິຫານ ກປສ ແມ່ນໄດ້ສໍາເລັດໂດຍພື້ນຖານ ແລະ ຄາດວ່າຈະນໍາສະເໜີສະພາບໍລິຫານພິຈາລະນາຮັບຮອງໃນປີ 2021. ສໍາລັບ ໂປຣແກຣມບັນຊີ ແມ່ນໄດ້ສໍາເລັດການດໍາເນີນຂະບວນການຈັດຈ້າງບໍລິສັດທີ່ປຶກສາ ເພື່ອມາຊ່ວຍໃນການພັດທະນາໂປຣແກຣມ ຊຶ່ງຄາດວ່າຈະເລີ່ມວຽກ ໃນຕົ້ນປີ 2021 ແລະ ຄາດໝາຍໃຫ້ສໍາເລັດການພັດທະນາໂປຣແກຣມໃໝ່ໃນເດືອນ ມິຖຸນາ 2021.

- ***ດ້ານການຄຸ້ມຄອງ ບໍລິຫານ*** : ໄດ້ສືບຕໍ່ຍົກຂີດຄວາມສາມາດໃຫ້ ກປສ ຕາມດັດສະນີຄວາມສາມາດທີ່ຄາດໄວ້ ຊຶ່ງຜ່ານການປະເມີນ ປີ 2020 ດັດສະນີຄວາມສາມາດດ້ານການຄຸ້ມຄອງ-ບໍລິຫານ ແມ່ນປະຕິບັດໄດ້ 68.5 ຄະແນນ ເຫັນວ່າການຈັດຕັ້ງປະຕິບັດຕົວຈິງໄດ້ລື່ນແຜນທີ່ຄາດໝາຍໄວ້ 1.5 ຄະແນນ (67 ຄະແນນ).
- ***ດ້ານການແກ້ໄຂຜົນການກວດສອບ:*** ກປສ ໄດ້ດໍາເນີນການແກ້ໄຂຄໍາເຫັນຂອງຄະນະກວດສອບພາຍໃນ ແລະ ພາຍນອກ ໂດຍໄດ້ແຕ່ງຕັ້ງຄະນະຮັບຜິດຊອບແກ້ໄຂບັນຫາກວດສອບພາຍໃນ ກປສ. ຜ່ານການຈັດຕັ້ງປະຕິບັດຕົວຈິງ ສາມາດແກ້ໄຂຄໍາເຫັນຂອງຄະນະກວດສອບໄດ້ດັ່ງນີ້: ສໍາລັບ ປີ 2015-2016 ແລະ 3 ເດືອນຂ້າມຜ່ານ ມີທັງໝົດ 14 ບັນຫາ, ໃນນີ້ໄດ້ປັບປຸງຂາດໂຕແລ້ວ 3 ບັນຫາ, ປັບປຸງບໍ່ຂາດໂຕ 6 ບັນຫາ ແລະ ຍັງບໍ່ໄດ້ຮັບການປັບປຸງ 5 ບັນຫາ. ສໍາລັບປີ 2017 ຜົນການກວດສອບພົບ 11 ບັນຫາ, ຫກປສ ໄດ້ປັບປຸງຂາດໂຕແລ້ວ 6 ບັນຫາ, ປັບປຸງບໍ່ຂາດໂຕ 5 ບັນຫາ. ສໍາລັບປີ 2018 ຜົນການກວດສອບພົບ 9 ບັນຫາ ໃນນີ້ໄດ້ປັບປຸງຂາດໂຕແລ້ວ 3 ບັນຫາ, ໄດ້ປັບປຸງບໍ່ຂາດໂຕ 1 ບັນຫາ ແລະ ຍັງບໍ່ໄດ້ປັບປຸງ 5 ບັນຫາ.
- ***ດ້ານບຸກຄະລາກອນ:*** ເພື່ອປັບປຸງການປະຕິບັດວຽກງານ ຂອງ ພະນັກງານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ຫກປສ ໄດ້ຮ່າງບົດແນະນໍາການກໍານົດຕົວຊີ້ວັດຜົນງານ (Key Performance Indicator KPI) ພ້ອມດ້ວຍແບບຟອມ ຊຶ່ງສໍາເລັດໂດຍພື້ນຖານ ຈະໄດ້ເລີ່ມທົດລອງຈັດຕັ້ງປະຕິບັດໃນປີ 2021.
- ***ດ້ານການລະດົມທຶນ:*** ໃນປີ 2020 ຫກປສ ລະດົມທຶນໄດ້ທັງໝົດ 8.82 ລ້ານໂດລາສະຫະລັດ ຊຶ່ງປະຕິບັດໄດ້ 74% ຂອງແຜນ (11.9 ລ້ານໂດລາສະຫະລັດ). ໃນນັ້ນ ທຶນປະກອບສ່ວນປະຕິບັດພັນທະຂອງໂຄງການລົງທຶນຂະແໜງໄຟຟ້າ ແລະ ບໍ່ແຮ່ ລວມທັງດອກເບ້ຍເງິນຝາກ ແລະ ດອກເບ້ຍເງິນກູ້ ປະມານ 1.36 ລ້ານໂດລາສະຫະລັດ ແລະ ລາຍຮັບຈາກທະນາຄານໂລກ 7.46 ລ້ານໂດລາສະຫະລັດ. ໂດຍລວມແລ້ວ, ໃນປີ 2020, ຫກປສ ບໍ່ສາມາດລະດົມທຶນຈາກໂຄງລົງທຶນຕ່າງໆໄດ້ຕາມຄາດໝາຍ ເນື່ອງຈາກ ບັນດາໂຄງການລົງທຶນສ່ວນຫຼາຍປະສົບກັບບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດຈຶ່ງບໍ່ສາມາດຖອກເງິນພັນທະໄດ້ ພ້ອມນັ້ນ, ໂຄງການທີ່ໄດ້ຮັບທຶນຈາກ ກປສ ກໍບໍ່ສາມາດຈັດຕັ້ງປະຕິບັດກິດຈະກໍາຕ່າງໆເປັນຕົ້ນ ການຈັດປະຊຸມ, ສໍາມະນາ, ການລົງພາກສະໜາມ ຍ້ອນມີການແຜ່ລະບາດຂອງເຊື້ອພະຍາດ COVID 19.
- ***ດ້ານການສື່ສານ.*** ຫກປສ ໄດ້ມີການເຜີຍແຜ່ ລະບຽບການຄຸ້ມຄອງ ກປສ ແລະ ຄູ່ມືການຄຸ້ມຄອງໂຄງການໃຫ້ແກ່ພະນັກງານ ກປສ ແລະ ໂຄງການຍ່ອຍ ໂດຍໄດ້ຈັດຝຶກອົບຮົມກ່ຽວກັບການຄຸ້ມຄອງໂຄງການ ໃຫ້ແກ່ພາກສ່ວນຈັດຕັ້ງປະຕິບັດໂຄງການ ທີ່ເຫັນວ່າມີຄວາມຈໍາເປັນ ແລະ ໂຄງການທີ່ໄດ້ຮັບທຶນໃໝ່. ພ້ອມນັ້ນ, ກໍໄດ້ໂຄສະນາເຜີຍແຜ່ ກ່ຽວກັບຜົນງານ ການຈັດຕັ້ງປະຕິບັດວຽກງານ ກປສ ໃນການປະກອບສ່ວນເຂົ້າໃນການປົກປັກຮັກສາສິ່ງແວດລ້ອມ ໂດຍສະເພາະໄດ້ອອກໜັງສືພິມ, ວາລະສານ,ວິທະຍຸ, ໂທລະພາບ, ເວັບໄຊ ແລະ ເຟສບຸກ ຢ່າງເປັນປົກກະຕິ.

- ***ດ້ານການສະໜອງທຶນ*** : ໃນປີ 2020, ກປສ ໄດ້ສະໜອງທຶນໃຫ້ແກ່ໂຄງການຕ່າງໆ ໄດ້ທັງໝົດ 6.65 ລ້ານໂດລາສະຫະລັດ ຫຼື 62.73% ຂອງແຜນ (11.2 ລ້ານໂດລາສະຫະລັດ). ໃນນັ້ນ, ສະໜອງທຶນໃຫ້ 36 ໂຄງການ ( ຄສລ2) ຈຳນວນ 5,95 ລ້ານໂດລາສະຫະລັດ ຫຼື 62% ຂອງແຜນ (9.6 ລ້ານໂດລາສະຫະລັດ), ສະໜອງທຶນໃຫ້ 54 ໂຄງການ (ທຶນພາຍໃນ) ຈຳນວນ 0.7 ລ້ານໂດລາສະຫະລັດ (5.99 ຕື້ກີບ) ຫຼື 70% ຂອງແຜນດັດແກ້ 6 ເດືອນທ້າຍປີ (1 ລ້ານໂດລາສະຫະລັດ).
- ***ດ້ານການຮ່ວມມື*** : ໃນປີ 2020 ກປສ ໄດ້ເສີມຂະຫຍາຍການຮ່ວມມືຢ່າງມີປະສິດທິຜາບກັບຂະແໜງການກ່ຽວຂ້ອງຂອງພາກລັດໃນການຈັດຕັ້ງປະຕິບັດໂຄງການ ເປັນຕົ້ນເປັນໃຈກາງປະສານງານໃນການຈັດຕັ້ງປະຕິບັດໂຄງການທີ່ຕິດພັນກັບຫຼາຍພາກສ່ວນເຊັ່ນ: ໂຄງການໃນກຸ່ມບັງຄັບໃຊ້ກົດໝາຍສັດນ້ຳ-ສັດປ່າ (ຕຳຫຼວດ, ພາສີ, ປ່າໄມ້), ກຸ່ມຄຸ້ມຄອງປ່າສະຫງ່ວນ, ກຸ່ມວາງແຜນສິ່ງແວດລ້ອມ ແລະ ສ້າງຄວາມເຂັ້ມແຂງ. ນອກນັ້ນ, ກໍໄດ້ຊຸກຍູ້ ແລະ ປະສານງານຢ່າງໃກ້ຊິດກັບພາກສ່ວນທີ່ປະສົບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດໂຄງການເພື່ອໃຫ້ສາມາດປະຕິບັດໂຄງການຕາມແຜນທີ່ກຳນົດໄວ້. ພ້ອມກັນນັ້ນ, ກໍໄດ້ສືບຕໍ່ຮ່ວມມືກັບອົງການຈັດຕັ້ງສາກົນ ແລະ ຜູ້ໃຫ້ທຶນຕ່າງໆເຊັ່ນ: ຮ່ວມມືກັບທະນາຄານໂລກ ໃນການຈັດຕັ້ງປະຕິບັດ ຄສລ2 ແລະ ການກະກຽມໂຄງການໃໝ່ (3L ແລະ EWMP), ຮ່ວມມືກັບ GIZ ໃນການຈັດຕັ້ງປະຕິບັດໂຄງການ "ແຜນງານສ້າງຄວາມເຂັ້ມແຂງ ໃນວຽກງານປ່າໄມ້, ຄຸ້ມຄອງປ່າໄມ້ແບບພູມມີທັດ ແລະ ສິ່ງເສີມຊີວິດການເປັນຢູ່ (I-GFLL)" ແລະ UNEP ໃນການຈັດຕັ້ງປະຕິບັດ "ໂຄງການສ້າງຄວາມທົນທານຂອງປະຊາກອນໃນຕົວເມືອງ ເພື່ອປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໂດຍການຄຸ້ມຄອງ ແລະ ນຳໃຊ້ທ່າແຮງຂອງລະບົບນິເວດ".

## 4. ການຈັດຕັ້ງປະຕິບັດວຽກຈຸດສຸມ

### 4.1 ດ້ານການຈັດຕັ້ງ:

ເພື່ອໃຫ້ບັນລຸຄາດໝາຍສູ້ຊົນໃນການຍົກຂີດຄວາມສາມາດດ້ານການຄຸ້ມຄອງ-ບໍລິຫານ ຂອງ ຫກປສ ໃຫ້ກ້າວໄປສູ່ "ໜຶ່ງ ກປສ ໜຶ່ງ ລະບົບ", ຫກປສ ໄດ້ຈັດຕັ້ງປະຕິບັດວຽກງານຈຸດສຸມ ດັ່ງລຸ່ມນີ້:

**4.1.1.** ສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງໃຫ້ແກ່ ກປສ ແລະ ຊຸກຍູ້ໃຫ້ທຸກພາກສ່ວນໃນໂຄງປະກອບການຈັດຕັ້ງຂອງ ກປສ (ສະພາບໍລິຫານ, ຄະນະວິຊາການ ແລະ ຫ້ອງການ ກປສ) ໃຫ້ສາມາດຈັດຕັ້ງປະຕິບັດບົດບາດໜ້າທີ່ຂອງຕົນຕາມທີ່ກຳນົດໄວ້ໃນດຳລັດວ່າດ້ວຍ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ແຜນການທີ່ກຳນົດໄວ້ ຢ່າງມີປະສິດທິຜົນ.

❖ **ການເຄື່ອນໄຫວຂອງສະພາບໍລິຫານ**

ໃນປີ 2020, ກປສ ໄດ້ຈັດປະຊຸມສາມັນ ຂອງ ສະພາບໍລິຫານ ກປສ ຈຳນວນ 2 ຄັ້ງ: ຄັ້ງທີ 1 ໄດ້ຈັດຂຶ້ນໃນວັນທີ 15 ພຶດສະພາ 2020 ເພື່ອລາຍງານຜົນການຈັດຕັ້ງປະຕິບັດແຜນ ປີ 2019 ແລະ ແຜນການຈັດຕັ້ງປະຕິບັດ ປີ 2020, ລາຍງານການແກ້ໄຂຜົນການກວດສອບ ປີ 2017 ແລະ ຜົນການກວດສອບ ປີ 2018, ສະເໜີແນວຄວາມຄິດທີ່ຈະກຳນົດເຂົ້າໃນແຜນ 5 ປີຄັ້ງທີ III ຂອງ ກປສ (2021-2025), ລາຍງານຜົນການປະເມີນ ກປສ ເພື່ອກາຍເປັນອົງກອນທີ່ສາມາດເຂົ້າເຖິງທຶນ GCF ໂດຍກົງ ແລະ ພິຈາລະນາຮັບຮອງເອົາບົດສະເໜີໂຄງການ 2 ໂຄງການ. ຄັ້ງທີ 2 ໄດ້ຈັດຂຶ້ນໃນວັນທີ 21 ທັນວາ 2020 ເພື່ອລາຍງານຜົນການເຄື່ອນໄຫວວຽກງານປະຈຳປີ 2020 ແລະ ແຜນການເຄື່ອນໄຫວປະຈຳປີ 2021, ສະເໜີແຜນ 5 ປີຄັ້ງທີ III ຂອງ

ກປສ (2021-2025), ລາຍງານຜົນການກວດກສອບ ປີ 2019 ສຳລັບທຶນ ກປສ ແລະ ຄສລ2, ສະເໜີພິຈາລະນາຮັບຮອງ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ ແລະ ສະເໜີພິຈາລະນາຮັບຮອງ 11 ໂຄງການ (ທຶນພາຍໃນ 10 ໂຄງການ ແລະ ທຶນ ຄສລ 2 ຈຳນວນ 1 ໂຄງການ).

❖ **ການເຄື່ອນໄຫວຂອງຄະນະວິຊາການ**

ໃນປີ 2020, ໄດ້ຈັດກອງກະຊຸມຄະນະວິຊາການ ກປສ ຈຳນວນ 3 ຄັ້ງ: ຄັ້ງທີ 1 ໄດ້ຈັດຂຶ້ນໃນວັນທີ 24 ມີນາ 2020 ເພື່ອລາຍງານການເຄື່ອນໄຫວ ຂອງ ກປສ 3 ເດືອນຕົ້ນປີ ແລະ ວາງແຜນວຽກຈຸດສຸມຕໍ່ໜ້າ ຂອງໂຄງການທຶນ ພາຍໃນ ແລະ ຄສລ 2; ຄົ້ນຄວ້າປຶກສະເໜີ 3 ໂຄງການ (ທຶນພາຍໃນ). ຄັ້ງທີ 2 ໄດ້ຈັດຂຶ້ນໃນວັນທີ 11 ກັນຍາ 2020 ເພື່ອລາຍງານການເຄື່ອນໄຫວຂອງ ກປສ ໃນໄລຍະ 6 ເດືອນຜ່ານມາ (ມີນາ-ກັນຍາ 2020) ແລະ ແຜນວຽກຈຸດສຸມຕໍ່ໜ້າ ຂອງໂຄງການ (ທຶນພາຍໃນ ແລະ ຄສລ 2) ຄົ້ນຄວ້າປຶກສະເໜີ 7 ໂຄງການ (ທຶນ ພາຍໃນ) ແລະ ຄັ້ງທີ 3 ຈັດຂຶ້ນໃນວັນທີ 10 ທັນວາ 2020 ເພື່ອລາຍງານການເຄື່ອນໄຫວຂອງ ກປສ ໃນໄລຍະ 3 ເດືອນທ້າຍປີ (ຕຸລາ-ທັນວາ 2020) ແລະ ແຜນວຽກຈຸດສຸມຕໍ່ໜ້າ ຂອງໂຄງການທຶນ ກປສ ແລະ ຄສລ2, ຄົ້ນຄວ້າປຶກສະເໜີ 5 ໂຄງການ ທີ່ຂໍນຳໃຊ້ທຶນພາຍໃນ.

❖ **ວຽກງານຄຸ້ມຄອງ-ບໍລິຫານຫ້ອງການ ກປສ**

ໄດ້ປັບປຸງກົງຈັກການຈັດຕັ້ງ ຂອງ ຫກປສ ໃຫ້ກະທັດຮັດ ແລະ ສອດຄ່ອງກັບສະພາບການເຄື່ອນໄຫວວຽກງານຕົວຈິງ ໂດຍໄດ້ຫລຸດພະແນກ ຈາກ 4 ພະແນກ ເປັນ 3 ພະແນກ, ຊຶ່ງໄດ້ໂຮມພະແນກຈັດຊື້-ຈັດຈ້າງເຂົ້າກັບພະແນກບໍລິຫານ ເອີ້ນຊື່ໃໝ່ວ່າ: “ພະແນກບໍລິຫານ ແລະ ຈັດຊື້-ຈັດຈ້າງ” ແລະ ໄດ້ປັບປຸງ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງກອງທຶນປົກປັກຮັກສາສິ່ງແວດລ້ອມ ຊຶ່ງໄດ້ປັບປຸງພາລະບົດບາດ ຂອງແຕ່ລະພະແນກຄືນໃໝ່ ໂດຍກຳນົດເຂົ້າໃນຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ກປສ ສະບັບປັບປຸງ. ພ້ອມນັ້ນ, ກໍໄດ້ຈັດສັນວຽກງານ ແລະ ແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດວຽກງານ ໂດຍສະເພາະພະນັກງານຂັ້ນພະແນກ ໃຫ້ມີບົດບາດໃນການນຳພາ-ຊີ້ນຳການເຄື່ອນໄຫວວຽກງານຂອງພະແນກຕົນໃຫ້ມີປະສິດທິຜົນ. ໄດ້ປະກອບພະນັກງານຕາມຕຳແໜ່ງງານໄດ້ທັງໝົດ (47 ຕຳແໜ່ງ) ພ້ອມທັງ ໄດ້ສຳເລັດການປະເມີນຜົນງານ ແລະ ຕີລາຄາການຈັດຕັ້ງປະຕິບັດວຽກງານຂອງພະນັກງານປະຈຳປີ 2020 ເພື່ອເປັນບ່ອນອີງໃນການສືບຕໍ່ສັນຍາໄລຍະໃໝ່.

**4.1.2.** ສືບຕໍ່ເອົາໃຈໃສ່ປັບປຸງອົງກອນໃຫ້ມີຄວາມເຂັ້ມແຂງ ເພື່ອກາຍເປັນອົງກອນທີ່ສາມາດເຂົ້າເຖິງແຫຼ່ງທຶນໄດ້ໂດຍກົງ ຊຶ່ງໄດ້ພະຍາຍາມແກ້ໄຂຊ່ອງຫວ່າງຕ່າງໆ ຕາມການປະເມີນຂອງຊ່ຽວຊານສາກົນ (GIZ) ກ່ຽວກັບ ມາດຖານເງື່ອນໄຂຂອງອົງກອນທີ່ສາມາດເຂົ້າຫາແຫຼ່ງທຶນໄດ້ໂດຍກົງ ຂອງກອງທຶນສີຂຽວການປ່ຽນແປງດິນຟ້າອາກາດສາກົນ ໂດຍໄດ້ປັບປຸງນິຕິກຳສຳຄັນຂອງ ກປສ ເພື່ອໃຫ້ມີຄວາມຄົບຖ້ວນສົມບູນເຊັ່ນ: ໄດ້ປັບປຸງຂໍ້ຕົກລົງ ວ່າດ້ວຍ ລະບຽບການຄຸ້ມຄອງ ກປສ ໂດຍ ເພີ່ມບາງເນື້ອໃນ ແລະ ຈັດລຽງຄຳສັບໃໝ່ກ່ຽວກັບສິດ ແລະ ໜ້າທີ່ຂອງ ຫກປສ, ໄດ້ເພີ່ມມາດຕາກ່ຽວກັບ ການກວດສອບພາຍໃນ ແລະ ຄະນະກວດກາພາຍໃນ ພ້ອມທັງກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະດັ່ງກ່າວ. ນອກນັ້ນ, ຍັງໄດ້ປັບປຸງຄູ່ມືການຄຸ້ມຄອງໂຄງການຂອງ ກປສ ແລະ ປັບປຸງໂປແກຣມບັນຊີໃຫ້ມີປະສິດທິພາບຂຶ້ນກວ່າເກົ່າ.

**4.1.3.** ໄດ້ປັບປຸງໂຄງຮ່າງການຈັດຕັ້ງໃໝ່ໃຫ້ກະທັດຮັດ ແລະ ສອດຄ່ອງກັບສະພາບການເຄື່ອນໄຫວວຽກງານຕົວຈິງ ໂດຍອີງໃສ່ລະບຽບຄຸ້ມຄອງ ກປສ ສະບັບປັບປຸງທີ່ໄດ້ມີການປັບປຸງກົງຈັກການຈັດຕັ້ງຈາກ 4 ພະແນກ ເປັນ 3 ພະແນກ. ພ້ອມນັ້ນ, ກໍປະກອບພະນັກງານໃຫ້ຄົບຕາມຕຳແໜ່ງງານ (47 ຕຳແໜ່ງ) ຊຶ່ງໃນນັ້ນມີພະນັກງານ ທຶນພາຍໃນ 23 ທ່ານ, ພະນັກງານໂຄງການ ຄສລ2 ຕາມສັນຍາ 18 ທ່ານ, ພະນັກງານໂຄງການ I-GFLL ຕາມສັນຍາ 3 ທ່ານ ແລະ ພະນັກງານໂຄງການ UNEP ຕາມສັນຍາ 3 ທ່ານ. ປະຈຸບັນ ຫກປສ ມີພະນັກງານທັງໝົດ 47 ຕຳແໜ່ງ ເນື່ອງຈາກໂຄງການ ຄສລ2 ໄດ້ມີການຕໍ່ອາຍຸໂຄງການໄປຮອດ ເດືອນ ມິຖຸນາ

2022 ຈຶ່ງຈຳເປັນຕ້ອງໄດ້ຮັກສາພະນັກງານໂຄງການຈົນສິ້ນສຸດອາຍຸໂຄງການ ເພື່ອຮັບປະກັນການປະຕິບັດໂຄງການໃຫ້ມີຄວາມຕໍ່ເນື່ອງ ແລະ ມີປະສິດທິຜົນ. ພ້ອມນັ້ນ, ກໍ່ມີໂຄງການເຂົ້າມາໃໝ່ (i-GFLL) ທີ່ຕ້ອງໄດ້ຈ້າງພະນັກງານໂຄງການສະເພາະ. ໃນຕໍ່ໜ້າ ຫກປສ ຈະປັບປຸງກົງຈັກການຈັດຕັ້ງໃຫ້ກະທັດຮັດ ໂດຍການຮັກສາພະນັກງານໄວ້ ຈຳນວນ 35 ຕຳແໜ່ງໃນບ້ອງທຶນພາຍໃນ ພາຍຫລັງ ໂຄງການ ຄສລ2 ສິ້ນສຸດສັນຍາ.

**4.1.4.** ການຄວບຄຸມອັດຕາການເຂົ້າ-ອອກຂອງພະນັກງານ ຍັງບໍ່ສາມາດປະຕິບັດໄດ້ຕາມແຜນທີ່ກຳນົດ. ໃນປີ 2020 ເຫັນວ່າ ເປີເຊັນການເຂົ້າ-ອອກຂອງພະນັກງານເກີນເປີເຊັນທີ່ກຳນົດໄວ້ຈາກ 8% ເປັນ 10% ເນື່ອງຈາກເປັນພະນັກງານຕາມສັນຍາເຊັນສັນຍາປີຕໍ່ປີ ຊຶ່ງຕາມລະບຽບການແລ້ວມີສິດໃນການເຂົ້າ-ອອກຕາມກົດໝາຍແຮງງານ, ພະນັກງານຕ້ອງການປະສົບການທີ່ຫລາກຫລາຍ ແລະ ສິ່ງທ້າທ້າຍໃນການເຮັດວຽກກັບອົງກອນອື່ນ, ພະນັກງານຫາປະສົບການກັບອົງກອນອື່ນເພື່ອຍົກລະດັບຕຳແໜ່ງງານຂອງຕົນເອງ. ເຖິງຢ່າງໃດກໍຕາມ ຫກປສ ເອງກໍໄດ້ມີການຕິດຕາມພະນັກງານ ແລະ ຊຸກຍູ້ໃຫ້ພະນັກງານຢ່າງຕໍ່ເນື່ອງໃນການປະກອບສ່ວນເຮັດວຽກງານກັບ ຫກປສ ຢ່າງຕໍ່ເນື່ອງ ພ້ອມທັງ ຮັບປະກັນຜົນສຳເລັດຂອງວຽກງານໃນລະດັບເປັນທີ່ພໍໃຈຂຶ້ນໄປ.

**4.1.5.** ໄດ້ສຳເລັດໂດຍພື້ນຖານ ການປັບປຸງຄູ່ມືຄຸ້ມຄອງບໍລິຫານໂຄງການທັງພາສາລາວ ແລະ ອັງກິດ ເຊັ່ນ: ຄູ່ມືການຕິດຕາມ ແລະ ປະເມີນຜົນຂອງໂຄງການ, ຄູ່ມືການຈັດຊື້-ຈັດຈ້າງ, ຄູ່ມືຄຸ້ມຄອງການເງິນ, ຄູ່ມືຄຸ້ມຄອງໂຄງການ ເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ໃຫ້ໄດ້ມາດຕະຖານສາກົນ. ໃນການປັບປຸງຄູ່ມືດັ່ງກ່າວ ຫກປສ ກໍ່ໄດ້ເຮັດວຽກຮ່ວມກັບກົມນິຕິກຳ, ກຊສ ເພື່ອກວດກາຄວາມສອດຄ່ອງທາງດ້ານນິຕິກຳ ຊຶ່ງໄດ້ຈັດປະຊຸມຜ່ານຮ່າງຄູ່ມືບາງຄູ່ມືແລ້ວ ແລະ ອີກຈຳນວນໜຶ່ງແມ່ນຈະຕ້ອງໄດ້ສືບຕໍ່ຜ່ານຮ່ວມກັນ ກ່ອນຈະນຳສະເໜີກອງປະຊຸມສະພາບໍລິຫານ ຊຶ່ງຄາດວ່າຈະໃຫ້ສຳເລັດໃນປີ 2021.

**4.1.6.** ໄດ້ສັງລວມຂໍ້ມູນກ່ຽວກັບປະລິມານ, ແຫລ່ງທີ່ມາ ແລະ ເນື້ອໃນເອກະສານເຂົ້າ-ອອກຂອງ ຫກປສ ເພື່ອຮ່າງຄູ່ມືການຈໍລະຈອນເອກະສານ ພາຍໃນ ຫກປສ ແນໃສ່ປັບປຸງການຈໍລະຈອນເອກະສານ ແລະ ແກ້ໄຂເອກະສານທີ່ສະເໜີມາໃຫ້ວ່ອງໄວ ແລະ ທັນກັບສະພາບການ ຊຶ່ງຄາດວ່າຈະໃຫ້ສຳເລັດການສ້າງຄູ່ມືດັ່ງກ່າວໃນປີ 2021.

## 4.2 ດ້ານການຄຸ້ມຄອງ-ບໍລິຫານ

ກປສ ໄດ້ເອົາໃຈໃສ່ຍົກຂີດຄວາມສາມາດ ພ້ອມທັງຮັກສາຜົນງານຂອງດັດສະນີລວມທີ່ບັນລຸເປົ້າໝາຍແລ້ວ ບໍ່ໃຫ້ຫຼຸດ 67 ຄະແນນ ຊຶ່ງໃນປີ 2020 ສາມາດປະຕິບັດໄດ້ 68,5 ຄະແນນ (ລື່ນຄາດໝາຍ 1.5 ຄະແນນ) ດັ່ງລາຍລະອຽດລຸ່ມນີ້:

1) ດ້ານການຄຸ້ມຄອງ-ບໍລິຫານ ຮັກສາຢູ່ໃນລະດັບ 10 ຄະແນນ;
2) ດ້ານວິໄສທັດ, ຍຸດທະສາດ ແລະ ແຜນສະໜອງທຶນ ເພີ່ມຂຶ້ນ 0,5 ຈາກ 7 ຄະແນນ ມາເປັນ 7,5 ຄະແນນ;
3) ດ້ານການດຳເນີນງານ, ການວາງແຜນ, ການຈັດຕັ້ງປະຕິບັດໂຄງການ ແລະ ການຕິດຕາມ ແລະ ປະເມີນໂຄງການຂອງ ກປສ ຮັກສາຢູ່ໃນລະດັບ 13 ຄະແນນ;
4) ດ້ານການບໍລິຫານທົ່ວໄປ ຮັກສາຢູ່ໃນລະດັບ 7 ຄະແນນ;
5) ດ້ານການບໍລິຫານ-ຄຸ້ມຄອງ ບຸກຄະລາກອນ ເພີ່ມຂຶ້ນ 1 ຄະແນນ ຈາກ 6 ຄະແນນ ມາເປັນ 7 ຄະແນນ;
6) ດ້ານການລະດົມທຶນ ແລະ ການສື່ສານ ຮັກສາຢູ່ໃນລະດັບ 12 ຄະແນນ;

7) ດ້ານການຄຸ້ມຄອງການເງິນ ບັນລຸ 5 ຄະແນນ ຈາກເປົ້າໝາຍຕັ້ງໄວ້ 7 ຄະແນນ;
8) ດ້ານການຈັດຊື້-ຈັດຈ້າງ ຮັກສາຢູ່ໃນລະດັບ 7 ຄະແນນ.

### 4.3 ດ້ານການຄຸ້ມຄອງ ການເງິນ

- ໄດ້ຈັດຝຶກອົບຮົມໃຫ້ພະນັກງານພະແນການເງິນຂອງ ຫກປສ ກ່ຽວກັບການຄຸ້ມຄອງ ແລະ ການກວດກາ ເອກະສານການເງິນຂອງໂຄງການ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານ ດ້ານການເງິນຂອງໂຄງການ ໃຫ້ຖືກຕ້ອງຕາມລະບຽບ ແລະ ຂັ້ນຕອນຂອງກົດໝາຍ ແລະ ຄູ່ມືຄຸ້ມຄອງການເງິນ ຂອງ ກປສ. ນອກນັ້ນ, ພະນັກງານທີ່ບັນຈຸເຂົ້າໃໝ່ຂອງພະແນກການເງິນ ຍັງໄດ້ຮັບການຝຶກອົບຮົມ ກ່ຽວກັບ ການລົງບັນຊີ ຈາກບໍລິສັດ APIS ໂປຣແກມບັນຊີ; ພະແນກການເງິນ ຍັງໄດ້ຈັດຝຶກອົບຮົມກັບທີ່ໃຫ້ໂຄງການທີ່ໄດ້ຮັບທຶນ ຈາກ ກປສ ເປັນແຕ່ລະໄລຍະ ໂດຍສະເພາະໂຄງການທີ່ມີຄວາມຫຍຸ້ງຍາກໃນການສະຫຼຸບ ແລະ ການເຮັດບົດລາຍງານການເງິນປະຈຳເດືອນ.
- ປະຈຸບັນ ຫກປສ ນຳໃຊ້ໂປຼແກຼມບັນຊີ 2 ໂປຼແກຼມຄື: APIS ນຳໃຊ້ກັບໂຄງການ ຄສລ2 ແລະ KPACC ໃຊ້ກັບໂຄງການ ທີ່ນຳໃຊ້ທຶນພາຍໃນ ຊຶ່ງການຈັດຕັ້ງປະຕິບັດຜ່ານມາ ເຫັນວ່າຍັງມີຄວາມຫຍຸ້ງຍາກ ເນື່ອງຈາກ ການພັດທະນາໂປຼແກຼມກໍ່ຍັງບໍ່ທັນສົມບູນ, ບໍ່ມີຄວາມສະຖຽນ ແລະ ບໍ່ສາມາດສະໜອງບົດລາຍງານການເງິນໄດ້ຕາມຄວາມຕ້ອງການ. ສະນັ້ນ, ຫກປສ ຈຶ່ງມີແຜນປັບປຸງໂປຼແກຼມບັນຊີໃຫ້ນຳໃຊ້ລະບົບດຽວຕາມທິດ “ໜຶ່ງ ກປສ ໜຶ່ງ ລະບົບ”. ຜ່ານການກວດກາ ແລະ ປະເມີນ ເຫັນວ່າຈະຕ້ອງມີການພັດທະນາໂປຼແກຼມບັນຊີໃໝ່ ຊຶ່ງປະຈຸບັນ ຫກປສ ໄດ້ດຳເນີນການຈັດຈ້າງບໍລິສັດ (CS Intellect) ທີ່ຈະມາພັດທະນາໂປຼແກຼມໃໝ່ ແລະ ຄາດວ່າຈະສຳເລັດໃນກາງປີ 2021. ໃນໄລຍະລໍຖ້າໂປຼແກຼມໃໝ່, ຫກປສ ກໍໄດ້ມີການປັບປຸງໂປຼແກຼມທີ່ນຳໃຊ້ໃນປະຈຸບັນບາງສ່ວນ ເພື່ອຕອບສະໜອງວຽກງານປະຈຳວັນ ເຊັ່ນ: ປັບປຸງປີການບັນຊີ ສຳລັບໂປຼແກຼມ KPAC ຈາກເດີມ ເລີ່ມຕົ້ນເດືອນຕຸລາ ແລະ ສິ້ນສຸດເດືອນກັນຍາ ມາເປັນ ເລີ່ມເດືອນມັງກອນ ແລະ ສິ້ນສຸດເດືອນທັນວາ. ສຳລັບໂປຼແກຼມ APIS ກໍ່ໄດ້ມີການຂະຫຍາຍຊ່ອງ ເພື່ອຮອງຮັບແຫຼ່ງທຶນໃໝ່ (ໂຄງການ i-GFLL ແລະ ໂຄງການ Urban EBS ). ພ້ອມນັ້ນ, ກໍ່ໄດ້ສ້າງລະບົບບັນຊີໃນຮູບແບບ Excel ເພື່ອສຳຮອງຂໍ້ມູນ (Backup) ໃນການກວດເຊັກບັນຊີຄືນ;
- ໄດ້ຕິດຕາມກວດກາເອກະສານ ແລະ ລົງບັນຊີປະຈຳວັນ ຂອງ ກປສ, ໂຄງການທີ່ໄດ້ຮັບທຶນຈາກ ຄສລ2 ຈຳນວນ 36 ໂຄງການ ແລະ ທຶນ ພາຍໃນ 54 ໂຄງການ ຢ່າງເປັນປົກກະຕິ ພ້ອມທັງເຮັດບົດສະຫຼຸບປະຈຳ 3 ເດືອນ, 6 ເດືອນ ແລະ ປະຈຳປີ ສົ່ງໃຫ້ຜູ້ໃຫ້ທຶນ (ທະນາຄານໂລກ) ແລະ ກົມແຜນການ ແລະ ການເງິນ, ກຊສ;
- ໄດ້ສະໜອງຂໍ້ມູນການເງິນ ປະຈຳປີ 2019 ໃຫ້ຄະນະກວດສອບພາຍໃນ ແລະ ກວດສອບພາຍນອກ ເຊັ່ນ: ບົດລາຍງານແຫລ່ງທຶນ ແລະ ການນຳໃຊ້ທຶນປະຈຳປີ, ບົດລາຍງານແຫລ່ງທຶນ ແລະ ການນຳໃຊ້ທຶນຕາມກິດຈະກຳ, ບົດລາຍງານແຫລ່ງທຶນ ແລະ ການນຳໃຊ້ທຶນຕາມກຸ່ມລາຍຈ່າຍ, ບົດລາຍງານແຫລ່ງທຶນ ແລະ ການນຳໃຊ້ທຶນຕາມແບບຟອມຂອງກວດສອບ, ໃບດຸ່ນດ່ຽງ, ປື້ມຕິດຕາມເງິນສົດ, ໃບກວດນັບເງິນສົດ,ການສົມທຽບບັນຊີສຳຮອງທະນາຄານ, ຕາຕະລາງຕິດຕາມໂຄງການຍ່ອຍ, ເອກະສານຢັ້ງຢືນການຈ່າຍທັງໝົດ ພ້ອມນັ້ນ, ກໍ່ໄດ້ຮ່ວມເຮັດວຽກກັບຄະນະກວດສອບດັ່ງກ່າວ ແລະ ໄດ້ເຮັດບົດບັນທຶກປະຈຳວັນຮ່ວມກັນ.

- ໄດ້ເອົາໃຈໃສ່ ຄຸ້ມຄອງຄ່າໃຊ້ຈ່າຍບໍລິຫານບໍ່ໃຫ້ເກີນ 20% ຕໍ່ປີ ຕາມລະບຽບການ ໂດຍໄດ້ປັບປຸງລະບົບການຄຸ້ມຄອງບໍລິຫານຫ້ອງການ ຊຶ່ງໄດ້ກວດກາຄືນອຸປະກອນຮັບໃຊ້ຕ່າງໆທີ່ເຊື່ອມຄຸນ ຫຼື ໝົດອາຍຸການນຳໃຊ້ (ໃຊ້ໄດ້ແຕ່ບໍ່ມີປະສິດທິຜົນ) ແລະ ຫຼຸດຄ່າໃຊ້ຈ່າຍບໍລິຫານບາງຢ່າງ ທີ່ເຫັນວ່າບໍ່ມີຄວາມຈຳເປັນລົງ. ພ້ອມນັ້ນ, ກໍໄດ້ ປັບປຸງການຄຸ້ມຄອງການເບີກ-ຈ່າຍ ເຄື່ອງໃຊ້ຫ້ອງການ, ຢຸດນຳໃຊ້ເຄື່ອງພິມນ້ອຍລົງຈຳນວນໜຶ່ງ ເນື່ອງຈາກມີອັດຕາການສິ້ນເປືອງນ້ຳເມິກສູງ ແລະ ຫັນມານຳໃຊ້ເຄື່ອງພິມໃຫຍ່ ທີ່ສາມາດພິມໄດ້ຫຼາຍ ແລະ ມີອັດຕາການສິ້ນເປືອງຕ່ຳ, ຫັນປ່ຽນການນຳໃຊ້ເຄື່ອງໃຊ້ ແລະ ສິ່ງອຳນວຍຄວາມສະດວກ ຕາມທິດ ຫ້ອງການສີຂຽວ, ສະອາດ ແລະ ງາມຕາ ຊຶ່ງສະແດງອອກ ຫກປສ ມີຄ່າໃຊ້ຈ່າຍບໍລິຫານໂດຍລວມ ນັບແຕ່ເດືອນ ມັງກອນ-ພະຈິກ 2020 ທັງໝົດຈຳນວນ 0.53 ລ້ານໂດລາ (ຄ່າບໍລິຫານທຶນພາຍໃນ ຈຳນວນ 0.18 ລ້ານໂດລາສະຫະລັດ ແລະ ຄສລ2 ຈຳນວນ 0.35 ລ້ານໂດລາສະຫະລັດ) ຫຼື ເທົ່າກັບ 7,96% ທຽບກັບ ການເບີກຈ່າຍທຶນໃຫ້ໂຄງການຕ່າງໆ ຈຳນວນ 6.65 ລ້ານໂດລາສະຫະລັດ (ທຶນພາຍໃນເບີກຈ່າຍໄດ້ ຈຳນວນ 0.7 ລ້ານໂດລາສະຫະລັດ ແລະ ຄສລ2 ເບີກຈ່າຍໄດ້ ຈຳນວນ 5.95 ລ້ານໂດລາສະຫະລັດ).

### 4.4 ດ້ານການແກ້ໄຂຜົນການກວດສອບ

ສູ້ຊົນແກ້ໄຂໃຫ້ຂາດໂຕ ບັນດາຄຳເຫັນຂອງ ຄະນະກວດສອບພາຍໃນ ແລະ ພາຍນອກ ສຳລັບປີ 2015-2016 ແລະ 3 ເດືອນຂ້າມຜ່ານ (14 ບັນຫາ), ຜົນການກວດສອບ 2017 (11 ບັນຫາ) ແລະ 2018 (8 ບັນຫາ) ພ້ອມທັງເອົາໃຈໃສ່ຄຸ້ມຄອງບໍລິຫານການເງິນໃຫ້ດີຂຶ້ນກວ່າເກົ່າ ເພື່ອປ້ອງກັນບໍ່ໃຫ້ບັນຫາເກີດຂຶ້ນຊ້ຳອີກ ໂດຍສຸມໃສ່ຈັດຕັ້ງປະຕິບັດໜ້າວຽກລຸ່ມນີ້:

- ຫກປສ ໄດ້ດຳເນີນການແກ້ໄຂຜົນການກວດສອບ ໂດຍໄດ້ແຕ່ງຕັ້ງຄະນະຮັບຜິດຊອບ ແກ້ໄຂບັນຫາຕາມຄຳເຫັນການກວດສອບພາຍໃນ ຫກປສ. ອີງຕາມຜົນການກວດສອບຂອງປີ 2019 ເຫັນວ່າບັນຫາທີ່ພົບໃນການກວດສອບຂອງປີຜ່ານມາ (2015-2018) ມີ 34 ບັນຫາ ຊຶ່ງໄດ້ຮັບການແກ້ໄຂຂາດໂຕ 12 ບັນຫາ, ປັບປຸງບໍ່ຂາດໂຕ 12 ແລະ ຍັງບໍ່ໄດ້ຮັບການປັບປຸງ 10 ບັນຫາ ດັ່ງລາຍລະອຽດລຸ່ມນີ້:
  - ສຳລັບຂໍ້ຄົງຄ້າງປີ 2015-2016 ແລະ 3 ເດືອນຂ້າມຜ່ານ ມີທັງໝົດ 14 ບັນຫາ, ໃນນີ້ໄດ້ປັບປຸງຂາດໂຕແລ້ວ 3 ບັນຫາ, ປັບປຸງບໍ່ຂາດໂຕ 6 ບັນຫາ ແລະ ຍັງບໍ່ໄດ້ຮັບການປັບປຸງ 5 ບັນຫາ;
  - ສຳລັບປີ 2017 ຜົນການກວດສອບພົບ 11 ບັນຫາ, ຫກປສ ໄດ້ປັບປຸງຂາດໂຕແລ້ວ 6 ບັນຫາ, ປັບປຸງບໍ່ຂາດໂຕ 5 ບັນຫາ;
  - ສຳລັບປີ 2018 ຜົນການກວດສອບພົບ 9 ບັນຫາ ໃນນີ້ໄດ້ປັບປຸງຂາດໂຕແລ້ວ 3 ບັນຫາ, ໄດ້ປັບປຸງບໍ່ຂາດໂຕ 1 ບັນຫາ ແລະ ຍັງບໍ່ໄດ້ປັບປຸງ 5 ບັນຫາ;
  - ໃນປີ 2019 ໄດ້ກວດພົບມີ 6 ບັນຫາ;
- ພາຍຫຼັງ ໄດ້ຮັບບົດລາຍງານຜົນການກວດສອບປະຈຳປີ 2019 ຂອງ ຄສລ 2 ຈາກພາກສ່ວນກວດສອບພາຍນອກ (PWC), ຫກປສ ໄດ້ສົ່ງໜັງສືເປັນທາງການ ເພື່ອແຈ້ງໃຫ້ບັນດາໂຄງການທີ່ກ່ຽວຂ້ອງຮັບຊາບ ແລະ ດຳເນີນການສຶກສາ, ປັບປຸງແກ້ໄຂໃຫ້ຂາດຕົວ. ພ້ອມນັ້ນ, ກໍ່ໄດ້ຈັດກອງປະຊຸມເຜີຍແຜ່ຜົນການກວດສອບ ໃນຄັ້ງວັນທີ 8 ກໍລະກົດ 2020 ທີ່ຫ້ອງປະຊຸມ ກຊສ ແລະ ໄດ້ແຕ່ງຕັ້ງ

ຄະນະຮັບຜິດຊອບພາຍໃນ ຫກປສ ເພື່ອຕິດຕາມ, ໃຫ້ຄຳແນະນຳການປັບປຸງແກ້ໄຂ ແລະ ລາຍງານຄວາມຄືບໜ້າການແກ້ໄຂຜົນກວດສອບເປັນແຕ່ລະໄລຍະ;

- ເພື່ອເປັນການປັບປຸງປະສິດທິພາບ ແລະ ປະສິດທິຜົນ ໃນການຄຸ້ມຄອງວຽກງານການເງິນ, ຫກປສ ໄດ້ຈັດຝຶກອົບຮົມພາຍໃນໃຫ້ພະນັກງານບັນຊີ ແລະ ການເງິນ ຢ່າງຕໍ່ເນື່ອງ ກ່ຽວກັບກວດກາເອກະສານສະຫຼຸບ ລາຍຮັບ-ລາຍຈ່າຍ ແລະ ການເຮັດບົດລາຍງານການເງິນ ພ້ອມທັງ ກະຕຸກຊຸກຍູ້ໃຫ້ພະນັກງານເພີ່ມສະຕິຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ໃຫ້ສຳເລັດຕາມແຜນການ ແລະ ກຳນົດເວລາ. ນອກຈາກນັ້ນ, ຫກປສ ກໍ່ໄດ້ຈັດຝຶກອົບຮົມໃຫ້ບັນດາໂຄງການທີ່ໄດ້ຮັບທຶນໃໝ່ (ທຶນພາຍໃນ) ຈຳນວນ 6 ໂຄງການ ແລະ ຄສລ2 ຈຳນວນ 2 ໂຄງການ;
- ຫກປສ ໄດ້ແຕ່ງຕັ້ງທີມງານສະເພາະກິດ ໃນການລົງຕິດຕາມ ແລະ ຊ່ວຍແນະນຳໃຫ້ບັນດາໂຄງການທີ່ພົບຄວາມຫຍຸ້ງຍາກໃນການກະກຽມສະຫຼຸບບັນຊີ, ໂຄງການທີ່ຄ້າງສະສາງດົນ ແລະ ການປະກອບເອກະສານຂໍຄ່ຽນເງິນນຳ ຫກປສ ບໍ່ຄົບຖ້ວນ ໂດຍໄດ້ແນະນຳ ກ່ຽວກັບ ການປະກອບເອກະສານສຳລັບແຕ່ລະປະເພດການເບີກຈ່າຍ, ການຕິດຕາມເງິນໃນບັນຊີທະນາຄານ, ການຕິດຕາມເງິນລ່ວງໜ້າ, ການຕິດຕາມ ແລະ ກວດນັບຄັງເງິນສົດ, ການລົງບັນຊີປະຈຳວັນ ແລະ ການປິດບັນຊີປະຈຳເດືອນ ເພື່ອຮັບປະກັນ ໃຫ້ສາມາດສົ່ງບົດລາຍງານການເງິນ ໃຫ້ ຫກປສ ທັນຕາມກຳນົດເວລາ ພ້ອມນັ້ນ ກໍ່ໄດ້ຈັດປະຊຸມປຶກສາຫາລືກັບຜູ້ບໍລິຫານໂຄງການທີ່ເຫັນວ່າຄ້າງສະສາງດົນຈຳນວນ 25 ໂຄງການ (ທຶນພາຍໃນ 15 ແລະ ຄສລ2 ຈຳນວນ 10) ເພື່ອຄົ້ນຄວ້າວິທີການແກ້ໄຂບັນຫາການສະສາງໃຫ້ທັນຕາມກຳນົດເວລາ;
- ເພື່ອແກ້ໄຂຄຳແນະນຳຂອງຄະນະກວດສອບໃຫ້ຂາດໂຕ, ຫກປສ ໄດ້ສ້າງແຜນດຳເນີນງານການແກ້ໄຂຜົນການກວດສອບແຕ່ລະບັນຫາ ໂດຍໄດ້ໄຈ້ແຍກບັນຫາເປັນແຕ່ລະປະເດັນ ວ່າຕິດພັນກັບພາກສ່ວນໃດ, ໂຄງການໃດ ແລະ ໄດ້ມອບຄວາມຮັບຜິດຊອບໃຫ້ແຕ່ລະພະແນກ ພາຍໃນ ຫກປສ ຕິດຕາມການແກ້ໄຂຄຳເຫັນກວດສອບຂອງໂຄງການທີ່ຕິດພັນກັບພາລະບົດບາດຂອງຕົນ.

## 4.5 ດ້ານບຸກຄະລາກອນ

**4.5.1.** ໄດ້ປັບປຸງການປະຕິບັດວຽກງານຂອງພະນັກງານ ຫກປສ ໂດຍຜັນຂະຫຍາຍແຜນປີ 2020 ອອກມາເປັນແຜນລວມຂອງແຕ່ລະພະແນກແບບລະອຽດ ໂດຍວາງໜ້າວຽກຈຸດສຸມ ແລະ ກິດຈະກຳທີ່ຈະຈັດຕັ້ງປະຕິບັດ ພ້ອມກຳນົດຕົວຊີ້ວັດ ແລະ ຄາດໝາຍຜົນສຳເລັດຂອງແຕ່ລະວຽກງານ, ຊຶ່ງແຕ່ລະພະແນກ ໄດ້ກຳນົດວຽກງານຈຸດສຸມດັ່ງນີ້:

- ພະແນກການເງິນ ໄດ້ກຳນົດແຜນວຽກຈຸດສຸມ ປະກອບມີ 8 ວຽກຫລັກ ຄື: 1/ ຝຶກອົບຮົມວຽກງານການຄຸ້ມຄອງການເງິນ ໃຫ້ພະນັກງານພາຍໃນພະແນກ; 2/ ປັບປຸງໂປແກມທີ່ນຳໃຊ້ໃນປະຈຸບັນໃນການຄຸ້ມຄອງການເງິນ ໃຫ້ມີຄວາມສະດວກ ແລະ ຮັບປະກັນຄຸນນະພາບໃນການພິມບົດລາຍງານການເງິນ, 3/ ປັບປຸງໂປແກມເພື່ອສ້າງໜ້າຕ່າງໃໝ່ ໃນການຮັບເອົາທຶນສາກົນໃໝ່; 4/ ພັດທະນາໂປແກມໃໝ່ ຕາມທິດ “ໜຶ່ງ ກປສ ໜຶ່ງ ລະບົບ” ເພື່ອນຳໃຊ້ໃນວຽກງານການຄຸ້ມຄອງການເງິນໃຫ້ມີປະສິດທິພາບ; 5/ ຕິດຕາມ ແລະ ກວດກາການລົງບັນຊີປະຈຳວັນ ຂອງ ໂຄງການທຶນພາຍໃນ ແລະ ທຶນ ຄສລ2 ແລະ ສະຫລຸບລາຍງານເປັນແຕ່ລະໄລຍະ; 6/ ສະໜອງຂໍ້ມູນເອກະສານໃຫ້ ແກ່ການກວດສອບ ພາຍໃນ ແລະ ພາຍ

ນອກ ພ້ອມທັງແກ້ໄຂບັນຫາທີ່ພົບພໍ້; 7/ ຄວບຄຸມງົບປະມານຄ່າໃຊ້ຈ່າຍບໍລິຫານປະຈຳປີບໍ່ໃຫ້ເກີນ 20% ແລະ 8/ ປັບປຸງຄູ່ມືການເງິນ;

- ພະແນກຄຸ້ມຄອງໂຄງການ ໄດ້ກຳນົດແຜນວຽກຈຸດສຸມຂອງພະແນກ ປະກອບມີ 7 ວຽກຫລັກ ຄື: 1/ ທົບທວນ ແລະ ກະກຽມໂຄງການ ເຂົ້າຜ່ານກອງປະຊຸມຄະນະວິຊາການ 4 ຄັ້ງຕໍ່ປີ; 2/ ຝຶກອົບຮົມ ແລະ ສ້າງຄວາມສາມາດ ໃຫ້ກັບໂຄງການຍ່ອຍ ໃນການຈັດຕັ້ງປະຕິບັດວຽກງານຂອງໂຄງການຕາມແຜນທີ່ກຳນົດໄວ້; 3/ ລົງຊຸກຍູ້ວຽກງານໂຄງການຍ່ອຍ ເຊັ່ນ: ການກະກຽມປິດໂຄງການ, ການຂຽນບົດສະເໜີໂຄງການ ແລະ ແນະນຳການແກ້ໄຂບັນຫາທີ່ພົບພໍ້ຈາກການກວດສອບ; 4/ ປັບປຸງຄູ່ມືດຳເນີນງານລວມ ຂອງ ທກປສ; 5/ ກິດຈະກຳວຽກປະສານງານໂຄງການ, ຕິດຕາມ-ປະເມີນຜົນ, ຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ; 6/ ປະສານງານກຸ່ມວຽກໂຄງການ, ຕິດຕາມ-ປະເມີນຜົນ ແລະ ປະສານງານວຽກປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ; 7/ ຕິດຕາມ ແລະ ປະເມີນຜົນໂຄງການຍ່ອຍພາຍໃຕ້ທຶນພາຍໃນ ກ່ຽວກັບການຈັດຕັ້ງປະຕິບັດໂຄງການ.
- ພະແນກບໍລິຫານ ແລະ ຈັດຊື້-ຈັດຈ້າງ ໄດ້ກຳນົດແຜນວຽກຈຸດສຸມ ປະກອບມີ 4 ວຽກຫລັກ ຄື: 1/ ຄຸ້ມຄອງວຽກບໍລິຫານຫ້ອງການທົ່ວໄປ; 2/ ຄຸ້ມຄອງ-ບໍລິຫານ ວຽກງານບຸກຄະລາກອນ. ໃນນັ້ນ, ປະກອບມີ ການປະກອບພະນັກງານ, ການສ້າງຄວາມເຂັ້ມແຂງໃຫ້ພະນັກງານ ການປັບປຸງລະບຽບການ ທກປສ, ການປະເມີນຜົນການປະຕິບັດວຽກງານ, ຊ່ວຍປະສານງານວຽກໂຄງການ ຈີໄອແຊັດ ແລະ ຢູເນັບ; 3/ ວຽກລະດົມທຶນ ແລະ ໂຄສະນາເຜີຍແຜ່ ແລະ 4/ ວຽກຄຸ້ມຄອງການຈັດຊື້-ຈັດຈ້າງ.
- ນອກຈາກ ໄດ້ກຳນົດວຽກຈຸດສຸມໃຫ້ແຕ່ລະພະແນກແລ້ວ, ພະນັກງານແຕ່ລະຄົນທີ່ຢູ່ໃນແຕ່ລະພະແນກ ກໍໄດ້ຮັບການກຳນົດໜ້າວຽກ ແລະ ແບ່ງຄວາມຮັບຜິດຊອບຢ່າງຈະແຈ້ງ ຕາມຄວາມຮູ້ຄວາມສາມາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ຊຶ່ງໄດ້ກຳນົດໃຫ້ພະນັກງານທຸກຄົນຕ້ອງສຶກສາ ແລະ ເຂົ້າໃຈເນື້ອໃນດຳລັດ ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງກອງທຶນປົກປັກຮັກສາສິ່ງແວດລ້ອມ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໜ້າທີ່.
- ໄດ້ສຳເລັດການຈັດຈ້າງຊ່ຽວຊານຕ່າງປະເທດໄລຍະສັ້ນ 1 ທ່ານ ເພື່ອຊ່ວຍວຽກງານ ປະເມີນຜົນໂຄງການ ຄສລ2 ແລະ ຊ່ຽວຊານພາຍໃນໄລຍະສັ້ນ 1 ທ່ານ ເພື່ອປັບປຸງ ແລະ ບຳລຸງຮັກສາໂປແກຣມບັນຊີ ທກປສ.

**4.5.2.** ໄດ້ຈັດຕັ້ງປະຕິບັດ ແຜນສ້າງຄວາມເຂັ້ມແຂງໃຫ້ພະນັກງານ ໄລຍະສັ້ນ ແລະ ໄລຍະຍາວ ປະຈຳປີ 2020 ດັ່ງນີ້:

- ໄດ້ຈັດຕັ້ງປະຕິບັດແຜນງານຝຶກອົບຮົມ 1 ຫລັກສູດຄື: ຫລັກສູດການບັນຊີ - ການເງິນ ໃນເດືອນ ມັງກອນ 2020. ຫລັງຈາກນັ້ນ ທກປສ ໄດ້ໂຈະແຜນການດັ່ງກ່າວໄວ້ ເນື່ອງຈາກ ມີສະພາບການແຜ່ລະບາດຂອງເຊື້ອພະຍາດປອດອັກເສບ (ໂຄວິດ-19) ເຮັດໃຫ້ສະຖາບັນການຮຽນການສອນ ຫລາຍສະຖາບັນ, ຫລາຍອົງກອນ ຢຸດສະໜອງຫລັກສູດການອົບຮົມ ແລະ ການສອນ ຊຶ່ງເຮັດໃຫ້ ທກປສ ບໍ່ສາມາດສົ່ງພະນັກງານໄປຝຶກອົບຮົມນຳສະຖາບັນຕ່າງໆ ຕາມແຜນທີ່ກຳນົດໄວ້. ແຕ່ເຖິງຢ່າງໃດກໍ່ຕາມ ທກປສ ກໍໄດ້ສ້າງຂີດຄວາມສາມາດ ພາຍໃນໂດຍຜ່ານການຝຶກອົບຮົມ ພາຍໃນ ໃນວຽກງານວິຊາການທີ່ກ່ຽວຂ້ອງ ຄື: 1/. ຝຶກອົບຮົມພະນັກງານການເງິນ ກ່ຽວກັບ ການຄຸ້ມຄອງການເງິນ, ການກວດເອກະສານການເງິນໂຄງການ, ການສະຫລຸບການເງິນ ແລະ ການນຳໃຊ້ໂປແກຣມ ບັນຊີ; 2/. ຈັດອົບຮົມ ໃຫ້

ພະນັກງານໃໝ່ຈຳນວນ 11 ທ່ານ ກ່ຽວກັບ ພາບລວມ ຂອງ ກປສ, ລະບຽບການຄຸ້ມຄອງພະນັກງານ, ວຽກງານດ້ານການເງິນ, ວຽກງານດ້ານບໍລິຫານ ແລະ ຈັດຊື້-ຈັດຈ້າງ, ແລະ ວຽກງານດ້ານການຄຸ້ມຄອງໂຄງການ ແລະ ວຽກງານດ້ານການລະດົມທຶນ ແລະ ໂຄສະນາເຜີຍແຜ່.

- ສ້າງຄວາມເຂັ້ມແຂງໃຫ້ບັນດາໂຄງການຍ່ອຍ ໂດຍການຈັດຝຶກອົບຮົມ ກ່ຽວກັບ ການຄຸ້ມຄອງໂຄງການ ປະກອບມີຄື: 1/ຝຶກອົບຮົມໃຫ້ ພະນັກງານໂຄງການ ຂອງ ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ໂຄງການ ຂອງ ກົມທີ່ດິນ, ກຊສ ກ່ຽວກັບ ການຄຸ້ມຄອງ ການເງິນ, ການດຳເນີນໂຄງການ ແລະ ວຽກງານ ການຈັດຊື້-ຈັດຈ້າງ ຂອງ ໂຄງການ ພ້ອມທັງການຕິດຕາມ ແລະ ປະເມີນຜົນ; 2/ ຝຶກອົບຮົມ ວຽກງານ ຄຸ້ມຄອງໂຄງການ, ການເງິນ ແລະ ຈັດຊື້-ຈັດຈ້າງ ໃຫ້ ກົມທີ່ດິນ, ກົມກວດກາ, ກົມຈັດຕັ້ງ, ກົມຊັບພະຍາກອນນ້ຳ ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມນະຄອນຫລວງ ວັນທີ 3-5 ມິຖຸນາ2020 ຜູ້ເຂົ້າຮ່ວມທັງໝົດ 38 ທ່ານ/ຍິງ 17 ທ່ານ; 3/ ຝຶກອົບຮົມວຽກງານຕິດຕາມປະເມີນຜົນໂຄງການ ໃຫ້ 2 ແຂວງ: ບໍລິຄຳໄຊ ແລະ ຫລວງພະບາງ ໃນວັນທີ 6-8 ກໍລະກົດ 2020 ລວມມີ 10 ໂຄງການ ຜູ້ເຂົ້າຮ່ວມ 30 ທ່ານ, ພາກໃຕ້ມີ 9 ໂຄງການ ຜູ້ເຂົ້າຮ່ວມທັງໝົດ 27 ທ່ານ.

**4.5.3.** ໄດ້ດຳເນີນການຕິດຕາມ ແລະ ປະເມີນຜົນງານຂອງພະນັກງານປະຈຳປີ ເຊັ່ນ:

- ສຳເລັດ ການປະເມີນຜົນງານ 5 ປີ (2016-2020) ຂອງພະນັກງານ ຫກປສ ສົ່ງໃຫ້ກົມຈັດຕັ້ງ ແລະ ພະນັກງານ, ກຊສ ເພື່ອສະເໜີຂໍການຍ້ອງຍໍຜົນງານ 5 ປີ ໃນແຕ່ລະລະດັບ;
- ສຳເລັດການປະເມີນຜົນການປະຕິບັດວຽກງານ ພະນັກງານ-ລັດຖະກອນປະຈຳປີ 2020 ສົ່ງໃຫ້ກົມຈັດຕັ້ງ ແລະ ພະນັກງານ, ກຊສ ເພື່ອສະເໜີຂໍການຍ້ອງຍໍປະຈຳປີ;
- ສຳເລັດການປະເມີນຜົນ ການປະຕິບັດວຽກງານປະຈຳປີ 2020 ຂອງ ພະນັກງານ ຫກປສ ເພື່ອພິຈາລະນາສືບຕໍ່ສັນຍາ ຫຼື ຢຸດສັນຍາ, ໃຫ້ການຊົມເຊີຍຍ້ອງຍໍ ແລະ ສົ່ງເສີມໂດຍການໃຫ້ທຶນຍົກລະດັບຄຸນວຸດທິໃນດ້ານວິຊາການ ຕາມລະບຽບຄຸ້ມຄອງບຸກຄະລາກອນ ແລະ ສອດຄ່ອງກັບບູລິມະສິດຂອງ ຫກປສ;
- ສຳເລັດ ການປະເມີນຜົນໄລຍະທົດລອງງານ ພະນັກງານໃໝ່ ຈຳນວນ 6 ຄົນ.

### 4.6 ດ້ານການລະດົມທຶນ

ຫກປສ ໄດ້ຂຶ້ນແຜນເກັບລາຍຮັບ ໃນເບື້ອງຕົ້ນມູນຄ່າ 11.9 ລ້ານໂດລາສະຫະລັດ ແລະ ໄດ້ດັດແກ້ໃນ 6 ເດືອນທ້າຍປີ ເປັນ ມູນຄ່າ 12.07 ລ້ານໂດລາສະຫະລັດ (ທຶນພາຍໃນ 1.3 ລ້ານໂດລາສະຫະລັດ ແລະ ທຶນສາກົນ 10.76 ລ້ານໂດລາສະຫະລັດ). ຜ່ານການຈັດຕັ້ງປະຕິບັດ ສາມາດເກັບລາຍຮັບໄດ້ 8.97 ລ້ານໂດລາສະຫະລັດ ຫຼື 74% ຂອງແຜນການ (ແຜນດັດແກ້) ຊຶ່ງໃນນັ້ນ, ລາຍຮັບທຶນພາຍໃນ ມີ 1.55 ລ້ານໂດລາສະຫະລັດ (ລວມມີລາຍຮັບຈາກດອກເບ້ຍເງິນຝາກ ແລະ ດອກເບ້ຍເງິນກູ້ ຈຳນວນ 0.33 ລ້ານໂດລາສະຫະລັດ, ລາຍຮັບຈາກທຶນປະກອບສ່ວນພັນທະສິ່ງແວດລ້ອມ ຂອງໂຄງການລົງທຶນພັດທະນາໄຟຟ້າ ແລະ ບໍ່ແຮ່ ຈຳນວນ 1.22 ລ້ານໂດລາສະຫະລັດ) ແລະ ລາຍຮັບຈາກທຶນສາກົນ 7.42 ລ້ານໂດລາສະຫະລັດ (ລາຍຮັບຈາກທະນາຄານໂລກ ຈຳນວນ 6.11 ລ້ານໂດລາສະຫະລັດ, ຈາກ GIZ 0.8 ລ້ານໂດລາສະຫະລັດ ແລະ ຈາກ UNEP 0.5 ລ້ານໂດລາສະຫະລັດ). ລາຍລະອຽດມີໃນຕາຕະລາງ 1.

**ຕາຕະລາງ 1: ຄາດຄະເນແຫຼ່ງລາຍຮັບໃນປີ 2020**

| ແຫຼ່ງລາຍຮັບຕົ້ນຕໍ | ຄາດຄະເນລາຍຮັບ ແຜນປີ 2020 (ດັດແກ້ 6 ເດືອນທ້າຍປີ 2020) | | ລາຍຮັບຕົວຈິງ 2020 | | |
|---|---|---|---|---|---|
| | ກີບ | ໂດລາສະຫະລັດ | ກີບ | ໂດລາ ສະຫະລັດ | %ໂດລາ ສະຫະລັດ |
| **I. ລາຍຮັບ ພາຍໃນ** | **11,089,000,000.00** | **1,304,588** | **14,010,294,608** | **1,553,009** | **119%** |
| ດອກເບ້ຍຈາກຕົ້ນທຶນ 5.5 ລ້ານໂດລາ ທີ່ຝາກໄວ້ | 2,689,300,000.00 | 316,388 | 3,003,495,833 | 331,914 | **105%** |
| ລາຍຮັບ-ດອກເບ້ຍ ຈາກ ເງິນປ່ອຍກູ້ | 8,100,000.00 | 953 | 18,437,500 | 2,289 | **240%** |
| ທຶນປະກອບສ່ວນຈາກ ໂຄງການບໍ່ແຮ່ | 4,050,000,000.00 | 476,471 | 5,658,867,394 | 624,350 | **131%** |
| ທຶນປະກອບສ່ວນຈາກ ໂຄງການໄຟຟ້າ | 4,341,600,000.00 | 510,776 | 5,329,493,881 | 594,456 | **116%** |
| **II. ລາຍຮັບ ສາກົນ** | **87,200,671,014.00** | **10,765,515** | **56,272,464,400** | **7,425,129** | **69%** |
| ທຶນຈາກທະນາຄານໂລກ | 87,200,671,014.00 | 10,765,515 | 56,272,464,400 | 6,116,592 | **57%** |
| ທຶນຈາກ GIZ | | | | 808,537 | |
| ທຶນຈາກ UNEP | | | | 500,000 | |
| **ລວມທັງໝົດ (I+II)** | **98,289,671,014.00** | **12,070,103** | **70,282,759,008** | **8,978,138** | **74%** |

### 4.7 ດ້ານການສື່ສານ

ໃນ ປີ 2020 ກປສ ໄດ້ສືບຕໍ່ວຽກງານດ້ານການສື່ສານຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ໃນການປຸກຈິດສໍານຶກ ແລະ ໂຄສະນາເຜີຍແຜ່ບັນດານິຕິກໍາ ແລະ ເອກະສານທີ່ກ່ຽວຂ້ອງກັບ ວຽກງານຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມໃຫ້ທົ່ວສັງຄົມ ມີຄວາມຮັບຮູ້, ເຂົ້າໃຈ ແລະ ມີສ່ວນຮ່ວມໃນການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ແນໃສ່ການປະກອບສ່ວນເຂົ້າໃສ່ການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ ໂດຍຜ່ານສື່ຕ່າງໆເປັນຕົ້ນ: ໜັງສືພິມ, ວິທະຍຸ, ໂທລະພາບ, ເວັບໄຊ ແລະ ສື່ສັງຄົມອອນລາຍ.

ໄດ້ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ຈັດກິດຈະກໍາປຸກຈິດສໍານຶກ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມໃຫ້ນ້ອງນັກຮຽນທີ່ມັດທະຍົມສຶກສາຕອນຕົ້ນດອນສະຫວ່າງ ເມືອງຫາດຊາຍຟອງ ແລະ ເຂົ້າຮ່ວມງານວາງສະແດງຂອງແນວລາວສ້າງຊາດກ່ຽວກັບໃນການສົ່ງເສີມ ແລະ ປົກປ້ອງສິດຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ, ພ້ອມກັນນີ້ ຍັງໄດ້ລົງໂຄສະນາເຜີຍແຜ່ວັນສໍາຄັນຕ່າງໆເຊັ່ນ ວັນສິ່ງແວດລ້ອມໂລກ, ວັນສັດປ່າ, ວັນນໍ້າໂລກ ແລະ ອື່ນໆ. ແຕ່ເນື່ອງຈາກສະຖານະການແຜ່ລະບາດຂອງພະຍາດລະບາດໂຄວິດ 19 ເຮັດໃຫ້ຕ້ອງໄດ້ງົດ ແລະ ເລື່ອນບາງກິດຈະກໍາທີ່ວາງໄວ້ໃນແຜນເບື້ອງຕົ້ນ. ຫກປສ ກໍ່ໄດ້ປັບປຸງວິທີການ ຫັນມາສຸມໃສ່ການລົງສື່ໂຄສະນາອອນລາຍເຊັ່ນ: ເວັບໄຊ, Facebook, ວິທະຍຸ ແລະ ອື່ນໆ, ຊຶ່ງໄດ້ຈັດຕັ້ງປະຕິບັດດັ່ງນີ້:

- ສຳເລັດຮ່າງວາລະສານ 2 ສະບັບ ແລະ ກະກຽມດຳເນີນການຈັດພິມ;
- ຕາມແຜນການ ປີ 2020 ຈະປະຕິບັດແຜນກິດຈະກຳການໂຄສະນາຮ່ວມກັບພາກສ່ວນກ່ຽວຂ້ອງໃຫ້ໄດ້ 4 ຄັ້ງ/ປີ. ຜ່ານການປະຕິບັດຕົວຈິງແມ່ນສຳເລັດ 100% ໃນນັ້ນໄດ້ຈັດກິດຈະກຳ ຄື:
    1. ໄດ້ຈັດກິດຈະກຳປຸກຈິດສຳນຶກການປົກປັກຮັກສາສິ່ງແວດລ້ອມ ໃຫ້ນ້ອງນັກຮຽນທີ່ໂຮງຮຽນມັດທະຍົມຕອນຕົ້ນດອນສະຫວ່າງ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ ຄັ້ງວັນທີ 28 ກຸມພາ 2020;
    2. ຮ່ວມຈັດງານວາງສະແດງຜົນງານຂອງ ກປສ ໃນງານພິທີປະກາດໄຂການຈັດຕັ້ງປະຕິບັດທົດລອງກ່ຽວກັບວຽກງານ ບ້ານຂຽວ ສະອາດ ງາມຕາ ຂອງໂຄງການ ສ້າງຄວາມເຂັ້ມແຂງໃຫ້ແນວລາວສ້າງຊາດ ໃນວັນທີ 21 ກຸມພາ 2020 ທີ່ສູນການຄ້າພາກຊັນ;
    3. ຮ່ວມມືກັບສະຫະພັນແມ່ຍິງ ກຊສ ຈັດກອງປະຊຸມວິທະຍາສາດ ໃນຫົວຂໍ້ "ການສົ່ງເສີມບົດບາດຍິງ-ຊາຍ ໃນວຽກງານປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ" ພ້ອມທັງ ການໄປທັດສະນະ ປ່າສະຫງວນ, ສວນຜັກປອດສານພິດ ແລະ ຫັດຖະກຳ ທີ່ເມືອງປາກງື່ມ, ນະຄອນຫຼວງວຽງຈັນ ໃນວັນທີ 12 ແລະ 14 ພະຈິກ 2020;
    4. ຮ່ວມມືກັບກົມກົມສິ່ງແວດລ້ອມ, ກຊສ ຈັດກິດຈະກຳປຸກຈິດສຳນຶກການປົກປັກຮັກສາສິ່ງແວດລ້ອມ ໃນຫົວຂໍ້:"ການຈັດການຂີ້ເຫຍື້ອ" ທີ່ໂຮງຮຽນປະຖົມສົມບູນອາກາດ ແລະ ໂຮງຮຽນປະຖົມສົມບູນໂພນພະເນົາ, ນະຄອນຫຼວງວຽງຈັນ, ໃນວັນທີ 7-8 ທັນວາ 2020.
- ປັບປຸງ ແລະ ສ້າງສື່ສິ່ງພິມຕ່າງໆ ເພື່ອເປັນການເຜີຍແຜ່ຜົນງານຂອງ ກປສ ແລະ ຂໍ້ມູນຂ່າວສານກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ໃນວັນສຳຄັນຕ່າງໆ ໄດ້ສຳເລັດ 80-90%, ຊຶ່ງໃນນັ້ນ ໄດ້ສ້າງໂປສເຕີ້, ຜະລິດຖົງຜ້າ ແລະ ປ້າຍຫ້ອຍທາງ ເພື່ອໂຄສະນາເຜີຍແຜ່ ວັນປູກຕົ້ນໄມ້ແຫ່ງຊາດ, ວັນສິ່ງແວດລ້ອມແຫ່ງຊາດ ແລະ ວັນສິ່ງແວດລ້ອມໂລກ ໃນວັນ 5 ມິຖຸນາ 2020. ສາຍວິດີໂອສັ້ນ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ຜ່ານ ຈໍ ແອວອີດີ ທີ່ປະຕູໄຊ 1 ຄັ້ງຕໍ່ມື້ (ແຕ່ເດືອນ ມັງກອນ ຫາ ມີນາ ປີ 2020), ລົງໂຄສະນາຜ່ານ ວິທະຍຸ 3 ຄື້ນ ຈຳນວນ 1,702 ຄັ້ງ ໃນການປູກຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ພ້ອມນັ້ນ ຍັງໄດ້ ເຜີຍແຜ່ ຂໍ້ມູນຂ່າວສານກ່ຽວກັບການຈັດຕັ້ງປະຕິບັດວຽກງານ ຂອງ ກປສ ແລະ ໂຄສະນາວັນສຳຄັນຕ່າງໆກ່ຽວກັບວຽກງານສິ່ງແວດລ້ອມ ຜ່ານໜັງສືພິມ ຈຳນວນ 24 ຄັ້ງ, ໂທລະພາບ 9 ຄັ້ງ, ເວັບໄຊ ຈຳນວນ 47 ຄັ້ງ ແລະ ເຟດບຸກ ຈຳນວນ 47 ຄັ້ງ;
- ໄດ້ເຊັນສັນຍາຮ່ວມມືກັບ 2 ພາກສ່ວນ ຄື: (1) ເຊັນບົດບັນທຶກຄວາມເຂົ້າໃຈໃນການຮ່ວມມືການຈັດຕັ້ງປະຕິບັດວຽກງານ ສົ່ງເສີມບົດບາດຍິງ-ຊາຍ ໃນການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລະຫວ່າງ ຫກປສ ແລະ ສະຫະພັນແມ່ຍິງ ກຊສ ຄັ້ງວັນທີ 29 ຕຸລາ 2020; (2) ເຊັນບົດບັນທຶກຄວາມເຂົ້າໃຈການຮ່ວມມື ໃນການສົ່ງເສີມປຸກຈິດສຳນຶກ ແລະ ສ້າງເຄືອຂ່າຍກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ການເຕີບໂຕສີຂຽວ ລະຫວ່າງ ຫກປສ ແລະ ກົມສິ່ງແວດລ້ອມ, ກຊສ ຄັ້ງວັນທີ 11 ພະຈິກ 2020;
- ໃນປີ 2020 ກປສ ໄດ້ສືບຕໍ່ຈັດຕັ້ງປະຕິບັດ ໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ ສປປ ລາວໄລຍະ 2 ທີ່ທະນາຄານໂລກໃຫ້ທຶນ. ໃນການຈັດຕັ້ງປະຕິບັດໂຄງການໄດ້ມີການແລກປ່ຽນປະສົບປະການ ແລະ ປັບປຸງການປະສານງານ, ການຮ່ວມກັບບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ໂດຍຈັດແບ່ງກຸ່ມໂຄງການທີ່ໄດ້ຮັບທຶນ ຄສລ2 ຊຶ່ງແບ່ງອອກເປັນ 4 ກຸ່ມຄື: ກຸ່ມຄຸ້ມຄອງປ່າສະຫງວນ, ກຸ່ມບັງຄັບໃຊ້

ກົດໝາຍ, ກຸ່ມວາງແຜນສິ່ງແວດລ້ອມ ແລະ ສ້າງຄວາມເຂັ້ມແຂງ ຝຶກອົບຮົມໃຫ້ພະນັກງານ (ມຊ ແລະ ອົງການອື່ນໆ). ນອກນັ້ນ ກປສ ຍັງໄດ້ອຳນວຍຄວາມສະດວກໃຫ້ບັນລຸການລົງນາມບົດບັນທຶກເຂົ້າໃຈ ລະຫວ່າງ ກຊສ ແລະ ມຊ;

- ໄດ້ຮ່ວມມືກັບອົງການຈັດຕັ້ງສາກົນຕ່າງໆ ເຊັ່ນ: ປະສານງານ ແລະ ເຮັດວຽກຮ່ວມກັບອົງການ GIZ ໃນການກະກຽມໂຄງການ ຊຶ່ງໄດ້ຖືກຮັບຮອງ ແລະ ເລີ່ມຈັດຕັ້ງປະຕິບັດໂຄງການ "ແຜນງານສ້າງຄວາມເຂັ້ມແຂງ ໃນວຽກງານປ່າໄມ້, ຄຸ້ມຄອງປ່າໄມ້ແບບພູມມີທັດ ແລະ ສົ່ງເສີມຊີວິດການເປັນຢູ່ (I-GFLL)"; ໄດ້ຮ່ວມມືກັບອົງການ UNEP ເພື່ອເລີ່ມຈັດຕັ້ງປະຕິບັດໂຄງການສ້າງຄວາມທົນທານຂອງປະຊາກອນໃນຕົວເມືອງ ເພື່ອປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໂດຍການຄຸ້ມຄອງ ແລະ ນຳໃຊ້ຖ່າແຮງຂອງລະບົບນິເວດ. ພ້ອມນັ້ນ, ກໍ່ໄດ້ປະກອບສ່ວນຢ່າງຕັ້ງໜ້າກັບຂະແໜງການທີ່ກ່ຽວຂ້ອງຂອງພາກລັດທີ່ສຳຄັນ ເຊັ່ນ: ກົມນະໂຍບາຍຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກົມປ່ຽນແປງດິນຟ້າອາກາດ ແລະ ກົມນະໂຍບາຍ ແລະ ແຜນພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອເລີ່ມການເຊື່ອມໂຍງກັບຂະແໜງການທີ່ສຳຄັນ. ໄດ້ໂຄສະນາເຜີຍແຜ່ ຜ່ານວິທະຍຸ ແລະ ສື່ຕ່າງໆ ພ້ອມທັງສົ່ງເສີມການມີສ່ວນຮ່ວມ ແລະ ການປຸກຈິດສຳນຶກ ກ່ຽວກັບຍຸດທະສາດການປ່ຽນແປງດິນຟ້າອາກາດ ແລະ ແຜນງານ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ.
- ຕາມແຜນການປີ 2020 ແມ່ນເຂົ້າຮ່ວມກອງປະຊຸມແລກປ່ຽນບົດຮຽນກັບສາກົນຢ່າງນ້ອຍ 2 ຄັ້ງ. ເນື່ອງຈາກ ການແຜ່ລະບາດຂອງພະຍາດ COVID-19 ຊຶ່ງມີຄວາມຈຳກັດໃນການເດີນທາງ ແລະ ປະຊຸມ, ຫກປສ ກໍໄດ້ເຂົ້າຮ່ວມແລກປ່ຽນບົດຮຽນ ຜ່ານວິດີໂອຄອນຟຣິເລນ ສຳເລັດຕາມເປົ້າໝາຍ 2 ຄັ້ງ ຄື:
    1. ເຂົ້າຮ່ວມກອງປະຊຸມ ສະພາມົນຕີ ຄັ້ງທີ 58 ຂອງ ກອງທຶນສິ່ງແວດລ້ອມໂລກ (GEF) ຄັ້ງວັນທີ 2-3 ມິຖຸນາ 2020 (VDO conference) ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ບົດຮຽນທີ່ຖອດຖອນໄດ້ໃນການຈັດຕັ້ງປະຕິບັດງົບປະມານ GEF7 ແລະ ສະເໜີບູລິມະສິດຄວາມຕ້ອງການ ຂອງ ສປປ ລາວ ໃຫ້ແກ່ກອງທຶນດັ່ງກ່າວ;
    2. ເຂົ້າຮ່ວມກອງປະຊຸມ ເຜີຍແຜ່ຍຸດທະສາດ ກ່ຽວກັບຜົນກະທົບຂອງພະຍາດລະບາດ COVID 19 ໃນວຽກງານປົກປັກຮັກສາສິ່ງແວດລ້ອມ ໃນຄັ້ງວັນທີ 7 ຕຸລາ 2020 (VDO conference) ເພື່ອແລກປ່ຽນບົດຮຽນ ແລະ ສິ່ງທ້າທາຍເນື່ອງຈາກຜົນກະທົບຂອງພະຍາດລະບາດດັ່ງກ່າວ ໃນການກະກຽມ ແລະ ຈັດຕັ້ງປະຕິບັດໂຄງການທີ່ຮັບທຶນຈາກ ກອງທຶນສິ່ງແວດລ້ອມໂລກ (GEF).

### 4.8 ດ້ານການສະໜອງທຶນ

ໃນການຈັດຕັ້ງປະຕິບັດແຜນການສະໜອງທຶນ ຮອດເດືອນ 11 ປີ 2020 (ມັງກອນ ຫາ ພະຈິກ) ສາມາດປະຕິບັດແຜນໄດ້ດັ່ງນີ້:

- ບ້ວງທຶນ ຄສລ 2 ສາມາດເບີກຈ່າຍໄດ້ 5.95 ລ້ານໂດລາສະຫະລັດ ຫຼື 55.29 % ທຽບໃສ່ແຜນທີ່ວາງໄວ້ປີ 2020 ຈຳນວນ 10.76 ລ້ານໂດລາສະຫະລັດ;

- ບ້ວງທຶນພາຍໃນ ໄດ້ຂຶ້ນແຜນງົບປະມານເບື້ອງຕົ້ນ ສຳລັບປີ 2020 ຈຳນວນ 2.02 ລ້ານໂດລາສະຫະລັດ. ຜ່ານການຈັດຕັ້ງປະຕິບັດແຜນ 6 ເດືອນຕົ້ນປີ ໄດ້ມີການດັດແກ້ງົບປະມານລົງມາເປັນ 1.01 ລ້ານໂດລາສະຫະລັດ. ຮອດ 30 ເດືອນພະຈິກ 2020 ສາມາດເບີກຈ່າຍໄດ້ ຈຳນວນ 0.7 ລ້ານໂດລາສະຫະລັດ ຫຼື 69.30% ທຽບໃສ່ແຜນດັດແກ້.

❖ **ການສະໜອງທຶນພາຍໃນ**

ປີ 2020 ໄດ້ຂຶ້ນແຜນງົບປະມານຈຳນວນ 13.461.000.000 ກີບ (ສິບສາມຕື້ສີ່ຮ້ອຍຫົກສິບເອັດລ້ານກີບ) ສຳລັບ 6 ຮ່ວງທຶນ ເພື່ອສະໜອງທຶນໃຫ້ພາກສ່ວນຕ່າງໆ. ແຕ່ຜ່ານການຈັດຕັ້ງປະຕິບັດຕົວຈິງ ໄດ້ມີການດັດແກ້ງົບປະມານໃນ 6 ເດືອນທ້າຍປີ ມາເປັນ 8.510.000.000 ກີບ (ແປດຕື້ຫ້າຮ້ອຍສິບລ້ານກີບ). ໃນປີ 2020 ມີໂຄງການທີ່ໄດ້ຮັບທຶນທັງໝົດ 54 ໂຄງການ, ໃນນີ້ ໄດ້ປິດໂຄງການໃນປີ 2020 ມີ 5 ໂຄງການ (PICE 152, PICE 153. PICE 154, CBI 13, PC 90) ແລະ ໄດ້ເຊັນສັນຍາໃໝ່ 2 ໂຄງການ (ໂຄງການແກ້ໄຂບັນຫາລະຫວ່າງຄົນກັບຊ້າງປ່າ ຢູ່ແຂວງວຽງຈັນ ແລະ ແຂວງອຸດົມໄຊ - CBI 18 ແລະ ໂຄງການສົ່ງເສີມ ແລະ ສະໜັບສະໜູນໃນການສ້າງສອນພຶກສາສາດເພື່ອໃຫ້ມີຄວາມຍືນຍົງທາງດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ - PICE 158) ສາມາດຈັດຕັ້ງປະຕິບັດຕົວຈິງລວມທັງໝົດໄດ້ 5.991.485.104 ກີບ ເທົ່າກັບ 70% ຊຶ່ງລາຍລະອຽດແຕ່ລະຮ່ວງທຶນມີດັ່ງນີ້:

**ຕາຕະລາງ 2: ສັງລວມການສະໜອງງົບປະມານໄປຕາມ 6 ຮ່ວງທຶນ**

| ລາຍການ | ຈຳນວນ ໂຄງການ | ງົບປະມານ (ກີບ) | ປະຕິບັດຕົວຈິງ (ກີບ) | ເປີເຊັນ % |
|---|---|---|---|---|
| ຮ່ວງທຶນ ດ້ານນະໂຍບາຍ | 20 | 1.700.000.000 | 1.630.509.050 | 96% |
| ຮ່ວງທຶນ ດ້ານຊີວະນາໆພັນ | 14 | 1.280.000.000 | 1.896.480.510 | 148% |
| ຮ່ວງທຶນດ້ານສິ່ງແວດລ້ອມ | 4 | 2.130.000.000 | 499.063.444 | 23% |
| ຮ່ວງທຶນ ດ້ານດິນ | 8 | 1.275.000.000 | 1.376.928.500 | 108% |
| ຮ່ວງທຶນ ດ້ານນ້ຳ | 8 | 1.275.000.000 | 588.503.600 | 46% |
| ຮ່ວງທຶນປ່ຽນແປງດິນຟ້າອາກາດ | 0 | 850.000.000 | 0 | 0% |
| **ລວມທັງໝົດ** | **54** | **8.510.000.000** *ງົບປະມານດັດແກ້* | **5.991.485.104** | **70%** |

*ໝາຍເຫດ: ຕົວເລກປະຕິບັດຕົວຈິງຮອດ ວັນທີ 30/11/2020*

❖ **ສະຫຼຸບຜົນສໍາເລັດການຈັດຕັ້ງປະຕິບັດແຜນການການສະໜອງທຶນ ຂອງ ກປສ ຕາມແຕ່ລະ ຮ່ວງທຶນ**

ການສະໜອງທຶນ ຂອງ ກປສ ກວມເອົາ 6 ຮ່ວງທຶນ ໂດຍສຸມໃສ່ ການສ້າງຄວາມເຂັ້ມແຂງໃຫ້ພາກສ່ວນຕ່າງໆໃນຂັ້ນສູນກາງ ແລະ ທ້ອງຖິ່ນ ເຊັ່ນ: ກຊສ, ພສຊ, ຫຊສ, ຄະນະວິທະຍາສາດປ່າໄມ້, ຄະນະວິທະຍາສາດສັງຄົມ, ຄະນະວິທະຍາສາດທໍາມະຊາດ, ຄະນະວິທະຍາສາດສິ່ງແວດລ້ອມ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດຂອງມະຫາວິທະຍາໄລແຫ່ງຊາດ, ສະຖາບັນການເມືອງ-ການປົກຄອງ, ກົມປ່າໄມ້, ກົມກວດກາປ່າໄມ້, ແລະ ພກປ ເພື່ອຈັດຕັ້ງປະຕິບັດວຽກງານການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ລວມທັງການຄຸ້ມຄອງ ປ່າສະຫງວນ, ປ່າປ້ອງກັນ ແລະ ຊີວະນາໆພັນ ພ້ອມກັນນັ້ນ ກໍ່ໄດ້ສຸມໃສ່ການຄຸ້ມຄອງ ປົກປັກຮັກສາສິ່ງແວດລ້ອມ ໃນໂຄງການພັດທະນາຕ່າງໆ ເປັນຕົ້ນ ການຄຸ້ມຄອງທີ່ດິນ, ຊັບພະຍາກອນນໍ້າ, ສານເຄມີ, ແລະ ສິ່ງເສດເຫຼືອ.

❖ **ຮ່ວງທຶນ ດ້ານນະໂຍບາຍ ແລະ ສ້າງຄວາມເຂັ້ມແຂງ (PICE)**

ການສະໜອງທຶນ ຮ່ວງທຶນ PICE ໃນປີ 2020 ແມ່ນໄດ້ໃຫ້ການສະໜັບສະໜູນພາກສ່ວນຕ່າງໆ ໃນຂັ້ນສູນກາງ, ແຂວງ ແລະ ເມືອງ ຈໍານວນ 15 ໂຄງການ ເປັນມູນຄ່າທັງໝົດ 2.29 ຕື້ກີບ ເພື່ອສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງ ແລະ ພະນັກງານໃນການສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ແຜນດໍາເນີນງານ ແລະ ນິຕິກໍາ ດ້ານສິ່ງແວດລ້ອມ, ການຈັດຕັ້ງປະຕິບັດວຽກງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສ້າງຈິດສໍານຶກດ້ານສິ່ງແວດລ້ອມ ແລະ ປັບປຸງສະຖານທີ່ເຮັດວຽກຢູ່ໃນຂັ້ນທ້ອງຖິ່ນ. ພ້ອມນັ້ນ ກໍຊຸກຍູ້ໃຫ້ໂຄງການທີ່ໃກ້ຈະສິ້ນສຸດສັນຍາ ແລະ ໄດ້ຮັບຜົນສໍາເລັດ ຈໍານວນ 3 ໂຄງການ (ແຂວງບໍ່ແກ້ວ, ອັດຕະປື ແລະ ເຊກອງ) ເພື່ອກະກຽມສະຫຼຸບລາຍງານ, ປະເມີນຜົນ ແລະ ປິດໂຄງການຕາມລະບຽບຂັ້ນຕອນຂອງ ກປສ ຊຶ່ງໄດ້ ສະໜອງທຶນໃນການຈັດຕັ້ງປະຕິບັດວຽກງານ ດັ່ງນີ້:

(i) ສືບຕໍ່ສະໜອງທຶນສ້າງຄວາມເຂັ້ມແຂງໃຫ້ ພຊສ ດ້ານການຄຸ້ມຄອງການສຶກສາເບື້ອງຕົ້ນຜົນກະທົບຕໍ່ສິ່ງແວດລ້ອມ (IEE) ໃນ 7 ແຂວງ (ແຂວງ ບໍ່ແກ້ວ, ໄຊຍະບູລີ, ອຸດົມໄຊ, ຜົ້ງສາລີ, ຈໍາປາສັກ, ເຊກອງ ແລະ ອັດຕະປື) ເພື່ອລົງຕິດຕາມກວດກາການຈັດຕັ້ງປະຕິບັດແຜນຄຸ້ມຄອງສິ່ງແວດລ້ອມຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆແນໃສ່ເຮັດໃຫ້ໂຄງການລົງທຶນຕ່າງໆມີການຄຸ້ມຄອງສິ່ງແວດລ້ອມທີ່ດີ, ມີຜົນກະທົບໜ້ອຍຕໍ່ສິ່ງແວດລ້ອມ ແລະ ມີການພັດທະນາທີ່ຍືນຍົງ;

(ii) ສືບຕໍ່ສະໜອງທຶນໃຫ້ ພຊສ ແຂວງ ໄຊຍະບູລີ, ອຸດົມໄຊ ແລະ ຜົ້ງສາລີ ໃນການຄວບຄຸມ ແລະ ຕິດຕາມກວດກາ ການນໍາໃຊ້ ສານເຄມີ (ຢາຂ້າຫຍ້າ, ຢາປາບສັດຕູພືດ ໂດຍສະເພາະການແຜ່ລະບາດຂອງຕັກກະແຕນຢູ່ແຂວງຜົ້ງສາລີ);

(iii) ສືບຕໍ່ສະໜອງທຶນໃຫ້ມະຫາວິທະຍາໄລແຫ່ງຊາດ (ຄະນະວິທະຍາສາດສິ່ງແວດລ້ອມ) ເພື່ອຍົກລະດັບຄວາມສາມາດ ໃນການວາງແຜນ ແລະ ຄຸ້ມຄອງສິ່ງແວດລ້ອມເມືອງເຟືອງ ແຂວງວຽງຈັນ ແລະ ຄະນະວິທະຍາສາດທໍາມະຊາດ;

(iv) ສືບຕໍ່ສະໜອງທຶນໃຫ້ສະຖາບັນຄົ້ນຄ້ວາວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ໃນການສຶກສາການປູກມອນລ້ຽງມ້ອນ ຢູ່ນະຄອນຫຼວງວຽງຈັນ;

(v) ສ້າງຄວາມເຂັ້ມແຂງໃຫ້ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ (ສ້ອມແປງຫ້ອງການ ເມືອງຂວາ ແຂວງຜົ້ງສາລີ).

### ❖ ຮ່ວງທຶນດ້ານຊີວະນາໆພັນ (CBI)

ການສະໜອງທຶນ ຮ່ວງທຶນ CBI ໃນໄລຍະຜ່ານມາ ແມ່ນໄດ້ໃຫ້ການສະໜັບສະໜູນພາກສ່ວນຕ່າງໆໃນຂັ້ນສູນກາງ, ແຂວງ ແລະ ເມືອງ ຈຳນວນ 13 ໂຄງການ ເປັນມູນຄ່າທັງໝົດ 2.11 ຕື້ກີບ ເພື່ອສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງປ່າສະຫງວນ, ປ່າປ້ອງກັນ ແລະ ສວນພຶກສາສາດ, ການອານຸລັກຊ້າງປ່າ ແລະ ການຫຼຸດຜ່ອນຂໍ້ຂັດແຍ່ງລະຫວ່າງຄົນກັບຊ້າງ. ພ້ອມນັ້ນ ກໍຊຸກຍູ້ໃຫ້ໂຄງການທີ່ໃກ້ຈະສິ້ນສຸດສັນຍາ ແລະ ໄດ້ຮັບຜົນສຳເລັດ ຈຳນວນ 4 ໂຄງການ (ແຂວງບໍ່ແກ້ວ, ຊຽງຂວາງ, ອັດຕະປື ແລະ ເຊກອງ) ເພື່ອກະກຽມສະຫຼຸບລາຍງານ, ປະເມີນຜົນ ແລະ ປິດໂຄງການຕາມລະບຽບຂັ້ນຕອນຂອງ ກປສ ຊຶ່ງໄດ້ ສະໜອງທຶນໃນການຈັດຕັ້ງປະຕິບັດວຽກງານ ດັ່ງນີ້:

(i) ສືບຕໍ່ສະໜອງທຶນການຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ຈຳນວນ 9 ແຫ່ງ ໃນ 8 ແຂວງ ຄື: ປ່າສະຫງວນ ພູຫີຜີ ແຂວງອຸດົມໄຊ, ປ່າສະຫງວນ ນ້ຳຍາວ-ນ້ຳຍອງ ແລະ ປ່າປ້ອງກັນຫ້ວຍຕາບ ແຂວງບໍ່ແກ້ວ, ປ່າສະຫງວນນ້ຳລານ ແຂວງຜົ້ງສາລີ, ປ່າປ້ອງກັນພູນາກ ແຂວງສາລະວັນ, ປ່າປ້ອງກັນຫ້ວຍໂທນ ແຂວງເຊກອງ, ປ່າປ້ອງກັນພູພຽງບໍລິເວນ ແຂວງ ອັດຕະປື, ປ່າປ້ອງກັນນ້ຳຮຸ່ງ-ນ້ຳແມດ ແຂວງໄຊຍະບູລີ, ປ່າປ້ອງກັນຍອດນ້ຳງຽບ ແຂວງຊຽງຂວາງ;

(ii) ສືບຕໍ່ສະໜອງທຶນໃຫ້ແກ່ການຟື້ນຟູ ແລະ ຄຸ້ມຄອງສວນພຶກສາສາດ ຫ້ວຍຍາງ-ດົງໝາກຄາຍ ນະຄອນຫຼວງວຽງຈັນ ໂດຍການສະໜອງເບ້ຍໄມ້ ແລະ ອ້ອມຮົ້ວຂອບເຂດ ສວນພຶກສາສາດ;

(iii) ສືບຕໍ່ສະໜັບສະໜູນການອານຸລັກຊ້າງປ່າ ແລະ ການຫຼຸດຜ່ອນຂໍ້ຂັດແຍ່ງລະຫວ່າງຄົນ ກັບຊ້າງປ່າ ຢູ່ ແຂວງ ວຽງຈັນ ແລະ ອຸດົມໄຊ.

### ❖ ຮ່ວງທຶນ ດ້ານຄຸ້ມຄອງມົນລະພິດ (PC)

ການສະໜອງທຶນ ຮ່ວງທຶນ PC ໃນໄລຍະຜ່ານມາ ແມ່ນໄດ້ໃຫ້ການສະໜັບສະໜູນທຶນຈຳນວນ 2 ໂຄງການ ເປັນມູນຄ່າທັງໝົດ 999 ລ້ານກີບ ເພື່ອສົ່ງເສີມການນຳໃຊ້ກົດໝາຍປົກປັກຮັກສາສິ່ງແວດລ້ອມ ແລະ ປູກຈິດສຳນຶກໃຫ້ຊຸມຊົນໃຫ້ເຂັ້ມແຂງ, ສ້າງຄວາມເຂັ້ມແຂງ ທາງດ້ານວິຊາການເຄມີ, ການນຳໃຊ້ຖານຂໍ້ມູນເຂົ້າໃນວຽກງານການຄຸ້ມຄອງສານເຄມີອັນຕະລາຍ, ປັບປຸງວຽກງານການສຶກສາສິ່ງແວດລ້ອມ, ສົ່ງເສີມຄຸນນະພາບສິ່ງແວດລ້ອມ ຕົວເມືອງ "ຂຽວ ສະອາດ ງາມຕາ", ຊຶ່ງໄດ້ສະໜອງທຶນໃນການຈັດຕັ້ງປະຕິບັດວຽກງານ ດັ່ງນີ້:

(i) ສືບຕໍ່ສະໜອງທຶນໃຫ້ ຄະນະວິທະຍາສາດທຳມະຊາດ, ມະຫາວິທະຍາໄລແຫ່ງຊາດ ໃນການຄຸ້ມຄອງຢາຂ້າຫຍ້າ;

(ii) ສືບຕໍ່ສະໜອງທຶນໃຫ້ ຫ້ອງການພັດທະນາ ແລະ ຄຸ້ມຄອງຕົວເມືອງ ໃນການລ່ວງຄອງລະບາຍນ້ຳ (ຮ່ອງແຊງ ແລະ ບຶງທາດຫຼວງ) ຢູ່ເມືອງຈັນທະບູລີ ແລະ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ.

### ❖ ຮ່ວງທຶນ ດ້ານການຄຸ້ມຄອງ ຊັບພະຍາກອນນ້ຳ (WRM)

ການສະໜອງທຶນ ຮ່ວງທຶນ WRM ໃນໄລຍະຜ່ານມາ ແມ່ນໄດ້ໃຫ້ການສະໜັບສະໜູນພາກສ່ວນຕ່າງໆ ໃນຂັ້ນສູນກາງ, ແຂວງ ແລະ ເມືອງ ຈຳນວນ 8 ໂຄງການ ເປັນມູນຄ່າທັງໝົດ 736

ລ້ານກີບ ເພື່ອສ້າງແຜນຄຸ້ມຄອງອ່າງຮັບນໍ້າ, ຕິດຕາມກວດກາປະລິມານນໍ້າ, ຄຸນນະພາບນໍ້າ ແລະ ການເຊາະເຈື່ອນຂອງດິນໃນເຂດອ່າງຮັບນໍ້າ, ການສໍາຫຼວດສະພາບຊັບພະຍາກອນນໍ້າ ແລະ ສ້າງລະບົບຂໍ້ມູນພື້ນຖານດ້ານຊັບພະຍາກອນນໍ້າ, ພ້ອມທັງສົ່ງເສີມການພັດທະນາຫຼັກສູດການສຶກສາດ້ານຊັບພະຍາກອນນໍ້າ, ພ້ອມນັ້ນ ກໍຊຸກຍູ້ໃຫ້ໂຄງການທີ່ໃກ້ຈະສິ້ນສຸດສັນຍາ ແລະ ໄດ້ຮັບຜົນສໍາເລັດ ຈໍານວນ 3 ໂຄງການ (ແຂວງບໍ່ແກ້ວ, ສະຫວັນນະເຂດ ແລະ ບໍລິຄໍາໄຊ) ເພື່ອກະກຽມສະຫຼຸບລາຍງານ, ປະເມີນຜົນ ແລະ ປິດໂຄງການຕາມລະບຽບຂັ້ນຕອນຂອງ ກປສ ຊຶ່ງໄດ້ ສະໜອງທຶນໃນການຈັດຕັ້ງປະຕິບັດວຽກງານ ດັ່ງນີ້:

(i) ສືບຕໍ່ສະໜັບສະໜູນການສ້າງແຜນຄຸ້ມຄອງອ່າງຮັບນໍ້າ (ນໍ້າເທີນຫີນບູນ, ນໍ້າເທີນ-ນໍ້າກະດິງ ແຂວງບໍລິຄໍາໄຊ ແລະ ແຂວງຄໍາມ່ວນ; ນໍ້າຊໍາ ແຂວງ ຫົວພັນ, ນໍ້າຫາດ ແຂວງບໍ່ແກ້ວ ແລະ ສຶກສາ ແລະ ເກັບກໍາຂໍ້ມູນເພື່ອສຶກສາອ່າງຮັບນໍ້າ ເຊທະມວກ ແຂວງ ສະຫວັນນະເຂດ);

(ii) ສືບຕໍ່ຍົກຂີດຄວາມສາມາດ ແລະ ຊຸກຍູ້ ເຄືອຄ່າຍຕິດຕາມກວດກາ ປະລິມານ ແລະ ຄຸນນະພາບນໍ້າ, ການເຊາະເຈື່ອນ ຂອງດິນ ໃນເຂດອ່າງຮັບນໍ້າ ນໍ້າຊໍາ ແຂວງຫົວພັນ ແລະ ນໍ້າເທີນ-ນໍ້າກະດິງ ແຂວງ ຄໍາມ່ວນ.

❖ **ຮ່ວງທຶນດ້ານການຄຸ້ມຄອງທີ່ດິນແບບຍືນຍົງ (SLM)**

ການສະໜອງທຶນ ຮ່ວງທຶນ SLM ໃນໄລຍະຜ່ານມາ ແມ່ນໄດ້ໃຫ້ການສະໜັບສະໜູນພາກສ່ວນຕ່າງໆ ໃນຂັ້ນສູນກາງ, ແຂວງ ແລະ ເມືອງ ຈໍານວນ 8 ໂຄງການ ເປັນມູນຄ່າທັງໝົດ 1.58 ຕື້ກີບ ເພື່ອຍົກຂີດຄວາມສາມາດ ໃນການຄຸ້ມຄອງການນໍາໃຊ້ທີ່ດິນຕາມແຜນຄຸ້ມຄອງທີ່ດິນແບບຮອບດ້ານ ໂດຍສອດຄ່ອງກັບ ແຜນຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານ ແລະ ເຊື່ອມສານກັບ ແຜນຄຸ້ມຄອງອ່າງນໍ້າ, ແຜນຄຸ້ມຄອງປ່າຍອດນໍ້າ ຊຶ່ງປະກອບມີຂົງເຂດຈຸດສຸມ ສໍາລັບສະໜອງທຶນ ດັ່ງນີ້:

(i) ສືບຕໍ່ຊຸກຍູ້ການອອກໃບຕາດິນ ແລະ ການຂຶ້ນສໍາມະໂນທີ່ດິນ ແຫ່ງຊາດຄື: ໄດ້ສ້າງລະບົບທີ່ທັນສະໄໝ ເພື່ອກໍານົດແຜນທີ່ຈັດສັນການນໍາໃຊ້ທີ່ດິນ ຕາມ 8 ປະເພດທີ່ດິນ; ການຂຶ້ນສໍາມະໂນທີ່ດິນ ໃນຂອບເຂດທົ່ວປະເທດ ລວມທັງ ການຈ່າຍພາສີນໍາໃຊ້ທີ່ດິນແບບອອນລາຍ ແລະ ໄດ້ຈັດຝຶກອົບຮົມ ກ່ຽວກັບ ການຂຶ້ນທະບຽນອອກໃບຕາດິນ ແລະ ຈົດທະບຽນນິຕິກໍາກ່ຽວກັບທີ່ດິນດ້ວຍລະບົບທີ່ທັນສະໄໝຮູບແບບໃໝ່ Lao Land Reg ໃຫ້ທີມງານຂຶ້ນທະບຽນທີ່ດິນເຄື່ອນທີ່ ຂັ້ນເມືອງ 9 ແຂວງເປົ້າໝາຍຊຶ່ງສໍາເລັດ 2 ແຂວງຄື: ບໍລິຄໍາໄຊ ແລະ ໄຊສົມບູນ; ຍັງສືບຕໍ່ຈັດຕັ້ງປະຕິບັດ 7 ແຂວງ: ຄໍາມ່ວນ, ສາລະວັນ,ຈໍາປາສັກ, ອັດຕະປື, ຫຼວງພະບາງ, ອຸດົມໄຊ ແລະ ບໍ່ແກ້ວ ພ້ອມທັງ ສ້າງຖານຂໍ້ມູນການນໍາໃຊ້ທີ່ດິນ, ການສໍາປະທານທີ່ດິນ ແລະ ການອອກໃບຕາດິນໃນຂອບເຂດທົ່ວປະເທດ.

(ii) ສືບຕໍ່ຊຸກຍູ້ ແລະ ຕິດຕາມກວດກາການວາງແຜນນໍາໃຊ້ທີ່ດິນ ໄປຕາມພື້ນຖານການຄຸ້ມຄອງ 5 ປະເພດ ອ່າງນໍ້າ ແລະ ຈັດຕັ້ງປະຕິບັດ ແຜນຄຸ້ມຄອງທີ່ດິນ ແບບປະສົມປະສານ ໄປພ້ອມກັບການຂຶ້ນບັນຊີ ສໍາມະໂນທີ່ດິນ ໃນທົ່ວປະເທດ ໂດຍໄດ້ສ້າງຄວາມເຂັ້ມແຂງໃຫ້ທ້ອງຖິ່ນໃນການຄຸ້ມຄອງ ແລະ ບໍລິຫານທີ່ດິນ, ສໍາຫຼວດຈັດສັນກໍານົດເຂດ ແລະ ສ້າງແຜນທີ່ຕອນດິນ, ສ້າງຖານຂໍ້ມູນເພື່ອຕິດຕາມການນໍາໃຊ້ທີ່ດິນຂອງປະຊາຊົນ ແລະ ສ້າງຄູ່ມືວິຊາການກ່ຽວກັບວຽກງານຈັດສັນທີ່ດິນໃຫ້ແກ່ພະນັກງານ ແລະ ການຈັດຕັ້ງທຸກພາກສ່ວນທີ່ກ່ຽວຂ້ອງກັບການຄຸ້ມຄອງ ແລະ ນໍາໃຊ້ທີ່ດິນ;

(iii) ສືບຕໍ່ສຳຫຼວດສະຖິຕິປ່າປູກ ແລະ ການນຳໃຊ້ດິນ ຕິດພັນກັບການສັງລວມ ແລະ ຂຶ້ນບັນຊີ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊຶ່ງສຳເລັດການສຳຫຼວດຈັດສັນ, ກຳນົດເຂດ ແລະ ສ້າງແຜນທີ່ຕອນດິນ ແລະ ແຜນຈັດສັນທີ່ດິນ ເພື່ອເປົ້າໝາຍຕ່າງໆ ໃຫ້ເໝາະສົມກັບເງື່ອນໄຂ ແລະ ທ່າແຮງຂອງພື້ນທີ່ ໃນ 10 ບ້ານ ຂອງເມືອງສິງ ແຂວງຫລວງນ້ຳທາ ແລະ ເມືອງ ປາກທາ ແຂວງ ບໍ່ແກ້ວ;

(iv) ສືບຕໍ່ສ້າງລະບົບສະໜອງຂໍ້ມູນທີ່ເໝາະສົມ ເພື່ອສະໜອງຂ່າວສານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນຄຸ້ມຄອງທີ່ດິນ ຊຶ່ງໄດ້ສ້າງຖານຂໍ້ມູນເພື່ອຕິດຕາມການນຳໃຊ້ທີ່ດິນຂອງປະຊາຊົນ ຂອງ ພຊສ ແຂວງບໍ່ແກ້ວ ແລະ ຫລວງນ້ຳທາ; ຝຶກອົບຮົມ ແລະ ຕິດຕັ້ງລະບົບ Network ການສ້າງ ຖານຂໍ້ມູນທະບຽນທີ່ດິນ ແລະ ການຄຸ້ມຄອງຖານຂໍ້ມູນທີ່ດິນ ຢູ່ 9 ແຂວງ ເປົ້າໝາຍ, ປັບປຸງ ຂໍ້ມູນທີ່ດິນເຂົ້າໃນຖານຂໍ້ມູນ, ສຳເລັດສ້າງສະຖານີ CORS ຢູ່ ແຂວງຊຽງຂວາງ ແລະ ໄຊສົມບູນ, ຈັດພິມແຜນທີ່ພາບຖ່າຍທາງອາກາດເພື່ອເປັນພື້ນຖານການກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ 15 ເມືອງ ຈຳນວນ 30 ແຜນ ເມືອງລະ 2 ແຜນ;

❖ **ຮ່ວງທຶນດ້ານການປ່ຽນແປງດິນຟ້າອາກາດ (CC)**

ກປສ ໄດ້ກຳນົດເປົ້າໝາຍ ການສະໜອງທຶນໃນ ຮ່ວງທຶນ ດ້ານການປ່ຽນແປງດິນຟ້າອາກາດ ເພື່ອປະກອບສ່ວນໃນການຈັດຕັ້ງປະຕິບັດ ແຜນງານແຫ່ງຊາດ SDG-13 Climate Action, ມີແຜນການຮັບມື ກັບການປ່ຽນແປງດິນຟ້າອາກາດ ເພື່ອແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດຢູ່ ສປປ ລາວ ແຕ່ວ່າມາຮອດປະຈຸບັນຍັງບໍ່ທັນໄດ້ສະໜອງທຶນໃນຮ່ວງດັ່ງກ່າວໃຫ້ພາກສ່ວນຕ່າງໆເທື່ອ.

### *ສະຫຼຸບຜົນສຳເລັດການຈັດຕັ້ງປະຕິບັດແຜນການການສະໜອງທຶນ ຂອງ ຄສລ2 ໃນ 2 ຮ່ວງທຶນ*

ແຜນການສະໜອງທຶນໃນປີ 2020 ສຳລັບໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ ສປປ ລາວ ໄລຍະ 2 (ຄສລ2) ໃນຈຳນວນທັງໝົດ 37 ໂຄງການ ທີ່ກຳລັງສືບຕໍ່ຈັດຕັ້ງປະຕິບັດໃນປັດຈຸບັນ. ຊຶ່ງ ກວມເອົາ 2 ຮ່ວງທຶນຄື: 1) ຮ່ວງທຶນດ້ານນະໂຍບາຍ ແລະ ສ້າງຄວາມສາມາດ (PICE) ຈຳນວນ 25 ໂຄງການ ໃຊ້ງົບປະມານ 6.087.121 ໂດລາ ແລະ 2) ຮ່ວງທຶນວຽກພັດທະນາຊຸມຊົນ ແລະ ຊີວະນາໆພັນ (CBI) ຈຳນວນ 12 ໂຄງການ: 3.554.015 ໂດລາສະຫະລັດ. ລວມທັງໝົດເປັນເງິນ 9.641.137 ໂດລາສະຫະລັດ ຫຼື ເທົ່າກັບ 78.1 ຕື້ກີບ.

ໃນການຈັດຕັ້ງປະຕິບັດຕົວຈິງ ຮອດເດືອນພະຈິກ 2020 ຮ່ວງທຶນດ້ານນະໂຍບາຍ ແລະ ສ້າງຄວາມສາມາດ (PICE) ແມ່ນປະຕິບັດໄດ້ 2.915.515 ໂດລາສະຫະລັດ ຫຼື 48% ຂອງແຜນປີ. ສຳລັບ ຮ່ວງທຶນພັດທະນາຊຸມຊົນ ແລະ ຊີວະນາໆພັນ (CBI) ປະຕິບັດໄດ້ 2.815.062 ໂດລາສະຫະລັດ ຫຼື 79% ຂອງແຜນປີ. ລວມທັງ 2 ຮ່ວງທຶນສາມາດປະຕິບັດໄດ້ 5.730.577 ໂດລາສະຫະລັດ (52.05 ຕື້ກີບ) ຫຼື 59% ຂອງແຜນປີ.

ການລົງຊຸກຍູ້-ຕິດຕາມການຈັດຕັ້ງປະຕິບັດໂຄງການ ຄສລ2 ໄດ້ດຳເນີນເປັນ 2 ລັກສະນະຄື: 1) ການລົງຊຸກຍູ້ ໂດຍທີມງານ ກປສ ເອງ ຊຶ່ງປະກອບດ້ວຍວິຊາການຕາງໜ້າຈາກ ວິຊາການການເງິນ

ແລະ ຈັດຊື້-ຈັດຈ້າງ ປີໜຶ່ງ 2 ຄັ້ງ ແລະ 2) ການລົງຊຸກຍູ້ຮ່ວມກັນ ລະຫວ່າງ ກປສ, ທະນາຄານໂລກ ແລະ ກົມແຜນການ-ການເງິນ, ກຊສ ແລະ ກະຊວງກະສິກຳ ແລະ ປ່າໄມ້ 2 ຄັ້ງ. ຈາກການລົງຊຸກຍູ້ຕິດຕາມ ການຈັດຕັ້ງປະຕິບັດໂຄງການ ສາມາດສັງລວມຜົນໄດ້ຮັບທີ່ສຳຄັນ ທີ່ບັນລຸໄດ້ຕາມຕົວຊີ້ວັດຫລັກ ແລະ ຕົວຊີ້ວັດສຳຮອງຂອງ ແຕ່ລະກຸ່ມໂຄງການ ແລະ ແຕ່ລະໝວດວຽກສຳຄັນດັ່ງນີ້:

<u>ວຽກງານຄຸ້ມຄອງປ່າສະຫງວນ</u>

- ຄະແນນເຄື່ອງມືຕິດຕາມຄຸ້ມຄອງປ່າສະຫງວນຢ່າງມີປະສິດທິຜົນ (METT): ປີ 2020 ໄດ້ 5 ຄະແນນ (ຄະແນນລວມສະສົມໄດ້ 22 ຄະແນນ)
- ຄະແນນຕິດຕາມການພັດທະນາ ແລະ ຄຸ້ມຄອງປ່າສະຫງວນ: ປີ 2020 ໄດ້ 3 ຄະແນນ (ຄະແນນລວມສະສົມໄດ້ 80 ຄະແນນ)
- ບ້ານເປົ້າໝາຍໂຄງການມີສັນຍາອະນຸລັກຊຸມຊົນ ແລະ ໄດ້ຮັບທຶນເພື່ອປະຕິບັດແຜນວຽກຊຸມຊົນ: 2020 ໄດ້ 53 ບ້ານ (ລວມທັງໝົດໄດ້ 148 ບ້ານ)
- ເຂດພື້ນທີ່ປ່າສະຫງວນ ທີ່ໄດ້ມີການວັດແທກຈຳນວນປະຊາກອນສັດປ່າ ແລະ ໄພຂົ່ມຂູ່: ປີ 2020 ປະຕິບັດໄດ້ 9.035 ເຮັກຕາ (ພື້ນທີ່ລວມທີ່ປະຕິບັດໄດ້ 431.856 ເຮັກຕາ)
- ເຂດພື້ນທີ່ປ່າສະຫງວນ ທີ່ໄດ້ມີການວັດແທກອັດຕາການສູນເສຍປ່າໄມ້ລວມ: ປີ 2020 ປະຕິບັດໄດ້ 498.752 ເຮັກຕາ (ພື້ນທີ່ລວມທີ່ປະຕິບັດໄດ້ 1.244.501 ເຮັກຕາ)

<u>ວຽກງານສ້າງຄວາມເຂັ້ມແຂງໃນການຄັບໃຊ້ກົດໝາຍສັດນ້ຳ-ສັດປ່າ</u>

- ຄະດີສັດປ່າຕາມບັນຊີ CITES ປະເພດ 1 ທີ່ໄດ້ສົ່ງສຳນວນໃຫ້ອົງການໄອຍາການ: ປີ 2020 ປະຕິບັດໄດ້ 8 ຄະດີ (ຈຳນວນລວມສະສົມໄດ້ 38 ຄະດີ)
- ການກວດພົບກໍລະນີຄ້າຂາຍສັດປ່າ: ປີ 2020 ປະຕິບັດໄດ້ 662 ກໍລະນີ (ຈຳນວນລວມສະສົມໄດ້ 4.313 ກໍລະນີ)

<u>ວຽກງານວາງແຜນ ແລະ ຄຸ້ມຄອງສິ່ງແວດລ້ອມ</u>

- ສຳເລັດການເຮັດບົດລາຍງານຕິດຕາມໂຄງການລົງທຶນ ທີ່ມີຜົນກະທົບ ດ້ານສິ່ງແວດລ້ອມ ລົງໃນເວັບໄຊສຂອງລັດຖະການ: ປີ 2020 ປະຕິບັດໄດ້ 4 ບົດລາຍງານ (ຈຳນວນລວມສຳເລັດ 99 ບົດ)
- ສຳເລັດການສ້າງແຜນພັດທະນາ 5 ປີໃນຂະແໜງການສິ່ງແວດລ້ອມຂອງແຂວງເປົ້າໝາຍ: ປີ 2020 ສ່ວນຫລາຍມີຮ່າງເບື້ອງຕົ້ນ (ຈຳນວນລວມທີ່ສຳເລັດແລ້ວໄດ້ 2 ແຜນ)
- ເປີເຊັນການອອກໃບຢັ້ງຢືນດ້ານສິ່ງແວດລ້ອມໃຫ້ແກ່ໂຄງການລົງທຶນປະເພດ 1 ແລະ 2: ປີ 2020 ປະຕິບັດໄດ້ 5 ເປີເຊັນ (ຈຳນວນລວມທີ່ສຳເລັດແລ້ວໄດ້ 62 ເປີເຊັນ)
- ຄະແນນຕິດຕາມການອອກແບບ ແລະ ປັບໃຊ້ ເຄື່ອງມືການຄຸ້ມຄອງມົນລະພິດ: ປີ 2020 ບໍ່ສາມາດປະຕິບັດໄດ້ (ຄະແນນລວມປະຕິບັດໄດ້ 30 ຄະແນນ)
- ຄະແນນການຕິດຕາມຄູ່ມືການສ້າງແຜນພັດທະນາແຫ່ງຊາດ, ແຂວງ ແລະ ຂະແໜງການອື່ນທີ່ເຊື່ອມໂຍງແຜນສິ່ງແວດລ້ອມເຂົ້າກັບແຜນການພັດທະນາ: ປີ 2020 ບໍ່ສາມາດປະຕິບັດໄດ້ (ຄະແນນລວມປະຕິບັດໄດ້ 60 ຄະແນນ)

<u>ວຽກງານສ້າງຄວາມສາມາດ</u>

- ຄະແນນດັດສະນີ ຄວາມສາມາດຂອງ ກສປ ແລະໂຄງການຫລັກເພີ້ມຂຶ້ນ: ປີ 2020 ສາມາດປະຕິບັດໄດ້ 4 ຄະແນນ (ຄະແນນລວມສະສົມປະຕິບັດໄດ້ 44 ຄະແນນ)

- ຈຳນວນພະນັກງານໂຄງການ ແລະ ຄູ່ຮ່ວມງານ ໄດ້ຮັບການຝຶກອົບຮົມສ້າງຄວາມສາມາດ ຫລື ໄດ້ເຂົ້າຮ່ວມວຽກທັດສະນະສຶກສາ: ປີ 2020 ສາມາດປະຕິບັດໄດ້ 3.273 ຄົນ ເປັນຍິງ 1.001 ຄົນ (ຈຳນວນລວມສະສົມປະຕິບັດໄດ້ 12.935 ຄົນ ເປັນຍິງ 3.074 ຄົນ)

ສຳເລັດຂະບວນການສະເໜີຂໍຕໍ່ອາຍຸໂຄງການ ຄສລ2 ອອກໄປຕື່ມ 1 ປີ ຈາກເດີມ ທີ່ຈະສິ້ນສຸດອາຍຸໂຄງການທ້າຍເດືອນມິຖຸນາ 2021 ເປັນ ທ້າຍເດືອນມິຖຸນາ 2022. ໜັງສືອະນຸມັດແຈ້ງຕອບທາງການຈາກທະນາຄານໂລກ ຫາກະຊວງການເງິນ ລົງວັນທີ 28 ສິງຫາ 2020. ການສຳລັບບັນດາໂຄງການຍ່ອຍ ແມ່ນອະນຸຍາດໃຫ້ສະເໜີຕໍ່ອາຍຸໂຄງການຂອງຕົນໄດ້ຕື່ມ ພາຍໃນປີ 2021 ຕາມກອບເວລາທີ່ເໝາະສົມ ຕາມໜ້າວຽກທີ່ຍັງຕ້ອງໄດ້ສືບຕໍ່ປະຕິບັດ ແລະ ງົບປະມານທີ່ຍັງມີ. ໃນປີ 2020 ມີ 37 ໂຄງການ ທີ່ກຳລັງປະຕິບັດ ໃນນີ້ມີທັງໝົດ 34 ໂຄງການຍ່ອຍ ທີ່ສະເໜີ ຂໍຕໍ່ອາຍຸສັນຍາໂຄງການຂອງຕົນໃນປີ 2021 ນັບແຕ່ 3 ເດືອນ ຮອດ 1 ປີເຕັມ ລວມຄາດຄະເນງົບປະມານເບີກຈ່າຍໄລຍະການຕໍ່ອາຍຸໂຄງການປະມານ 4.327.468 ໂດລາສະຫະລັດ.

### 4.9 ການລົງທຶນປ່ອຍກູ້

ຫກປສ ໄດ້ຕິດຕາມເກັບກູ້ຕົ້ນທຶນ ທີ່ໄດ້ລົງທຶນໃຫ້ແກ່ 21 ໂຄງການ ຈຳນວນ 6,595 ລ້ານກີບ ຊຶ່ງສາມາດປິດໄປໄດ້ 2 ໂຄງການ ແລະ ສືບຕໍ່ຕິດຕາມການເກັບກູ້ຕົ້ນທຶນ ແລະ ດອກເບ້ຍ 19 ໂຄງການ. ດັ່ງລາຍລະອຽດລຸ່ມນີ້:

- ປິດໂຄງການກູ້ຢືມທີ່ໄດ້ຊຳລະຕົ້ນທຶນ ແລະ ດອກເບ້ຍ ຕາມສັນຍາ ຈຳນວນ 2 ໂຄງການ (ລະຫັດ LO-18 ແລະ LO-22) ໃນປີ 2020 ສາມາດເກັບຕົ້ນທຶນຄືນ 550 ລ້ານກີບ ແລະ ດອກເບ້ຍ 49,250 ລ້ານກີບ
- ໃນປີ 2020 ສາມາດເກັບຕົ້ນທຶນຄືນໄດ້ (ລວມທັງໂຄງການທີ່ປິດ) ຈຳນວນ 715.900.000 ກີບ ແລະ ດອກເບັ້ຍ 9.500.000 ກີບ ລວມທັງຕົ້ນທຶນ ແລະ ດອກເບັ້ຍ 725.400.000 ກີບ;
- ໄດ້ອອກແຈ້ງການໃຫ້ຜູ້ກູ້ຢືມມາຊຳລະຕົ້ນທຶນ ແລະ ດອກເບ້ຍທີ່ຍັງຄ້າງ ພ້ອມທັງແຕ່ງຕັ້ງພະນັກງານຕິດຕໍ່ປະສານງານກັບຜູ້ກູ້ຢືມຢ່າງເປັນປົກກະຕິ;
- ໄດ້ອອກແຈ້ງເຊີນຫາຜູ້ປະກອບການ 8 ໂຄງການເຂົ້າມາປຶກສາຫາລື ກ່ຽວກັບການຊຳລະຕົ້ນທຶນ ແລະ ດອກເບ້ຍ ທີ່ຍັງຄ້າງ ແລະ ເຮັດບົດບັນທຶກຮ່ວມກັນ ເພື່ອເປັນບ່ອນອີງ.

ຕາຕະລາງທີ 3: ຕາຕະລາງຕິດຕາມການເບີກຈ່າຍງົບປະມານຂອງໂຄງການ ຄສລ2 ໃນວັນທີ 01 ມັງກອນ 2020 ຫາ 20 ພະຈິກ 2020

| ລ/ດ | ໂຄງການ | | ມື້ເລີ່ມ | ມື້ສິ້ນສຸດ | ງົບປະມານລວມ | ງົບປະມານໃນ ປີ 2020 | ເບີກຈ່າຍໃນ ປີ 2020 | % ເບີກຈ່າຍໃນ ປີ 2020/ງົບປະມານໃນປີ 2020 |
|---|---|---|---|---|---|---|---|---|
| 1 | 2 | | 3 | 4 | 5 | 6 | 9=7+8 | 11=9/6 |
| | | | | | USD | USD | USD | |
| Component 1 | | | | | 17.860.458 | 6.087.122 | 2.915.515 | 48% |
| 1 | MAF-DOF-AF | **PICE 001** | 06/05/2015 | 31/12/2020 | 2.619.205 | 694.363 | 278.709 | 40% |
| 2 | MAF-DOFI | **PICE 002** | 01/06/2015 | 31/12/2020 | 1.656.500 | 357.189 | 203.774 | 57% |
| 3 | NOUL-FFS | **PICE 003** | 01/04/2015 | 31/03/2020 | 2.299.847 | 278.696 | 157.569 | 57% |
| 4 | MONRE-DPC-AF | **PICE 005** | 01/07/2015 | 30/12/2020 | 648.000 | 255.642 | 20.215 | 8% |
| 5 | NUOL-FSS | **PICE 006** | 01/07/2016 | 30/12/2020 | 740.000 | 174.370 | 144.348 | 83% |
| 6 | NUOL-FES | **PICE 009** | 01/07/2016 | 31/12/2020 | 658.075 | 198.803 | 117.226 | 59% |
| 7 | NUOL-FNS | **PICE 010** | 01/07/2016 | 31/12/2020 | 698.700 | 282.063 | 152.229 | 54% |
| 8 | MOF-LCD | **PICE 011** | 01/10/2016 | 31/12/2020 | 600.000 | 154.551 | 106.469 | 69% |

| | | | | | | | | |
|---|---|---|---|---|---|---|---|---|
| 9 | MHA-DCNEC | **PICE 012** | 01/10/2016 | 30/06/2020 | 598.862 | 38.200 | 57.610 | 151% |
| 10 | MONRE-DNEP | **PICE 013** | 10/10/2016 | 31/12/2020 | 1.008.801 | 481.966 | 171.967 | 36% |
| 11 | MONRE-DEQP | **PICE 014** | | 30/12/2020 | 726.468 | 249.795 | 66.476 | 27% |
| 12 | MONRE-PCD-AF | **PICE 015** | 01/10/2016 | 30/12/2020 | 999.794 | 327.204 | 3.655 | 1% |
| 13 | MONRE-NRERI-AF | **PICE 016** | 01/10/2016 | 31/12/2020 | 1.029.000 | 502.202 | 466.523 | 93% |
| 14 | MPI-NERI | **PICE 017** | 02/02/2017 | 30/12/2020 | 499.730 | 184.348 | 85.416 | 46% |
| 15 | PONRE-VTP | **PICE 022** | 01/06/2017 | 31/12/2020 | 249.995 | 152.537 | 100.110 | 66% |
| 16 | PONRE-SVK | **PICE 025** | 01/06/2017 | 31/12/2020 | 249.920 | 170.315 | 51.622 | 30% |
| 17 | PONRE-HP | **PICE 019** | 20/07/2017 | 30/12/2020 | 249.568 | 90.700 | 54.578 | 60% |
| 18 | PONRE-XK | **PICE 020** | 20/07/2017 | 30/12/2020 | 249.880 | 90.900 | 83.368 | 92% |
| 19 | PONRE-BKX | **PICE 023** | 01/06/2017 | 31/12/2020 | 249.700 | 149.947 | 76.238 | 51% |
| 20 | PONRE-KM | **PICE 024** | 01/06/2017 | 31/12/2020 | 249.986 | 132.766 | 101.259 | 76% |

| | | | | | | | | |
|---|---|---|---|---|---|---|---|---|
| 21 | PONRE-LPB | **PICE 021** | 20/07/2017 | 30/12/2020 | 249.990 | 136.446 | 77.988 | 57% |
| 22 | NAPA | **PICE 018** | 15/08/2017 | 30/06/2020 | 200.000 | 34.556 | 18.370 | 53% |
| 23 | MONRE-NEIO | **PICE 026** | 04/04/2018 | 31/12/2020 | 723.116 | 564,849 | 107.341 | 19% |
| 24 | MAF-DPF | **PICE 027** | 20/12/2018 | 31/12/2020 | 155.320 | 134.714 | 57.721 | 43% |
| 25 | MONRE-DoE+MEM-DEPP | **PICE 028** | 01/02/2020 | 31/12/2020 | 250.000 | 250.000 | 154.733 | 62% |
| **Component 2** | | | | | **10.549.337** | **3.554.015** | **2.815.062** | **79%** |
| 1 | POFI-BKX | **CBI 006** | 01/06/2015 | 31/12/2020 | 492.415 | 66.663 | 68.770 | 103% |
| 2 | POFI-KM | **CBI 007** | 01/06/2015 | 31/12/2020 | 444.620 | 114.189 | 74.325 | 65% |
| 3 | POFI-HP | **CBI 008** | 01/07/2015 | 31/12/2020 | 470.580 | 81.322 | 52.124 | 64% |
| 4 | PAFO-BKX | **CBI 011** | 23/08/2017 | 31/12/2020 | 599.840 | 123.204 | 114.125 | 93% |
| 5 | PAFO-SVK | **CBI 012** | 23/08/2017 | 31/12/2020 | 499.990 | 118.626 | 72.803 | 61% |
| 6 | PAFO-VTP | **CBI 013** | 23/08/2017 | 31/12/2020 | 599.998 | 139.184 | 120.736 | 87% |

| | | | | | | | | |
|---|---|---|---|---|---|---|---|---|
| 7 | NNT-WMPA | **CBI 014** | 01/11/2017 | 31/12/2020 | 2.727.075 | 785.288 | 485.247 | 62% |
| 8 | PAFO-KM | **CBI 016** | 23/02/2018 | 31/12/2020 | 529.705 | 138.089 | 63.367 | 46% |
| 9 | PAFO-HP | **CBI 017** | 23/02/2018 | 31/12/2020 | 500.000 | 116.880 | 62.011 | 53% |
| 10 | PAFO-LPB | **CBI 018** | 23/02/2018 | 31/12/2020 | 545.454 | 104.656 | 32.972 | 32% |
| 11 | PAFO-XK | **CBI 019** | 23/02/2018 | 31/12/2020 | 539.660 | 112.020 | 93.030 | 83% |
| 12 | NEPL-MU/DOF | **CBI 020** | 01/01/2019 | 31/12/2020 | 2.600.000 | 1.653.894 | 1.575.551 | 95% |
| Total C1+C2 | | | | | 28.409.795 | 9.641.137 | 5730.577 | 59% |

### 4.10 ດ້ານການຮ່ວມມື

ເສີມຂະຫຍາຍການຮ່ວມມືຢ່າງມີປະສິດທິພາບ ກັບຂະແໜງການກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໂຄງການ ແລະ ເພີ່ມທະວີການຮ່ວມມືກັບອົງການຈັດຕັ້ງສາກົນ ພາຍໃນປະເທດ, ພາກພື້ນ ແລະ ສາກົນເພື່ອສາມາດດຶງດູດທຶນຮອນໃຫ້ແກ່ ກປສ ຢ່າງຕໍ່ເນື່ອງ. ຮັກສາສາຍສຳພັນອັນດີທີ່ມີຢູ່ແລ້ວກັບ ອົງການຈັດຕັ້ງຕ່າງໆ ໃຫ້ຍືນຍົງ ເຊັ່ນ: ທະນາຄານໂລກ (WB), ທະນາຄານພັດທະນາອາຊີ (ADB), ກອງທຶນສິ່ງແວດລ້ອມໂລກ (GEF), ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ (GCF) ແລະ ອົງການຈັດຕັ້ງອື່ນໆ, ໂດຍໄດ້ຈັດຕັ້ງປະຕິບັດໜ້າວຽກລຸ່ມນີ້:

- ໄດ້ຮ່ວມມືຢ່າງໃກ້ຊິດກັບ ກຊສ ໃນການສ້າງຄູ່ຮ່ວມງານ ພ້ອມທັງສະໜອງທຶນໃຫ້ໂຄງການຕ່າງໆທີ່ຢູ່ພາຍໃຕ້ ກຊສ ເພື່ອໃຫ້ບັນລຸຕາມແຜນບຸລິມະສິດຂອງ ກະຊວງ ກ່ຽວກັບການຄົ້ນຄ້ວາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ເປັນການປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ. ນອກນັ້ນ ກປສ ຍັງໄດ້ປະສານສົມທົບ ກັບ ກະຊວງ ພະລັງງານ ແລະ ບໍ່ແຮ່, ກະຊວງແຜນການ ແລະ ການລົງທຶນ ເພື່ອຊຸກຍູ້ໃຫ້ຜູ້ພັດທະນາໂຄງການລົງທຶນຕ່າງໆປະຕິບັດພັນທະທຶນປະກອບສ່ວນຈາກໂຄງການລົງທຶນຂະແໜງໄຟຟ້າ ແລະ ບໍ່ແຮ່ ຕາມທີ່ໄດ້ກຳນົດໄວ້ສັນຍາສຳປະທານ.
- ໄດ້ອຳນວຍຄວາມສະດວກໃນການລົງນາມບົດບັນທຶກເຂົ້າໃຈ ລະຫວ່າງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກັບ ມະຫາວິທະຍາໄລແຫ່ງຊາດ. ນອກຈາກນັ້ນ, ຍັງໄດ້ຮ່ວມມືໃນການກະກຽມເພື່ອສ້າງໂຄງການໃໝ່ ແລະ ສ້າງຂີດຄວາມສາມາດໃຫ້ ບັນດາພາກສ່ວນກ່ຽວຂ້ອງ.
- ໄດ້ເຊັນສັນຍາຮ່ວມມືກັບ 02 ພາກສ່ວນ ຄື: (1) ເຊັນບົດບັນທຶກຄວາມເຂົ້າໃຈໃນການຮ່ວມມືການຈັດຕັ້ງປະຕິບັດວຽກງານ ສົ່ງເສີມບົດບາດຍິງ-ຊາຍ ໃນການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລະຫວ່າງ ຫກປສ ແລະ ສະຫະພັນແມ່ຍິງ ກຊສ ຄັ້ງວັນທີ 29 ຕຸລາ 2020; (2) ເຊັນບົດບັນທຶກຄວາມເຂົ້າໃຈການຮ່ວມມື ໃນການສົ່ງເສີມປຸກຈິດສຳນຶກ ແລະ ສ້າງເຄືອຂ່າຍກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ການເຕີບໂຕສີຂຽວ ລະຫວ່າງ ຫກປສ ແລະ ກົມສິ່ງແວດລ້ອມ, ກຊສ ຄັ້ງວັນທີ 11 ພະຈິກ 2020.
- ໃນປີ 2020 ຂອງ ກປສ ໄດ້ສືບຕໍ່ຈັດຕັ້ງປະຕິບັດ ໂຄງການ ສິ່ງແວດລ້ອມ ແລະ ສັງຄົມໄລຍະ2 ທີ່ທະນາຄານໂລກໃຫ້ທຶນ. ໃນການຈັດຕັ້ງປະຕິບັດໂຄງການໄດ້ມີການແລກປ່ຽນປະສົບການ ແລະ ປັບປຸງການປະສານງານ, ການຮ່ວມກັບບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ໂດຍຈັດແບ່ງກຸ່ມໂຄງການທີ່ໄດ້ຮັບທຶນ ຄສລ2 ຊຶ່ງແບ່ງອອກເປັນ 4 ກຸ່ມຄື: ກຸ່ມຄຸ້ມຄອງປ່າສະຫງວນ, ກຸ່ມບັງຄັບໃຊ້ກົດໝາຍ ກຸ່ມວາງແຜນສິ່ງແວດລ້ອມ ແລະ ສ້າງຄວາມເຂັ້ມແຂງ, ຝຶກອົບຮົມໃຫ້ພະນັກງານ (ມຊ ແລະ ອົງການອື່ນໆ). ນອກຈາກນີ້, ຍັງໄດ້ຮ່ວມມື ກັບທະນາຄານໂລກໃນການກະກຽມໂຄງການໃໝ່ "ໂຄງການຄຸ້ມຄອງສິ່ງແວດລ້ອມ ແລະ ສິ່ງເສດເຫຼືອ" ຊຶ່ງປະຈຸບັນແມ່ນຢູ່ໃນຂັ້ນຕອນຂອງການເກັບກຳຂໍ້ມູນ ແລະ ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງໃນການອອກແບບໂຄງການ.
- ໄດ້ຮ່ວມມື ກັບກອງທຶນ GCF ກ່ຽວກັບການສະໝັກເປັນອົງກອນທີ່ສາມາດເຂົ້າຫາແຫຼ່ງທຶນໄດ້ໂດຍກົງ ຊຶ່ງປະຈຸບັນຢູ່ໃນຂັ້ນຕອນການປະເມີນອົງກອນ (stage 1 institutional assessment). ນອກຈາກນີ້ ກປສ ຍັງໄດ້ຍື່ນບົດສະເໜີໂຄງການກະກຽມຄວາມພ້ອມ (Readiness support

programme) ເພື່ອຊ່ວຍເຮັດໃຫ້ການສໍາເລັດການສະໝັກເປັນອົງກອນທີ່ເຂົ້າຫາແຫຼ່ງທຶນໄດ້ໂດຍກົງສໍາເລັດ ແລະ ກະກຽມບົດສະເໜີແນວຄວາມຄິດ ແລະ ບົດສະເໜີໂຄງການເພື່ອຍື່ນຫາ GCF ຫຼັງຈາກຖືກຮັບຮອງເປັນອົງການທີ່ສາມາດເຂົ້າຫາແຫຼ່ງທຶນໄດ້ໂດຍກົງ.

- ຮ່ວມມືກັບກອງທຶນ GEF ໂດຍຜ່ານຈຸດປະສານງານແຫ່ງຊາດ (operation focal point) ກໍ່ຄືກົມແຜນການ ແລະ ການເງິນ, ກຊສ ໃນການສັງລວມ ໂຄງການຕ່າງໆ ທີ່ຂໍງົບປະມານ GEF7 ທີ່ເປັນໂຄງການບູລິມະສິດ, ເຂົ້າຮ່ວມກອງປະຊຸມຕ່າງໆເພື່ອປຶກສາຫາລື ແລະ ແລກປ່ຽນບົດຮຽນກັບບັນດາກຸ່ມປະເທດອ້ອມຂ້າງ. ນອກຈາກນີ້ ຍັງໄດ້ຊ່ວຍກະກຽມຈັດກອງປະຊຸມປຶກສາຫາລື ລະດັບຊາດ ກ່ຽວກັບ ວຽກງານຈຸດສຸມ ກອງທຶນສິ່ງແວດລ້ອມໂລກ ແລະ ກອງທຶນສີຂຽວ ດ້ານການປ່ຽນແປງດິນຟ້າອາກາດ.
- ໄດ້ເຮັດວຽກຮ່ວມກັບອົງການ GIZ ຢ່າງໃກ້ຊິດໃນການກະກຽມ "ໂຄງການຈັດຕັ້ງປະຕິບັດແຜນງານສ້າງຄວາມເຂັ້ມແຂງໃນວຽກງານປ່າໄມ້, ຄຸ້ມຄອງປ່າໄມ້ແບບພູມມີທັດ ແລະ ສົ່ງເສີມຊີວິດການເປັນຢູ່ I-GFLL (REDD+)" ທີ່ໄດ້ຮັບທຶນຈາກກອງທຶນ GCF ໂດຍຜ່ານອົງການ GIZ ຈໍານວນ 12 ລ້ານໂດລາສະຫະລັດ (ໄລຍະຈັດຕັ້ງປະຕິບັດ 2020-2024), ໃນນັ້ນ 400.000 ໂດລາສະຫະລັດ ແມ່ນ ກປສ ນໍາໃຊ້ ເຂົ້າໃນການຄຸ້ມຄອງບໍລິຫານການເງິນ ຂອງໂຄງການ ແລະ ຫກປສ ຍັງໄດ້ເຮັດວຽກຮ່ວມກັບອົງການ UNEP ແລະ ກຊສ ຢ່າງໃກ້ຊິດໃນການກະກຽມ "ໂຄງການ ສ້າງຄວາມທົນທານຂອງປະຊາກອນໃນຕົວເມືອງ ເພື່ອປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໂດຍການຄຸ້ມຄອງ ແລະ ນໍາໃຊ້ທ່າແຮງຂອງລະບົບນິເວດ ຢູ່ ສປປ ລາວ" ໂດຍຜ່ານອົງການ UNEP ຈໍານວນ 10 ລ້ານໂດລາສະຫະລັດ (ໄລຍະຈັດຕັ້ງປະຕິບັດ 2020-2025), ໃນນັ້ນ 344.152 ໂດລາສະຫະລັດ ແມ່ນ ກປສ ນໍາໃຊ້ ເຂົ້າໃນການຄຸ້ມຄອງບໍລິຫານການເງິນ ຂອງໂຄງການ.

## 5. ຕີລາຄາດ້ານດີ-ດ້ານອ່ອນ, ຂໍ້ຄົງຄ້າງ, ສາຍເຫດ ແລະ ບົດຮຽນທີ່ຖອດຖອນໄດ້

### 5.1 ດ້ານດີ

- ກປສ ໄດ້ປັບປຸງນິຕິກໍາທີ່ສໍາຄັນ ທີ່ເປັນເງື່ອນໄຂຕົວຊີ້ວັດ ຂອງນະໂຍບາຍການເຕີບໂຕສີຂຽວເປັນຕົ້ນ ສໍາເລັດ ຂໍ້ຕົກລົງວ່າດ້ວຍ ລະບຽບການຄຸ້ມຄອງ ກປສ ພ້ອມທັງ ໄດ້ປັບປຸງບັນດາຄູ່ມືຕ່າງໆໃຫ້ສອດຄ່ອງກັບສະພາບຕົວຈິງ ແລະ ຄວາມຕ້ອງການໃນການນໍາໃຊ້;
- ການຈັດຕັ້ງປະຕິບັດວຽກງານຂອງ ກປສ ແມ່ນດໍາເນີນໄປຕາມແຜນການ ໂດຍສ່ວນໃຫຍ່ແມ່ນບັນລຸໄດ້ຕາມຄາດໝາຍທີ່ກໍານົດໄວ້ ໂດຍສະເພາະ ການສ້າງຄວາມເຂັ້ມແຂງໃຫ້ ຫກປສ ຕາມ 8 ດັດສະນີແມ່ນສາມາດບັນລຸໄດ້ລື່ນຄາດໝາຍ;
- ການເຄື່ອນໄຫວວຽກງານຂອງການຈັດຕັ້ງທີ່ຢູ່ໃນໂຄງປະກອບຂອງ ກປສ ເຊັ່ນ: ສະພາບໍລິຫານ, ຄະນະວິຊາການ ແລະ ຫ້ອງການ ກປສ ກໍ່ໄດ້ມີການເຄື່ອນໄຫວວຽກງານຕາມປົກກະຕິ;
- ໄດ້ສ້າງຫນ່ວຍແໜງ ເປີດກວ້າງການຮ່ວມມື, ການເຊື່ອມໂຍງ ແລະ ການຫັນເປັນຄູ່ຮ່ວມງານ ກັບຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໂຄງການ ແລະ ຮ່ວມມືກັບອົງການຈັດຕັ້ງສາກົນຕ່າງໆເພື່ອລະດົມທຶນມານໍາໃຊ້ໃນວຽກງານຂອງ ກປສ;

- ໄດ້ເຮັດໜ້າທີ່ລະດົມທຶນ ແລະ ສະໜອງທຶນ ໃຫ້ແກ່ວຽກງານປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນນັ້ນລາຍຮັບໄດ້ມີການເພີ່ມຂຶ້ນ ທັງພາຍໃນ ແລະ ສາກົນ ອັນເຮັດໃຫ້ ກປສ ກາຍເປັນອົງການຈັດຕັ້ງທີ່ມີຄວາມໝັ້ນຄົງທາງດ້ານງົບປະມານຂຶ້ນໄປເລື້ອຍໆ;
- ໄດ້ຈັດຕັ້ງປະຕິບັດວຽກງານການສື່ສານ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ເພື່ອເປັນການປູກຈິດສຳນຶກ ແລະ ໂຄສະນາເຜີຍແຜ່ໂດຍຜ່ານສື່ຕ່າງໆ ບັນດານິຕິກຳທີ່ພົວພັນກັບວຽກງານ ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ທົ່ວສັງຄົມມີຄວາມຮັບຮູ້-ເຂົ້າໃຈ ແລະ ມີສ່ວນຮ່ວມໃນການປະຕິບັດວິໄສທັດ ແລະ ຍຸດທະສາດຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ.

### 5.2 ສາເຫດທີ່ພາໃຫ້ມີດ້ານດີ

- ຍ້ອນໄດ້ຮັບການຊີ້ນຳ-ນຳພາຢ່າງຈະແຈ້ງ ແລະ ໃກ້ຊິດ ຈາກສະພາບໍລິຫານ ທີ່ໄດ້ໃຫ້ທິດຊີ້ນຳ ແລະ ວິໄສທັດຕໍ່ແຜນການເຄື່ອນໄຫວວຽກງານ ຂອງ ກປສ;
- ໄດ້ຮັບການສະໜັບສະໜູນ ແລະ ການຮ່ວມມືເປັນຢ່າງດີ ຈາກຂະແໜງການທີ່ກ່ຽວຂ້ອງ ແລະ ຜູ້ຮັບທຶນຈາກກອງທຶນ ເຊັ່ນ: ກະຊວງການເງິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງກະສິກຳ ແລະ ປ່າໄມ້, ມະຫາວິທະຍາໄລແຫ່ງຊາດ ແລະ ພາກສ່ວນອື່ນໆ;
- ໄດ້ຮັບການສະໜັບສະໜູນເປັນຢ່າງດີ ຈາກຜູ້ໃຫ້ທຶນທັງພາຍໃນ ແລະ ຕ່າງປະເທດ ໂດຍສະເພາະທະນາຄານໂລກ, ບັນດາໂຄງການລົງທຶນທີ່ປະກອບພັນທະໃນການປົກປັກຮັກສາສິ່ງແວດລ້ອມ;
- ມີລະບົບຕິດຕາມກວດກາການຈັດຕັ້ງປະຕິບັດໂຄງການຕ່າງໆ ເປັນປົກກະຕິ, ມີການກວດສອບປະຈຳປີ;
- ພະນັກງານມີຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດວຽກງານຕາມແຜນການ ແລະ ມີຄວາມຮັບຜິດຊອບຕໍ່ພາລະບົດບາດ ແລະ ໜ້າທີ່ຂອງຕົນ.

### 5.3 ດ້ານອ່ອນ ແລະ ຂໍ້ຄົງຄ້າງ

- ການລະດົມທຶນ ດັ່ງທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍປົກປັກຮັກສາສິ່ງແວດລ້ອມ ແມ່ນບໍ່ໄດ້ຈັດຕັ້ງປະຕິບັດຢ່າງມີຈຸດສຸມ;
- ການເກັບລາຍຮັບ ຈາກການປະກອບສ່ວນພັນທະຂອງບັນດາໂຄງການພັດທະນາ ບໍ່ໄດ້ຈັດຕັ້ງປະຕິບັດຢ່າງທົ່ວເຖິງ ແລະ ຄົບຖ້ວນ;
- ການຈັດຕັ້ງປະຕິບັດໂຄງການຈຳນວນໜຶ່ງແມ່ນຊັກຊ້າ ຫຼື ບໍ່ບັນລຸຕາມແຜນການ ຍ້ອນຄວາມສາມາດຂອງຜູ້ຈັດຕັ້ງປະຕິບັດໂຄງການ ມີຈຳກັດ ແລະ ຂາດການປະສານງານທີ່ດີກັບ ກປສ;
- ກົນໄກໃນການຄຸ້ມຄອງໂຄງການ ລວມທັງການຊີ້ນຳ, ການຕິດຕາມກວດກາ ແລະ ປະເມີນຜົນ ແມ່ນຍັງບໍ່ມີປະສິດທິຜົນ ແລະ ຍັງບໍ່ພຽງພໍ;
- ວຽກງານເງິນກູ້ຂອງ ກປສ ແມ່ນຈັດຕັ້ງປະຕິບັດບໍ່ທັນດີປານໃດ ແລະ ການຄຸ້ມຄອງບໍ່ມີປະສິດທິຜົນເທົ່າທີ່ຄວນ ຍ້ອນຂາດພະນັກງານສິນເຊື່ອ, ທີ່ປຶກສາດ້ານກົດໝາຍ, ການຮ່ວມມືຈາກສະຖາບັນການເງິນ ຢ່າງຕໍ່ເນື່ອງ ແລະ ການຕິດຕາມຢ່າງໃກ້ຊິດ ຂອງ ກປສ ກັບ ຜູ້ກູ້ຢືມ.

### 5.4 ສາເຫດທີ່ພາໃຫ້ມີດ້ານອ່ອນ

- ຍັງບໍ່ມີນິຕິກຳຈະແຈ້ງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດການເກັບລາຍຮັບຈາກ ແຫຼ່ງຕ່າງໆ ໂດຍສະເພາະ ນິຕິກຳຂອງພາກສ່ວນກ່ຽວຂ້ອງບໍ່ໄດ້ລະບຸລະອຽດ ກ່ຽວກັບບັນຫາດັ່ງກ່າວ;

- ຍັງບໍ່ທັນມີກົນໄກ ແລະ ນິຕິກຳຈະແຈ້ງ ເພື່ອນຳໃຊ້ມາດຕະການຕໍ່ໂຄງການພັດທະນາທີ່ ບໍ່ປະກອບສ່ວນພັນທະ;
- ຍ້ອນການປະສານງານ ພາຍໃນຂອງຜູ້ຈັດຕັ້ງປະຕິບັດໂຄງການ ຍັງບໍ່ທັນໄດ້ດີ, ການຕິດຕາມ ຈາກຜູ້ຊີ້ນຳໂຄງການບໍ່ຕໍ່ເນື່ອງ, ການໃຫ້ການສະໜັບສະໜູນຂອງພະນັກງານ ກປສ ຍັງບໍ່ທັນເປັນເອກະພາບ ແລະ ວ່ອງໄວ ເຮັດໃຫ້ການຈັດຕັ້ງປະຕິບັດໂຄງການມີຄວາມຊັກຊ້າ;
- ຍ້ອນພະນັກງານຍັງຂາດປະສົບການທາງດ້ານສິນເຊື່ອ, ການຕິດຕາມ ເລັ່ງທວງດອກເບ້ຍ, ຕົ້ນທຶນ ແລະ ການນຳໃຊ້ມາດຕະການ ຕໍ່ຜູ້ກູ້ຢືມ ຍັງບໍ່ທັນເຂັ້ມງວດ ແລະ ເດັດຂາດ.

## 5.5 ບົດຮຽນທີ່ຖອດຖອນໄດ້

- ສາມາດຮັບທຶນຫຼາຍປະເພດທີ່ແຕກຕ່າງກັນ ພາຍໃຕ້ໂຄງສ້າງ ທີ່ມີໃນປະຈຸບັນ, ກປສ ສາມາດໄດ້ຮັບທຶນຊ່ວຍເຫຼືອໂດຍກົງ ໂດຍການສ້າງຮ່ວງທຶນຂຶ້ນ ເພື່ອຮອງຮັບການຄຸ້ມຄອງທຶນບົນພື້ນຖານລະບຽບຫຼັກການ ແລະ ມາດຕະຖານຂອງຜູ້ໃຫ້ທຶນ;
- ການຄຸ້ມຄອງການເງິນ ແລະ ການປະຕິບັດນະໂຍບາຍການປ້ອງກັນສິ່ງແວດລ້ອມ ແລະ ສັງຄົມໄດ້ມາດຕະຖານສາກົນ ໃນລະດັບໃດໜຶ່ງ ຊຶ່ງຜູ້ໃຫ້ທຶນສາມາດຮັບໄດ້;
- ການສະໜອງທຶນຂອງ ກປສ ເຫັນວ່າເຂົ້າເຖິງປະຊາຊົນ (ຜູ້ໄດ້ຮັບຜົນປະໂຫຍດຂັ້ນທ້ອງຖິ່ນ);
- ກົນໄກສະໜອງທຶນຂອງ ກປສ ໃຫ້ແຕ່ລະໂຄງການ ເປັນຮູບແບບທີ່ດີ ແລະ ເໝາະສົມກັບສະພາບຂອງ ສ ປ ປ ລາວ;
- ສ້າງກົນໄກຊຸກຍູ້ການກະຈາຍການຊ່ວຍເຫຼືອທຶນຮອນ ລົງສູ່ອົງການປົກຄອງ ຂັ້ນແຂວງ ແລະ ເມືອງ.

## 5.6 ມາດຕະການຈັດຕັ້ງປະຕິບັດ

ເພື່ອຮັບປະກັນ ການຈັດຕັ້ງປະຕິບັດແຜນດຳເນີນງານດັ່ງກ່າວນີ້ ຢ່າງມີປະສິດທິພາບ ແລະ ປະສິດທິຜົນນັ້ນ, ກປສ ຕ້ອງຈັດຕັ້ງປະຕິບັດມາດຕະການດຳເນີນງານ ດັ່ງນີ້ :

1. ຍົກຂີດຄວາມສາມາດ ດ້ານການຈັດຕັ້ງ, ບຸກຄະລາກອນ ແລະ ກົນໄກຄຸ້ມຄອງບໍລິຫານ ຕາມ 8 ດັດສະນີໝາຍດ້ານຄວາມອາດສາມາດ ຂອງ ກປສ;
2. ປັບປຸງກົນໄກການເງິນ ເຊັ່ນ: ການປັບປຸງບັນດາຄູ່ມືຂອງ ກປສ, ຍົກຄຸນນະພາບ ແລະ ຄວາມເປັນເຈົ້າການຂອງພະນັກງານ ພາຍໃນຫ້ອງການ, ການດຳເນີນ ວິທີການປະເມີນຜົນໄດ້ຮັບຈາກການສະໜອງທຶນ ໃນການຈັດຕັ້ງປະຕິບັດໂຄງການຕ່າງໆ ໂດຍການຊີ້ນຳ ແລະ ການຕິດຕາມກວດກາ, ການສ້າງກົນໄກ ໃນການສື່ສານກັບຂະແໜງການຫຼັກ ແລະ ຄູ່ຮ່ວມພັດທະນາ;
3. ຮັບປະກັນຜົນສຳເລັດ ໃນການຈັດຕັ້ງປະຕິບັດທິດທາງຈຸດສຸມ "ໜຶ່ງ ກປສ ໜຶ່ງ ລະບົບ" ເປັນຕົ້ນ: ການເຊື່ອມສານກົນໄກການເງິນໃຫ້ສອດຄ່ອງກັບລະບົບວິຊາການ, ລະບົບການຈັດຊື້-ຈັດຈ້າງ ແລະ ລະບົບອື່ນໆ ຂອງ ກປສ;
4. ຮັບປະກັນການຄຸ້ມຄອງທຶນ, ປະສິດທິຜົນໃນການລົງທຶນ, ການລົງທຶນເງິນກູ້ ແລະ ການນຳໃຊ້ງົບປະມານຕ່າງໆ ໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດດຳລັດຂອງ ກປສ, ນິຕິກຳລຸ່ມກົດໝາຍ ແລະ ຄູ່ມືການຄຸ້ມຄອງທຶນ ແລະ ກົດໝາຍທີ່ກ່ຽວຂ້ອງອື່ນໆ;

5. ຮັບປະກັນ ການກວດສອບບັນຊີປະຈຳປີ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດ ສອດຄ່ອງຕາມແຜນການປີ ແລະ ມີສັນຍາກັບຜູ້ກວດສອບບັນຊີ; ສົ່ງບົດລາຍງານ ໃຫ້ແກ່ຜູ້ໃຫ້ທຶນ ແລະ ຜູ້ສົນໃຈທົ່ວໄປ ໃຫ້ກົງເວລາ;
6. ຮັບປະກັນ ຄວາມໂປ່ງໃສ ຂອງກົນໄກການເງິນ ດ້ວຍຮູບການ ປະຕິບັດຕາມກົດລະບຽບ ດ້ານການເງິນ ຂອງຜູ້ໃຫ້ທຶນກໍຄື ກະຊວງການເງິນ. ກົດລະບຽບທຸກຢ່າງ ຕ້ອງໄດ້ຮັບການເຜີຍແຜ່ ໃຫ້ແກ່ມວນຊົນ ໂດຍຜ່ານແວບໄຊ ຂອງ ກປສ ແລະ ຕ້ອງເອົາໃຈໃສ່ປະຕິບັດຢ່າງເຂັ້ມງວດ. ຕ້ອງສົ່ງບົດລາຍງານ ດ້ານການເງິນ ໃນທຸກໆ 3 ເດືອນ ແລະ 6 ເດືອນ;
7. ມອບຄວາມຮັບຜິດຊອບ ໃຫ້ທຸກໆພະແນກ ຂອງ ກປສ ຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດ ດ້ວຍຄວາມຮັບຜິດຊອບສູງ.

## ພາກທີ II: ແຜນການເຄື່ອນໄຫວ ປີ 2021

### 1. ສະພາບແວດລ້ອມ ທີ່ ຕ້ອງເອົາໃຈໃສ່

ໃນການສ້າງແຜນການເຄື່ອນໄຫວປະຈຳປີ ແມ່ນໄດ້ຄຳນຶງເຖິງບັນດາປັດໃຈຕ່າງໆດັ່ງນີ້:

- ການເຕີບໂຕຂອງເສດຖະກິດໂລກ ແລະ ເສດຖະກິດຂອງບັນດາປະເທດກຳລັງພັດທະນາ ທີ່ຍັງພົບຂໍ້ຫຍຸ້ງຍາກຫຼາຍຢ່າງເນື່ອງຈາກການສະລໍຕົວຂອງການລົງທຶນ ຊຶ່ງອາດສົ່ງຜົນກະທົບຕໍ່ການລະດົມທຶນ ຂອງ ກປສ ຈາກ ອົງການຈັດຕັ້ງສາກົນ ແລະ ຜູ້ໃຫ້ທຶນຕ່າງໆ;
- ການລະບາດຂອງພະຍາດອັກເສບປອດຈຸລະໂລກສາຍພັນໃໝ່ (COVID 19) ໃນຈັງຫວະທີ່ໄວ ແລະ ລັດສະໝີກວ້າງ ເຮັດໃຫ້ມີການນຳໃຊ້ມາດຕະການເຄັ່ງຄັດໃນການປ້ອງກັນການແຜ່ລະບາດ ຊຶ່ງສົ່ງຜົນໃຫ້ການຈັດຕັ້ງປະຕິບັດ ໂຄງການຕ່າງໆ ບໍ່ເປັນໄປຕາມແຜນທີ່ກຳນົດໄວ້;
- ສະພາບບັນຫາສິ່ງແວດລ້ອມທີ່ເກີດຂຶ້ນໃນປະຈຸບັນຂອງ ສປປ ລາວ, ພາກພື້ນ ແລະ ສາກົນ ລວມທັງຄວາມສາມາດໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ຂອງພາກສ່ວນທີ່ກ່ຽວຂ້ອງ;
- ຄວາມຈຳເປັນ ໃນການຈັດລຽງບຸລິມະສິດ ການສະໜອງທຶນຢ່າງມີຈຸດສຸມ ເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດສັງຄົມຂອງລັດຖະບານ ໃນສະພາບທຶນທີ່ມີຈຳກັດ ແລະ ປະກອບສ່ວນ ຕໍ່ການຟື້ນຕົວຂອງ ເສດຖະກິດ;
- ເດັດຂາດໂຈະການສະໜອງທຶນທີ່ບໍ່ມີປະສິດທິຜາບ, ບໍ່ໄດ້ຮັບໝາກຜົນ ແລະ ບໍ່ສາມາດເຫັນເປັນຮູບປະທຳ.

### 2. ທິດທາງລວມ

ໃນປີ 2021 ກປສ ໄດ້ວາງທິດທາງລວມ ໃຫ້ສອດຄ່ອງ ແລະ ໄປຕາມແຜນຍຸດທະສາດ ຮອດປີ 2021-2025 ຂອງ ກປສ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ 9 ແລະ ແຜນການປະຈຳປີ ຂອງ ກຊສ ຄື: "ສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງ ແລະ ບຸກຄະລາກອນໃຫ້ຮັບປະກັນທາງດ້ານຄຸນນະພາບ ແລະ ປະລິມານ, ສູ້ຊົນໃຫ້ສຳເລັດການປັບປຸງລະບົບການຄຸ້ມຄອງ-ບໍລິຫານບັນຊີ ໃຫ້ໄປຕາມທິດ "ໜຶ່ງ ກປສ ໜຶ່ງ ລະບົບ", ເພີ່ມທະວີການມີສ່ວນຮ່ວມ ແລະ ການຮ່ວມມືກັບອົງການຈັດຫາແຫຼ່ງທຶນ, ຍົກລະດັບຄວາມພ້ອມ ໃນການເປັນອົງການແຫ່ງຊາດ ທີ່ສາມາດເຂົ້າເຖິງແຫຼ່ງທຶນໄດ້ໂດຍກົງ ແລະ ກະກຽມບົດສະເໜີໂຄງການໃໝ່ເພື່ອສະເໜີຂໍທຶນຈາກອົງການສະໜອງທຶນຕ່າງໆ ເພື່ອສະໜອງທຶນໃຫ້ແກ່ ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມທິດ ສີຂຽວ ແລະ ຍືນຍົງ".

### 3. ຄາດໝາຍສູ້ຊົນ

ສຳລັບແຜນການ ປີ 2021 ໄດ້ວາງຄາດໝາຍສູ້ຊົນ ດັ່ງນີ້:

#### *3.1* ດ້ານການຈັດຕັ້ງ

ສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງ, ພະນັກງານ ແລະ ການຄຸ້ມຄອງ-ບໍລິຫານ ຢ່າງເປັນລະບົບໂດຍໃຫ້ມີນິຕິກຳທີ່ເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານ, ມີພະນັກງານທີ່ພຽງພໍ ທັງດ້ານຄຸນນະພາບ ແລະ ປະລິມານ ແລະ ມີລະບົບການຄຸ້ມຄອງບໍລິຫານການເງິນທີ່ມີປະສິດທິຜາບ ແລະ ໜ້າເຊື່ອຖື.

### 3.2 ດ້ານການຄຸ້ມຄອງບໍລິຫານ

ຫກປສ ສາມາດວັດແທກປະສິດທິພາບໃນການຈັດຕັ້ງປະຕິບັດວຽກງານ ຕາມແຜນການທີ່ລະບຸໄວ້ໃນວິໄສທັດ, ຍຸດທະສາດ, ແຜນການສະດົມທຶນ ແລະ ການສະໜອງທຶນ ແລະ ຄູ່ມືຄຸ້ມຄອງ-ບໍລິຫານ ຂອງ ກປສ ໂດຍນຳໃຊ້ດັດສະນີຄວາມອາດສາມາດ (FCI);

### 3.3 ດ້ານການແກ້ໄຂຜົນການກວດສອບ -

ສູ້ຊົນແກ້ໄຂໃຫ້ຂາດໂຕ ບັນດາຄຳເຫັນຂອງຄະນະກວດສອບພາຍໃນ ແລະ ພາຍນອກ ສຳລັບປີຜ່ານມາ ພ້ອມທັງປັບປຸງລະບົບການຄຸ້ມຄອງການເງິນໃຫ້ມີຄວາມເຂັ້ມແຂງ ເພື່ອຫຼີກລ້ຽງ ບັນຫາຊ້ຳເຮື້ອບໍ່ໃຫ້ເກີດຂຶ້ນ ແລະ ຫຼຸດຜ່ອນບັນຫາໃໝ່ທີ່ຈະກວດພົບໃນການກວດສອບຄັ້ງຕໍ່ໄປ.

### 3.4 ດ້ານບຸກຄະລາກອນ

ປະກອບ ແລະ ຄັດຈ້ອນພະນັກງານໃຫ້ພຽງພໍທັງທາງດ້ານປະລິມານ ແລະ ຄຸນນະພາບ ໂດຍປະເມີນຄວາມຕ້ອງການຂອງອົງກອນທາງດ້ານພະນັກງານ (staff need assesment) ໃຫ້ສອດຄ່ອງຕາມແຫຼ່ງລາຍຮັບ ແລະ ໜ້າວຽກ ພ້ອມທັງ ປັບປຸງຄຸນນະພາບໃນການປະຕິບັດວຽກງານຂອງພະນັກງານ ຫກປສ ໂດຍຜ່ານການນຳໃຊ້ ຕົວຊີ້ວັດຜົນງານ (Key Performance Indicator KPI) ຢ່າງໜ້ອຍໃຫ້ບັນລຸ 70% ຂອງ ການກຳນົດຕົວຊີ້ວັດໃນການປະຕິບັດວຽກງານ;

### 3.5 ດ້ານການລະດົມທຶນ

ໃຫ້ບັນລຸມູນຄ່າ ທັງໝົດ ປະມານ 16.41 ລ້ານໂດລາສະຫາລັດ ໂດຍຄາດຄະເນລາຍຮັບຈາກດອກເບ້ຍເງິນຝາກ ແລະ ດອກເບ້ຍເງິນກູ້ ປະມານ 0.33 ລ້ານໂດລາສະຫະລັດ, ລາຍຮັບຈາກ ທຶນປະກອບສ່ວນ ປະຕິບັດພັນທະ ຂອງໂຄງການລົງທຶນພັດທະນາໄຟຟ້າ ແລະ ບໍ່ແຮ່ ປະມານ 1 ລ້ານໂດລາສະຫະລັດ, ລາຍຮັບຈາກທຶນສາກົນ 15.08 ລ້ານໂດລາສະຫະລັດ;

### 3.6 ດ້ານການສື່ສານ

ສຸມໃສ່ການເຜີຍແຜ່ລະບຽບການຄຸ້ມຄອງ ກປສ ແລະ ຄູ່ມືການຄຸ້ມຄອງໂຄງການໃຫ້ແກ່ພະນັກງານ ກປສ ແລະ ໂຄງການຍ່ອຍ, ສ້າງແຜນດຳເນີນງານ ການລະດົມທຶນ ແລະ ການສື່ສານ 2021-2025, ໂຄສະນາເຜີຍແຜ່ກ່ຽວກັບຜົນງານການຈັດຕັ້ງປະຕິບັດວຽກງານ ກປສ ໃນການປະກອບສ່ວນເຂົ້າໃນການປົກປັກຮັກສາສິ່ງແວດລ້ອມຢ່າງເປັນປົກກະຕິ ໂດຍຜ່ານສື່ຕ່າງໆ ເຊັ່ນ: ແຜ່ນພັບ, ໂປສເຕີ້, ໜັງສືພິມ, ວາລະສານ, ວິທະຍຸ, ໂທລະພາບ, ວິດີໂອສັ້ນ, ເວບໄຊ ແລະ ເຟສບຸກ.

### 3.7 ດ້ານການຮ່ວມມື

ສືບຕໍ່ປະສານສົມທົບກັບພາກລັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ ເພື່ອເພີ່ມທະວີເຄືອຄ່າຍການຮ່ວມມື ແລະ ການຫັນເປັນຄູ່ຮ່ວມງານກັບ ອົງການຈັດຕັ້ງຕ່າງໆ ໃຫ້ຍືນຍົງເຊັ່ນ: ທະນາຄານໂລກ (WB), ທະນາຄານພັດທະນາອາຊີ (ADB), ກອງທຶນສິ່ງແວດລ້ອມໂລກ (GEF), ກອງທຶນສີຂຽວ ດ້ານການປ່ຽນແປງດິນຟ້າອາກາດສາກົນ (GCF) ແລະ ອົງການຈັດຕັ້ງອື່ນໆ.

### 3.8 ດ້ານການສະໜອງທຶນ

ໃນປີ 2021 ກປສ ຕ້ອງຮັບປະກັນ ການສະໜອງທຶນ ໄປຕາມທິດທາງແຜນການທີ່ວາງໄວ້ ແລະ ບັນລຸຄາດໝາຍປະມານ 16.41 ລ້ານໂດລາສະຫະລັດ (1.33 ລ້ານໂດລາສະຫະລັດ ມາຈາກທຶນພາຍໃນ ແລະ 15.08 ລ້ານໂດລາສະຫະລັດ ມາຈາກແຫຼ່ງທຶນສາກົນ). ໃນນັ້ນ, ຈາກກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ

ສາກົນ ໃຫ້ລັດຖະບານ ໂດຍຜ່ານອົງການ GIZ 6.29 ລ້ານໂດລາສະຫະລັດ ແລະ ຜ່ານອົງການ UNEP 3.03 ລ້ານໂດລາສະຫະລັດ ແລະ EPF/GCF (grant fund for TA, 2021-2022 ຈຳນວນ 0.2 ລ້ານໂດລາສະຫະລັດ) ແລະ ຄສລ2 ໂດຍຜ່ານທະນາຄານໂລກ 5.55 ລ້ານໂດລາສະຫະລັດ.

## 4. ວຽກຈຸດສຸມ

### 4.1 ດ້ານການຈັດຕັ້ງ

ສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງ, ພະນັກງານ ແລະ ການຄຸ້ມຄອງ-ບໍລິຫານ ຢ່າງເປັນລະບົບ ໂດຍໃຫ້ມີນິຕິກຳທີ່ເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານ, ມີພະນັກງານທີ່ພຽງພໍທັງດ້ານຄຸນນະພາບ ແລະ ປະລິມານ ແລະ ມີລະບົບການຄຸ້ມຄອງບໍລິຫານການເງິນທີ່ມີປະສິດທິພາບ ແລະ ໜ້າເຊື່ອຖື ໂດຍສຸມໃສ່ໜ້າວຽກລຸ່ມນີ້:

1. ປັບປຸງນິຕິກຳ (ລະບຽບການຄຸ້ມຄອງ ກປສ ແລະ ຄູ່ມືຄຸ້ມຄອງບໍລິຫານຕ່າງໆ) ໃຫ້ສຳເລັດ ເພື່ອຮັບປະກັນການເຄື່ອນໄຫວວຽກງານໃຫ້ຖືກຕ້ອງຕາມພາລະບົດບາດ, ແຜນການ ແລະ ເປັນເງື່ອນໄຂສາມາດກາຍເປັນອົງກອນທີ່ເຂົ້າຫາແຫຼ່ງທຶນສາກົນໂດຍກົງ;
2. ປັບປຸງລະບົບບັນຊີ ແລະ ການລາຍງານ ໃຫ້ສະຖຽນ ແລະ ມີປະສິດທິຜົນ;
3. ປັບປຸງໂຄງຮ່າງກົງຈັກການຈັດຕັ້ງ ຈາກ 4 ພະແນກ ເປັນ 3 ພະແນກ ແລະ ປ່ຽນຊື່ພະແນກໃໝ່ ພ້ອມທັງກຳນົດສິດໜ້າທີ່ຄວາມຮັບຜິດຊອບແຕ່ລະພະແນກໃຫ້ສອດຄ່ອງກັບສະພາບການເຄື່ອນໄຫວວຽກງານ ຄື: 1.ພະແນກ ການເງິນ, 2. ພະແນກ ຄຸ້ມຄອງໂຄງການ, 3. ພະແນກ ບໍລິຫານ ແລະ ແຜນການ;
4. ຈັດກອງປະຊຸມ ສະພາບໍລິຫານ ກປສ ສະໄໝສາມັນ ໃຫ້ໄດ້ຢ່າງໜ້ອຍ 2 ຄັ້ງ/ປີ ແລະ ກອງປະຊຸມຄະນະວິຊາການ ກປສ 4 ຄັ້ງ/ປີ ດັ່ງທີ່ກຳນົດໄວ້ໃນ ດຳລັດ ວ່າດ້ວຍ ກອງທຶນປົກປັກຮັກສາສິ່ງແວດລ້ອມ;
5. ສ້າງຄວາມເຂັ້ມແຂງໃຫ້ພະນັກງານ ຫກປສ ໂດຍສ້າງແຜນພັດທະນາບຸກຄະລາກອນປະຈຳປີ ໃນການຈັດຝຶກອົບຮົມ ໄລຍະສັ້ນ/ໄລຍະຍາວ ທັງພາຍໃນ ແລະ ພາຍນອກ.

### 4.2 ດ້ານການຄຸ້ມຄອງ ບໍລິຫານ

ຫກປສ ສາມາດວັດແທກປະສິດທິພາບໃນການຈັດຕັ້ງປະຕິບັດວຽກງານ ຂອງ ຫກປສ ຕາມແຜນການທີ່ລະບຸໄວ້ໃນ ວິໄສທັດ, ຍຸດທະສາດ, ແຜນການສະດົມທຶນ ແລະ ການສະໜອງທຶນ ແລະ ຄູ່ມືຄຸ້ມຄອງ-ບໍລິຫານ ຂອງ ກປສ ໂດຍນຳໃຊ້ດັດສະນີຄວາມອາດສາມາດ (FCI):

1. ສືບຕໍ່ປັບປຸງໃຫ້ສຳເລັດ ຄູ່ມືຄຸ້ມຄອງ-ບໍລິຫານ ຂອງ ກປສ ໃຫ້ສອດຄ່ອງກັບສະພາບຕົວຈິງ ແລະ ສາມາດຄຸ້ມຄອງໂຄງການຈາກຫຼາຍແຫຼ່ງທຶນຢ່າງມີປະສິດທິຜົນ;
2. ປັບປຸງລະບົບການຄຸ້ມຄອງ ແລະ ບູລະນະຮັກສາສິ່ງອຳນວຍຄວາມສະດວກ ຂອງຫ້ອງການໃຫ້ມີປະສິດທິພາບ, ປະສິດຜົນຜົນ, ຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍ ແລະ ລະບຽບກົດໝາຍ ໂດຍຕ້ອງມີການກວດນັບຊັບສິນ ຢ່າງນ້ອຍປີລະຄັ້ງ.
3. ປັບປຸງການປະຕິບັດໜ້າທີ່ຂອງພະນັກງານ ເພື່ອສາມາດຕອບສະໜອງວຽກປະຈຳວັນ ດ້ວຍຄວາມວ່ອງໄວ (ໃຫ້ຄຳເຫັນ ຫຼື ຕອບກັບເອກະສານຕ່າງໆທີ່ເຂົ້າມາ ຫກປສ ໃຫ້ທັນຕາມກຳນົດເວລາ ໂດຍສ້າງລະບົບຕິດຕາມກວດກາເອກະສານ.

4. ປັບປຸງການບໍລິຫານຈັດການເພື່ອຕອບສະໜອງໃຫ້ແກ່ການເຄື່ອນໄຫວວຽກງານໃຫ້ມີຄວາມສະດວກ ວ່ອງໄວ ແລະ ຮັບປະກັນຄວາມຖືກຕ້ອງເຊັ່ນ: ການຈັດກອງປະຊຸມ ພາຍໃນ ຫຼື ນອກສະຖານທີ່ ຫຼື ຈັດກິດຈະກໍາຕ່າງໆ ຕາມແຜນການ, ປະຕິບັດຂັ້ນຕອນຕາມລະບຽບການ, ມີການເຮັດບົດບັນທຶກກອງປະຊຸມທຸກຄັ້ງ ແລະ ສະຫຼຸບການໃຊ້ຈ່າຍຕາມກອບເວລາທີ່ຄູ່ມືກໍານົດໄວ້.
5. ການຄຸ້ມຄອງຄ່າບໍລິຫານ ຫກປສ ໃຫ້ຢູ່ໃນເກນຕໍ່າກວ່າ 20% ຂອງງົບປະມານທີ່ເບີກຈ່າຍປະຈໍາປີ.

### 4.3 ດ້ານການແກ້ໄຂຜົນການກວດສອບ

ສູ້ຊົນແກ້ໄຂໃຫ້ຂາດໂຕ ບັນດາຄໍາເຫັນຂອງຄະນະກວດສອບພາຍໃນ ແລະ ພາຍນອກ ສໍາລັບປີຜ່ານມາ ພ້ອມທັງປັບປຸງລະບົບການຄຸ້ມຄອງການເງິນໃຫ້ມີຄວາມເຂັ້ມແຂງ ເພື່ອຫຼີກລ້ຽງ ບັນຫາຊໍ້າເຮື້ອບໍ່ໃຫ້ເກີດຂຶ້ນ ແລະ ຫຼຸດຜ່ອນບັນຫາໃໝ່ທີ່ຈະກວດພົບໃນການກວດສອບຄັ້ງຕໍ່ໄປ ໂດຍມີໜ້າວຽກຈຸດສຸມດັ່ງນີ້:

1. ສ້າງແຜນດໍາເນີນງານແກ້ໄຂຄໍາແນະນໍາຜົນການກວດສອບປະຈໍາປີ;
2. ເຜີຍແຜ່ບົດລາຍງານ ຜົນການກວດສອບປະຈໍາປີໃຫ້ແກ່ ບັນດາໂຄງການທີ່ໄດ້ຮັບທຶນຈາກ ກປສ ພ້ອມທັງແນະນໍາ ແລະ ຕິດຕາມການແກ້ໄຂບັນຫາຜົນການກວດສອບທີ່ຕິດພັນກັບໂຄງການຂອງຕົນ;
3. ລົງຕິດຕາມຊຸກຍູ້ໂຄງການທີ່ພົບຄວາມຫຍຸ້ງຍາກໃນການສະຫຼຸບສະສາງດ້ານການເງິນ ແລະ ໂຄງການທີ່ພົບເຫັນບັນຫາໃນການກວດສອບແຕ່ລະປີ ເພື່ອຊ່ວຍແກ້ໄຂບັນຫາ;
4. ສ້າງກົນໄກກວດສອບພາຍໃນ ຫກປສ ເພື່ອຮັບປະກັນຄວາມຖືກຕ້ອງໃນການຄຸ້ມຄອງບໍລິຫານ ແລະ ສາມາດສະໜອງຂໍ້ມູນໃຫ້ອົງການກວດສອບແຫ່ງລັດ ແລະ ພາກສ່ວນກວດສອບພາຍນອກ;
5. ແຕ່ງຕັ້ງຄະນະຮັບຜິດຊອບກະກຽມການກວດສອບພາຍໃນກ່ອນຈະມີການກວດສອບປະຈໍາປີເພື່ອຮັບປະກັນທາງດ້ານເອກະສານໃຫ້ແກ່ອົງການກວດສອບແຫ່ງລັດ ແລະ ພາກສ່ວນກວດສອບພາຍນອກ;

### 4.4 ດ້ານບຸກຄະລາກອນ

ປະກອບ ແລະ ຄັດຈ້ອນພະນັກງານໃຫ້ພຽງພໍທັງດ້ານປະລິມານ ແລະ ຄຸນນະພາບ ໂດຍປະເມີນຄວາມຕ້ອງການຂອງອົງກອນທາງດ້ານພະນັກງານ (staff need assesment) ໃຫ້ສອດຄ່ອງຕາມແຫຼ່ງລາຍຮັບ ແລະ ໜ້າວຽກ ພ້ອມທັງ ປັບປຸງຄຸນນະພາບໃນການປະຕິບັດວຽກງານຂອງພະນັກງານ ຫກປສ ໂດຍຜ່ານການນໍາໃຊ້ ຕົວຊີ້ວັດຜົນງານ (Key Performance Indicator KPI) ຢ່າງໜ້ອຍໃຫ້ບັນລຸ 70% ຂອງ ການກໍານົດຕົວຊີ້ວັດໃນການປະຕິບັດວຽກງານ ຊຶ່ງປະກອບມີວຽກງານດັ່ງນີ້:

1. ປະກອບພະນັກງານໃຫ້ເຕັມຕາມຕໍາແໜ່ງງານ ແລະ ປ່ຽນແທນ ກໍລະນີມີພະນັກງານລາອອກ ຫລື ບໍ່ສືບຕໍ່ສັນຍາ ລວມທັງຊ່ຽວຊານຕ່າງປະເທດທີ່ເຮັດວຽກ ໄລຍະສັ້ນ;
2. ດໍາເນີນການປະເມີນຄວາມຕ້ອງການຂອງອົງກອນທາງດ້ານພະນັກງານ (Staff need assessment) ໃຫ້ສອດຄ່ອງກັບແຫ່ງລາຍຮັບ ເຊັ່ນ: ທຶນພາຍໃນ, ທຶນທະນາຄານໂລກ, ທຶນຈີໄອແຊັດ, ທຶນຂອງ ຢູເນັບ ແລະ ທຶນອື່ນໆ ທີ່ ຫກປສ ຄຸ້ມຄອງ-ບໍລິຫານ;
3. ປັບປຸງຄຸນນະພາບໃນການປະຕິບັດວຽກງານຂອງພະນັກງານ ໂດຍການກໍານົດຄາດໝາຍສູ້ຊົນ ແລະ ແຜນວຽກຈຸດສຸມຂອງແຕ່ລະຄົນ ເປັນອັນລະອຽດລົງໃນແບບຟອມ KPI ແລະ ແຜນວຽກລວມຂອງແຕ່ລະພະແນກ;
4. ຝຶກອົບຮົມ ທັງໄລຍະສັ້ນ ແລະ ໄລຍະຍາວໃຫ້ພະນັກງານ ກ່ຽວກັບຫລັກສູດວິຊາສະເພາະ ທີ່ຕິດພັນກັບວຽກງານຕົວຈິງເພື່ອສ້າງຂີດຄວາມສາມາດທາງດ້ານຄວາມຮູ້ ແລະ ຄວາມສາມາດ ໃນການຈັດຕັ້ງ

ປະຕິບັດວຽກງານ ໃຫ້ໄດ້ປະສິດທິພາບ ຊຶ່ງການຈັດຝຶກອົບຮົມໃຫ້ພະນັກງານຈະແບ່ງເປັນ 2 ວຽກຫລັກຄື: (1) ການຝຶກອົບຮົມຂັ້ນພື້ນຖານກ່ຽວກັບການຄຸ້ມຄອງໂຄງການ ແລະ ການຈັດຕັ້ງປະຕິບັດວຽກງານຂອງ ກປສ ແລະ (2) ຝຶກອົບຮົມສະເພາະດ້ານອີງໃສ່ຄວາມຕ້ອງການຂອງແຕ່ລະພະແນກ ແລະ ພະນັກງານ ຊຶ່ງວິຊາການດ້ານບຸກຄະລາກອນຈະຮັບຜິດຊອບການຝຶກອົບຮົມຂໍ້ມູນພື້ນຖານຂອງ ຫກປສ ໃຫ້ແກ່ພະນັກງານເຂົ້າໃໝ່. ສຳລັບການຝຶກອົບຮົມສະເພາະດ້ານ ແລະ ການຄຸ້ມຄອງໂຄງການ ຈະຈັດຂຶ້ນເປັນຫົວຂໍ້ສະເພະ ໂດຍການຝຶກພາຍໃນຫ້ອງການ ຫຼື ເຂົ້າຮ່ວມການຈັດຝຶກອົບຮົມຈາກພາຍນອກ;

5. ດຳເນີນການປະເມີນ ແລະ ສັງລວມຄວາມຕ້ອງການດ້ານການຝຶກອົບຮົມເພື່ອຮັບປະກັນໃຫ້ການຝຶກອົບຮົມຕອບສະໜອງໄດ້ຕາມຄາດໝາຍ ແລະ ຄວາມຕ້ອງການຂອງພະນັກງານ ໂດຍສອດຄ່ອງກັບບູລິມະສິດໃນການຄຸ້ມຄອງໂຄງການຂອງ ຫກປສ, ຊຶ່ງແຜນການຝຶກອົບຮົມຈະຕ້ອງລວມເຂົ້າໃນແຜນວຽກ ແລະ ແຜນງົບປະມານປະຈຳປີ ຂອງ ກປສ ພ້ອມນັ້ນ ໃນທ້າຍປີ ຕ້ອງປະເມີນຄືນຜົນການຈັດຝຶກອົບຮົມປະຈຳປີ ເພື່ອຕີລາຄາປະສິດທິຜົນຂອງການຝຶກອົບຮົມ, ພະນັກງານທີ່ໄດ້ຮັບການຝຶກອົບຮົມຈະຕ້ອງໄດ້ເຮັດບົດລາຍງານ ແລະ ແນະນຳບົດຮຽນໃຫ້ພະນັກງານດ້ວຍກັນເພື່ອແຜ່ຂໍ້ມູນ ແລະ ຄວາມຮູ້ທີ່ໄດ້ຝຶກມາ ຢ່າງໜ້ອຍ 1 ຄັ້ງຕໍ່ປີ;
6. ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງພະນັກງານໄລຍະທົດລອງງານ ແລະ ປະຈຳປີ ຂອງ ຫກປສ ຕາມແບບຟອມ ກຊສ 1 ຄັ້ງ/ປີ.
7. ຄວບຄຸມອັດຕາເຂົ້າອອກພະນັກງານບໍ່ເກີນ 8% ໂດຍການສຶກສາສາເຫດ ແລະ ສຳຫຼວດຄ່າຕອບແທນ ແລະ ນະໂຍບາຍອື່ນໆ ຂອງພະນັກງານພາຍໃນອົງກອນທຽບໃສ່ກົນໄກຕະຫຼາດ ພ້ອມທັງໃຫ້ຄຳແນະນຳໃນການປັບປຸງແກ້ໄຂ;
8. ຊຸກຍູ້ໃຫ້ພະນັກງານຮຽນຮູ້ ແລະ ກຳແໜ້ນກ່ຽວກັບນິຕິກຳ ຂອງ ກປສ ດ້ວຍຕົນເອງ ເພື່ອເປັນບ່ອນອີງໃນການເຄື່ອນໄຫວວຽກງານເຊັ່ນ: ວິໄສທັດ, ຍຸດທະສາດ, ດຳລັດວ່າດ້ວຍກອງທຶນປົກປັກຮັກສາສິ່ງແວດລ້ອມ, ຂໍ້ຕົກລົງວ່າດ້ວຍລະບຽບການຄຸ້ມຄອງ ກປສ, ຄູ່ມືຄຸ້ມຄອງໂຄງການ ແລະ ເອກະສານສຳຄັນອື່ນໆ ທີ່ກ່ຽວຂ້ອງ.

### 4.5 ດ້ານການລະດົມທຶນ

ສູ້ຊົນສ້າງແຫຼ່ງລາຍຮັບທີ່ມີທ່າແຮງເຊັ່ນ: ລາຍຮັບຈາກດອກເບ້ຍເງິນຝາກ, ລາຍຮັບຈາກດອກເບ້ຍເງິນກູ້, ລາຍຮັບຈາກການປະກອບສ່ວນປະຕິບັດພັນທະ ຂອງໂຄງການລົງທຶນພັດທະນາໄຟຟ້າ ແລະ ບໍ່ແຮ່; ລາຍຮັບຈາກການຊ່ວຍເຫຼືອໂດຍກົງ ຈາກພາຍໃນ ແລະ ຕ່າງປະເທດ ໃຫ້ບັນລຸມູນຄ່າ 12.00 ລ້ານໂດລາສະຫາລັດ ໂດຍຄາດຄະເນ ລາຍຮັບຈາກດອກເບ້ຍເງິນຝາກ ແລະ ດອກເບ້ຍເງິນກູ້ ປະມານ 0.33 ລ້ານໂດລາສະຫະລັດ, ລາຍຮັບຈາກທຶນປະກອບສ່ວນປະຕິບັດພັນທະ ຂອງໂຄງການລົງທຶນພັດທະນາໄຟຟ້າ ແລະ ບໍ່ແຮ່ ປະມານ 1 ລ້ານໂດລາສະຫະລັດ ລາຍຮັບຈາກທຶນສາກົນ 10.67 ລ້ານໂດລາສະຫະລັດ (ຈາກທະນາຄານໂລກ 4.93 ລ້ານໂດລາສະຫະລັດ, ອົງການ GIZ/GCF 3.00 ລ້ານໂດລາສະຫະລັດ, ອົງການ UNEP/GCF 2.54 ລ້ານໂດລາສະຫະລັດ ແລະ ທຶນຈາກ GCF ສຳລັບການກະກຽມຄວາມພ້ອມ ໃຫ້ ກປສ 0.2 ລ້ານໂດລາສະຫະລັດ). ລາຍລະອຽດມີໃນຕາຕະລາງ 4

**ຕາຕະລາງ 4: ຄາດຄະເນແຫຼ່ງລາຍຮັບໃນປີ 2021**

| ແຫຼ່ງລາຍຮັບຕົ້ນຕໍ | ຄາດຄະເນລາຍຮັບ ແຜນປີ 2021 | |
|---|---|---|
| | ກີບ | ໂດລາສະຫາລັດ |
| **I ລາຍຮັບພາຍໃນ** | **12,245,500,000.00** | **1,331,033** |
| ດອກເບ້ຍຈາກຕົ້ນທຶນ 5.5 ລ້ານໂດລາ ທີ່ຝາກໄວ້ | 3,036,000,000.00 | 330,000 |
| ລາຍຮັບ-ດອກເບ້ຍ ຈາກເງິນປ່ອຍກູ້ | 9,500,000.00 | 1,033 |
| ທຶນປະກອບສ່ວນຈາກໂຄງການບໍ່ແຮ່ | 4,140,000,000.00 | 450,000 |
| ທຶນປະກອບສ່ວນຈາກໂຄງການໄຟຟ້າ | 5,060,000,000.00 | 550,000 |
| **II ລາຍຮັບ ສາກົນ** | **98,164,386,400.00** | **10,670,042** |
| ທຶນຈາກທະນາຄານໂລກ (ຄສລ2) | 45,368,254,400.00 | 4,931,332 |
| ອົງການ GIZ / GCF (ໂຄງການ I-GFLL) | 27,600,000,000.00 | 3,000,000 |
| ອົງການ UNEP/GCF | 23,356,132,000.00 | 2,538,710 |
| ທຶນຈາກ GCF ສຳລັບ ກະກຽມຄວາມພ້ອມໃຫ້ ກປສ | 1,840,000,000.00 | 200,000 |
| **ລວມລາຍຮັບ (I+II)** | **110,409,886,400.00** | **12,001,075** |

ເພື່ອໃຫ້ບັນລຸເປົ້າໝາຍໃນການເຂົ້າເຖິງແຫຼ່ງທຶນໃໝ່ ກປສ ຈະຕ້ອງໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າສ້າງນິຕິກຳມາຮອງຮັບ ຕາມທີ່ກຳນົດໄວ້ໃນດຳລັດວ່າດ້ວຍ ກປສ ເພື່ອຈັດຕັ້ງປະຕິບັດວຽກງານລະດົມທຶນດັ່ງນີ້:

1. ດອກເບ້ຍເງິນຝາກ: ສືບຕໍ່ຕິດຕາມການເກັບດອກເບ້ຍເງິນຝາກຢ່າງເປັນປົກກະຕິ ພ້ອມນັ້ນ ສະເໜີເພີ່ມຕົ້ນທຶນເງິນຝາກ ຈຳນວນ 1 ລ້ານໂດລາສະຫະລັດ ຈາກບ້ວງທຶນສະສົມການປະກອບສ່ວນຂອງໂຄງການພັດທະນາ ຂະແໜງໄຟຟ້າ ແລະ ບໍ່ແຮ່ ເພື່ອເປັນການເພີ່ມລາຍຮັບຈາກດອກເບ້ຍເງິນຝາກ;
2. ເງິນກູ້: ໃນປີ 2019 ກອງປະຊຸມສະພາບໍລິຫານໄດ້ເຫັນດີໃຫ້ຢຸດເກັບດອກເບ້ຍເງິນກູ້ ນຳບັນດາຜູ້ກູ້ຢືມ ສະນັ້ນ ກປສ ຈະບໍ່ມີລາຍຮັບຈາກດອກເບ້ຍເງິນກູ້ ແຕ່ຈະສືບຕໍ່ເກັບກູ້ຕົ້ນທຶນຄືນ. ດັ່ງນັ້ນ ຈະໄດ້ມີການກວດກາ ແລະ ປະເມີນຄືນຄວາມສາມາດໃນການຊຳລະໜີ້ຂອງແຕ່ລະຜູ້ກູ້ຢືມ ເພື່ອສ້າງແຜນຊຳລະໜີ້ຄືນໃໝ່;
3. ການເກັບພັນທະຈາກໂຄງການລົງທຶນ: ສູ້ຊົນເກັບລາຍຮັບຈາກການປະກອບສ່ວນທາງດ້ານສິ່ງແວດລ້ອມ ຈາກໂຄງການພັດທະນາຂະແໜງໄຟຟ້າ ແລະ ບໍ່ແຮ່ ຕາມແຜນການທີ່ກຳນົດໄວ້ ໂດຍການກວດກາຄືນບັນຊີລາຍຊື່ບໍລິສັດທີ່ຈະຕ້ອງປະຕິບັດພັນທະ ແລະ ຈັດກຸ່ມໂຄງການທີ່ປະຕິບັດພັນທະໄດ້ດີ ເປັນປົກກະຕິ ແລະ ໂຄງການທີ່ບໍ່ປະຕິບັດພັນທະ ພ້ອມທັງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງເພື່ອຊ່ວຍຊຸກຍູ້ ແລະ ຫາວິທີການແກ້ໄຂ;
4. ແຫຼ່ງລາຍຮັບຈາກທຶນສາກົນ: ປະຕິບັດການເບີກຈ່າຍ ແລະ ຕິດຕາມການສະຫຼຸບສະສາງດ້ານການເງິນຂອງໂຄງການຕ່າງໆໃຫ້ຖືກຕ້ອງຕາມລະບຽບ ເພື່ອສາມາດຄ່ຽນເງິນໄດ້ຕາມແຜນການທີ່ກຳນົດໄວ້;

5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາ (ທະນາຄານໂລກ) ເພື່ອກະກຽມໂຄງການໃໝ່ເຊັ່ນ: ໂຄງການຄຸ້ມຄອງສິ່ງແວດລ້ອມ ແລະ ສິ່ງເສດເຫຼືອ (EWMP), ເກັບກໍາຂໍ້ມູນກ່ຽວກັບສິ່ງເສດເຫຼືອຕິດເຊື້ອ ແລະ ສິ່ງເສດເຫຼືອຊີວະພາບ (Hospital waste and Organic waste) ແລະ ການກະກຽມການເຂົ້າເຖິງກອງທຶນ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ (Climate Change Adaptation Fund) ໂດຍການປະສານສົມທົບກັບຈຸດປະສານງານແຫ່ງຊາດ ແລະ ສຶກສາຂໍ້ມູນທີ່ກ່ຽວຂ້ອງເພື່ອກະກຽມການສະໝັກ ເປັນອົງກອນທີ່ຖືກຮັບຮອງຈາກກອງທຶນດັ່ງກ່າວ;
6. ສືບຕໍ່ສຶກສາຄົ້ນຄວ້າລາຍຮັບຈາກແຫຼ່ງທຶນໃໝ່ເຊັ່ນ: ປະສານສົມທົບ ແລະ ຕິດຕາມກັບພາກສ່ວນທີ່ກ່ຽວຂ້ອງ ໃນການປັບປຸງ ດໍາລັດປະທານປະເທດກ່ຽວກັບການຈ່າຍຄ່ານໍ້າເປື້ອນ (ແຫຼ່ງທຶນພາຍໃນ).

### *4.6 ດ້ານການສື່ສານ*

ສຸມໃສ່ການເຜີຍແຜ່ ລະບຽບການຄຸ້ມຄອງ ກປສ ແລະ ຄູ່ມືການຄຸ້ມຄອງໂຄງການໃຫ້ແກ່ພະນັກງານ ກປສ ແລະ ໂຄງການຍ່ອຍ, ສ້າງແຜນດໍາເນີນງານ ການລະດົມທຶນ ແລະ ການສື່ສານ, ໂຄສະນາເຜີຍແຜ່ ກ່ຽວກັບຜົນງານການຈັດຕັ້ງປະຕິບັດວຽກງານ ກປສ ໃນການປະກອບສ່ວນ ເຂົ້າໃນການປົກປັກຮັກສາສິ່ງແວດລ້ອມ ຢ່າງເປັນປົກະຕິ ໂດຍຜ່ານສື່ຕ່າງໆ ເຊັ່ນ: ໜັງສືພິມ, ວາລະສານ, ວິທະຍຸ, ໂທລະພາບ, ວີດີໂອສັ້ນ, ເວບໄຊ ແລະ ເຟສບຸກ. ກປສ ຈະສຸມໃສ່ໜ້າວຽກລຸ່ມນີ້:

- ສ້າງວາລະສານ ຫຼື ລົງໂຄສະນາຜ່ານສື່ອື່ນໆ ຊຶ່ງລວມເອົາຜົນງານການເຄື່ອນໄຫວຂອງ ກປສ ແລະ ໂຄງການຕ່າງໆທີ່ໄດຮັບທຶນຈາກ ກປສ 2 ຄັ້ງ/ປີ;
- ສ້າງວິດີໂອສັ້ນ ເພື່ອໂຄສະນາການຈັດຕັ້ງປະຕິບັດວຽກງານ ຂອງ ກປສ ແລະ ຄສລ2 ຢ່າງໜ້ອຍ 2 ວິດີໂອ;
- ປັບປຸງ ແລະ ສ້າງສື່ສິ່ງພິມຕ່າງໆເຊັ່ນ: ໂບຊົວ ຫຼື ແຜ່ນພັບ ເພື່ອເປັນການເຜີຍແຜ່ຜົນງານຂອງ ກປສ ແລະ ຂໍ້ມູນຂ່າວສານກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ 1 ຄັ້ງ/ປີ;
- ດໍາເນີນກິດຈະກໍາການໂຄສະນາເຜີຍແຜ່ກ່ຽວກັບວຽກງານການປົກປັກຮັກສາສິ່ງແວດລ້ອມຮ່ວມກັບພາກສ່ວນກ່ຽວຂ້ອງ 2 ຄັ້ງ/ປີ;
- ຈັດກອງປະຊຸມຜູ້ມີສ່ວນຮ່ວມ ເພື່ອເຜີຍແຜ່ຜົນງານ ແລະ ແລກປ່ຽນບົດຮຽນກັບ ພາກສ່ວນທີ່ກ່ຽວຂ້ອງ 1 ຄັ້ງ;
- ສ້າງແຜນດໍາເນີນງານການລະດົມທຶນ ແລະ ການສື່ສານ 2021-2025;
- ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ລະບຽບການຄຸ້ມຄອງ ແລະ ຄູ່ມືຕ່າງໆ ຜ່ານການເຜີຍແຜ່, ແຈກຢາຍ, ວາງສະແດງ ແລະ ຝຶກອົບຮົມ ຢ່າງນ້ອຍ 1 ຄັ້ງ;

### 4.7 ດ້ານການຮ່ວມມື

ສືບຕໍ່ເສີມຂະຫຍາຍການຮ່ວມມືຢ່າງມີປະສິດຕິພາບ ກັບຂະແໜງການຂອງພາກລັດ ໃນການຈັດຕັ້ງປະຕິບັດໂຄງການ ແລະ ເພີ່ມທະວີ ການຮ່ວມມືກັບອົງການຈັດຕັ້ງສາກົນ ພາຍໃນປະເທດ, ພາກພື້ນ ແລະ ສາກົນ ເພື່ອສາມາດດຶງດູດທຶນຮອນໃຫ້ແກ່ ກປສ ຢ່າງຕໍ່ເນື່ອງ. ຮັກສາສາຍສໍາພັນອັນທີ່ມີຢູ່ແລ້ວກັບ ອົງການຈັດຕັ້ງຕ່າງໆໃຫ້ຍືນຍົງເຊັ່ນ:ທະນາຄານໂລກ (WB), ທະນາຄານພັດທະນາອາຊີ (ADB), ກອງທຶນສິ່ງແວດລ້ອມໂລກ

(GEF), ກອງທຶນສີຂຽວ ດ້ານການປ່ຽນແປງດິນຟ້າອາກາດ (GCF) ແລະ ອົງການຈັດຕັ້ງອື່ນໆ ໂດຍຈະສຸມໃສ່ໜ້າວຽກລຸ່ມນີ້:

- ເປັນເຈົ້າການ ປະສານສົມທົບ ກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເອງ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອື່ນໆ ເພື່ອຊຸກຍູ້ການຈັດຕັ້ງປະຕິບັດໂຄງການທີ່ຕິດພັນກັບພາກສ່ວນດັ່ງກ່າວໃຫ້ມີປະສິດທິຜົນດີ;
- ສ້າງເປັນຄູ່ຮ່ວມງານກັບ ມະຫາວິທະຍາໄລແຫ່ງຊາດ ໃນການເກັບກຳຂໍ້ມູນເພື່ອກະກຽມໂຄງການໃໝ່;
- ສ້າງສາຍສຳພັນກັບພາກລັດ, ເອກະຊົນ,ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ. ໃນນັ້ນ ຢ່າງນ້ອຍໃຫ້ມີ ສັນຍາຮ່ວມມື/ສັນຍາສະໜອງທຶນ 2 ສະບັບ;
- ສືບສານ ແລະ ຕໍ່ຍອດ ສາຍສຳພັນ ກັບທະນາຄານໂລກ (WB) ເພື່ອຈັດຕັ້ງປະຕິບັດສັນຍາທີ່ມີຢູ່ ແລະ ກະກຽມໂຄງການໃໝ່ ເພື່ອໃຫ້ໄດ້ 1 ສັນຍາ ຫຼັງຈາກສຳເລັດການກະກຽມ;
- ສືບຕໍ່ສ້າງສາຍສຳພັນກັບທະນາຄານພັດທະນາອາຊີ (ADB), Global Environment Facility (GEF), ກອງທຶນສີຂຽວ ດ້ານການປ່ຽນແປງດິນຟ້າອາກາດ (GCF) ແລະ ອົງການຈັດຕັ້ງອື່ນໆ ເພື່ອຊອກຫາແຫຼ່ງທຶນໃໝ່.
- ເຂົ້າຮ່ວມກອງປະຊຸມແລກປ່ຽນບົດຮຽນກັບສາກົນຢ່າງນ້ອຍ 2 ຄັ້ງ ເພື່ອເສີມຂະຫຍາຍການລະດົມທຶນ.

### 4.8 ດ້ານການສະໜອງທຶນ

ໃນປີ 2021 ກປສ ຄາດວ່າຈະສາມາດລະດົມທຶນໄດ້ 12.00 ລ້ານໂດລາສະຫະລັດ (ທຶນພາຍໃນ 1.33 ລ້ານໂດລາສະຫະລັດ ແລະ ທຶນສາກົນ 10.67 ລ້ານໂດລາສະຫະລັດ).

ສຳລັບບ້ວງທຶນພາຍໃນມີທັງໝົດ 4.39 ລ້ານໂດລາສະຫະລັດ (ຄາດຄະເນລາຍຮັບຂອງ ປີ 2021 ຈຳນວນ 1.33 ລ້ານໂດລາສະຫະລັດ ແລະ ຍອດເງິນເຫຼືອໃນບັນຊີ ຂອງປີຜ່ານມາຈຳນວນ 3.06 ລ້ານໂດລາສະຫະລັດ). ໃນນີ້, ຄາດຄະເນລາຍຈ່າຍສຳລັບບ້ວງທຶນພາຍໃນ ມີຄື: (1) ສະໜອງໃຫ້ໂຄງການທີ່ກຳລັງຈັດຕັ້ງປະຕິບັດຢູ່ ຕາມ 6 ຮ່ວງທຶນ ຕະຫຼອດອາຍຸໂຄງການ ລວມມີ 1.64 ລ້ານໂດລາສະຫະລັດ; (2) ສະໜອງໃຫ້ໂຄງການໃໝ່ ຈຳນວນ 1 ລ້ານໂດລາສະຫະລັດ; (3) ສະເໜີເອົາເຂົ້າເປັນຕົ້ນທຶນເງິນຝາກ ຂອງ ກປສ ຈຳນວນ 1 ລ້ານໂດລາສະຫະລັດ; (4) ເງິນບໍລິຫານການເຄື່ອນໄຫວວຽກງານຂອງ ຫກປສ ຈຳນວນ 0.37 ລ້ານໂດລາສະຫະລັດ; (5) ງົບທີ່ບໍ່ໄດ້ຈັບສັນ 0.38 ລ້ານໂດລາສະຫະລັດ. ໂດຍອີງຕາມແຜນງົບປະມານປະຈຳປີ 2021 ທີ່ ຫກປສ ສົ່ງໃຫ້ກົມແຜນການ ແລະ ການເງິນ, ກຊສ ເພື່ອກຳນົດເຂົ້າໃນແຜນງົບປະມານຂອງ ກຊສ, ຄາດຄະເນງົບປະມານລາຍຈ່າຍປະຈຳປີ (ທຶນພາຍໃນ) ປະມານ 9.2 ຕື້ກີບ ຫຼື ເທົ່າກັບ 1 ລ້ານໂດລາສະຫະລັດ. ໃນນີ້, ງົບປະມານທີ່ຈະສະໜອງໃຫ້ໂຄງການຕ່າງໆ ມີປະມານ 6 ຕື້ກີບ ຫຼື ເທົ່າກັບ 0.65 ລ້ານໂດລາສະຫະລັດ (ໃນນີ້ລວມທັງໂຄງການທີ່ກຳລັງຈັດຕັ້ງປະຕິບັດ ແລະ ໂຄງການທີ່ຈະສະໜອງໃໝ່) ແລະ ຈຳນວນ 3.2 ຕື້ກີບ ຫຼື ເທົ່າກັບ 0.35 ລ້ານໂດລາສະຫະລັດ.

ສຳລັບບ້ວງທຶນສາກົນ, ອີງຕາມສັນຍາ ແລະ ແຜນການເຄື່ອນໄຫວຂອງໂຄງການຕ່າງໆ ຫກປສ ຈະສະໜອງທຶນໃຫ້ແກ່ບັນດາໂຄງການທີ່ນຳໃຊ້ທຶນສາກົນ ທັງໝົດ 15.08 ໂດລາສະຫະລັດ (ໃນນີ້, ຄສລ2 ໂດຍຜ່ານທະນາຄານໂລກ 5.55 ລ້ານໂດລາສະຫະລັດ, ໂຄງການ i-GFLL ທີ່ໄດ້ຮັບຈາກກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ ໂດຍຜ່ານອົງການ GIZ 6.29 ລ້ານໂດລາສະຫະລັດ ແລະ ຜ່ານອົງການ UNEP 3.04 ລ້ານໂດລາສະຫະລັດ ແລະ EPF/GCF (grant fund for TA, 2021-2022 ຈຳນວນ 0.2 ລ້ານໂດລາສະຫະລັດ).

ລາຍລະອຽດແຜນການສະໜອງທຶນ ສຳລັບບ້ວງທຶນພາຍໃນ ແລະ ສາກົນມີດັ່ງນີ້:

